# ພຣະທັມໂຢຊວຍ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |


## ໂຢຊວຍ

JOSHUA

### 1 ອິສຣາເອນມຸ່ງຫນ້າສູ່ການາອານ

God’s Commission to Joshua

1 ຫລັງຈາກໂມເຊ ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ເສັຽຊີວິດໄປແລ້ວ ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂຢຊວຍບຸດ
ນູນທີ່ເປັນຜູ້ຊ່ອຍວຽກໂມເຊວ່າ,
2 “ໂມເຊຜູ້ຮັບໃຊ້ຂອງເຮົາກໍເສັຽຊີວິດໄປແລ້ວ ສ່ວນເຈົ້າພ້ອມດ້ວຍຊາວອິສຣາເອນທຸກຄົນ ຈົ່ງຕຽມຕົວອອກໄປ
ຂ້າມແມ່ນ້ຳຈໍແດນ ແລ້ວເຂົ້າໄປໃນແຜ່ນດິນທີ່ເຮົາຈະມອບໃຫ້ພວກເຈົ້າ
3 ຕາມທີ່ເຮົາໄດ້ສັນຍາໄວ້ກັບໂມເຊວ່າ ດິນທຸກບ່ອນທີ່ພວກເຈົ້າຈະຢຽບໄປນັ້ນແຫລະ ເປັນບ່ອນທີ່ເຮົາມອບໃຫ້
4 ເຂດແດນຂອງເຈົ້າຕັ້ງແຕ່ຖິ່ນກັນດານທາງທິດໃຕ້ຈົນເຖິງພູເລບານອນທາງທິດເຫນືອ ຕັ້ງແຕ່ແມ່ນນ້ຳໃຫຍ່ເອີ
ຟຣາດທາງທິດຕາເວັນອອກພ້ອມທັງທົ່ວປະເທດຂອງຊາວຮິດຕີຈົນເຖິງທະເລເມດິເຕຣາເນທາງທິດຕາເວັນ
ຕົກ
5 ໃນຊົ່ວຊີວິດຂອງເຈົ້າ ຈະບໍ່ມີໃຜສາມາດຕໍ່ສູ້ເຈົ້າໄດ້ເຮົາຈະບໍ່ປະຖິ້ມເຈົ້າ ເພາະວ່າເຮົາໄດ້ສະຖິດຢູ່ກັບໂມເຊ
ຢ່າງໃດ ເຮົາຈະສະຖິດຢູ່ກັບເຈົ້າຢ່າງນັ້ນດ້ວຍ
6 ສະນັ້ນ ເຈົ້າຈົ່ງມີໃຈເຂັ້ມແຂງ ແລະກ້າຫານ ເພາະວ່າເຈົ້າຈະເປັນຜູ້ນຳພາຊົນຊາດເຫລົ່ານີ້ເຂົ້າໄປຮັບເອົາ
ແຜ່ນດິນທີ່ເຮົາສັນຍາວ່າຈະມອບໃຫ້ແກ່ປູ່ຍ່າຕາຍາຍຂອງພວກເຂົາ
7 ເຈົ້າຈົ່ງມີໃຈເຂັ້ມແຂງແລະກ້າຫານແທ້ ຈົ່ງທຳຕາມພຣະທັມທັງຫມົດຂອງເຮົາ ຊຶ່ງໂມເຊຜູ້ຮັບໃຊ້ຂອງເຮົາໄດ້
ສັ່ງເຈົ້າໄວ້ ຢ່າປະຖິ້ມຈັກຂໍ້ເລີຍ ເພື່ອຈະໄດ້ຮັບຜົນສຳເຣັດໃນທຸກໆບ່ອນທີ່ເຈົ້າຈະໄປ
8 ເຈົ້າຢ່າລືມພຣະທັມຂອງເຮົາຈັກເທື່ອ ເຈົ້າຕ້ອງຮຽນຮູ້ຈາກປຶ້ມພຣະທັມນັ້ນທຸກມື້ທຸກຄືນ ແລະຈົ່ງຕັ້ງໃຈປະຕິ
ບັດຕາມຖ້ອຍຄຳທີ່ຂຽນໄວ້ນັ້ນ ແລ້ວເຈົ້າຈະໄດ້ຮັບຜົນສຳເຣັດໃນທຸກວິທີທາງພ້ອມທັງມີຄວາມຈະເຣີນກ້າວ
ຫນ້າຂຶ້ນດ້ວຍ
9 ຈົ່ງຈົດຈຳເອົາຖ້ອຍຄຳທີ່ເຮົາໄດ້ສັ່ງແກ່ເຈົ້າວ່າ ໃຫ້ມີໃຈເຂັ້ມແຂງແລະກ້າຫານ ຢ່າຢ້ານ ຫລືຕົກໃຈ ເພາະວ່າ
ເຮົາຜູ້ເປັນພຣະຜູ້ເປັນເຈົ້າຂອງເຈົ້າກໍສະຖິດຢູ່ກັບເຈົ້າໃນທຸກຫົນທຸກແຫ່ງທີ່ເຈົ້າຈະໄປເຖິງ”

Preparations for the Invasion

10 ເມື່ອນັ້ນ ໂຢຊວຍໄດ້ສັ່ງກັບພວກຫົວຫນ້າວ່າ,
11 “ຈົ່ງໄປປ່າວເຕືອນໃຫ້ປະຊາຊົນຕາມສະຖານທີ່ພັກເຊົາ ເພື່ອໃຫ້ເຂົາຈັດແຈງເອົາອາຫານໃຫ້ພຽງພໍ ເພາະວ່າ
ຍັງອີກສາມວັນພວກເຈົ້າຈະພາກັນຂ້າມແມ່ນ້ຳຈໍແດນນີ້ໄປຍຶດຄອງເອົາດິນແດນທີ່ພຣະຜູ້ເປັນເຈົ້າຂອງພວກ
ເຈົ້າຊົງປະທານໃຫ້”
12 ຕໍ່ມາ ໂຢຊວຍເວົ້າກັບຊາວຣູເບນ ຊາວກາດ ແລະເຄິ່ງນຶ່ງຂອງຊາວມານັສເຊວ່າ,

13 “ຈົ່ງຈື່ຄຳທີ່ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າບອກໄວ້ວ່າ ພຣະຜູ້ເປັນເຈົ້າຂອງພວກເຈົ້າຊິງປະທານແຜ່ນດິນ
ທາງທິດຕາເວັນອອກຂອງແມ່ນໍ້າຈໍແດນນີ້ໃຫ້ພວກເຈົ້າອາສັຍຢູ່
14 ໃຫ້ລູກເມັຽ ແລະງົວຄວາຍຂອງພວກເຈົ້າພັກພາອາສັຍຢູ່ບ່ອນນີ້ເສັຽກ່ອນ ຊຶ່ງເປັນແຜ່ນດິນທີ່ໂມເຊໄດ້ມອບ
ໃຫ້ແລ້ວ ສ່ວນຜູ້ເປັນທະຫານໃຫ້ຂ້າມແມ່ນໍ້າອອກນຳໜ້າໄປຊ່ອຍພວກພີ່ນ້ອງທີ່ຍັງບໍ່ມີບ່ອນຢູ່ຕີເອົາແຜ່ນດິນ
ທີ່ພຣະຜູ້ເປັນເຈົ້າຂອງພວກເຈົ້າຈະປະທານໃຫ້ພວກເຂົາ
15 ເມື່ອພວກພີ່ນ້ອງໄດ້ແຜ່ນດິນຢູ່ແລ້ວ ພວກເຈົ້າຈົ່ງກັບຄືນມາຢູ່ໃນແຜ່ນດິນຂອງຕົນເອງຢູ່ທີ່ນີ້ ຊຶ່ງເປັນບ່ອນທີ່
ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ມອບໃຫ້ພວກເຈົ້າ”
16 ເຂົາຕອບໂຢຊວຍວ່າ, “ພວກຂ້າພະເຈົ້າທັງຫລາຍຈະທຳທຸກສິ່ງທີ່ທ່ານບອກ ແລະຈະໄປທຸກໆບ່ອນທີ່ທ່ານຈະ
ສົ່ງພວກຂ້າພະເຈົ້າໄປ
17 ພວກຂ້າພະເຈົ້າຈະເຊື່ອຟັງຄວາມຂອງທ່ານເໝືອນດັ່ງໄດ້ເຊື່ອຟັງຄວາມຂອງໂມເຊ ຂໍພຽງແຕ່ວ່າໃຫ້ພຣະຜູ້
ເປັນເຈົ້າຂອງທ່ານສະຖິດຢູ່ກັບທ່ານ ດັ່ງທີ່ພຣະອົງຊົງສະຖິດຢູ່ກັບໂມເຊ
18 ຖ້າຜູ້ໃດຂັດຂວາງ ແລະບໍ່ຍອມຟັງທີ່ທ່ານສັ່ງນັ້ນ ຈະຕ້ອງຖືກໂທດປະຫານຊີວິດ ສ່ວນທ່ານຈົ່ງມີໃຈເຂັ້ມແຂງ
ແລະກ້າຫານເທີ້ນ”

## 2 ໂຢຊວຍສົ່ງສອດແນມໄປເມືອງເຢຣີໂກ

Spies Sent to Jericho

(ຮຣ 11:31)

1 ຕໍ່ມາ ໂຢຊວຍໄດ້ສົ່ງສອດແນມສອງຄົນໄປຢ່າງລັບໆ ຈາກຄ້າຍພັກທີ່ຊິດຕີມ ເພື່ອໄປເບິ່ງປະເທດ ແລະເມືອງ
ເຢຣີໂກ ດັ່ງນັ້ນສອດແນມທັງສອງຈຶ່ງພາກັນອອກໄປ ເມື່ອຮອດເມືອງເຢຣີໂກແລ້ວ ເຂົາທັງສອງກໍເຂົ້າໄປພັກ
ເຊົາຢູ່ໃນເຮືອນຂອງຍິງໂສເພນີຄົນນຶ່ງຊື່ວ່າ ຣາຮາບ
2 ເມື່ອເຈົ້າຊີວິດເມືອງເຢຣີໂກ ໄດ້ຍິນຂ່າວວ່າໃນຕອນແລງວັນນີ້ມີຊາວອິສຣາເອນສອງຄົນໄດ້ເຂົ້າມາສອດ
ແນມເບິ່ງປະເທດຂອງຕົນ
3 ພຣະອົງກໍຈັດສົ່ງຄົນໄປຫານາງຣາຮາບແລ້ວບອກວ່າ, “ຈົ່ງມອບຊາຍສອງຄົນທີ່ພັກຢູ່ໃນເຮືອນຂອງເຈົ້ານີ້ໃຫ້
ເຮົາເສັຽ ເພາະວ່າເຂົາມາສອດແນມເບິ່ງປະເທດຂອງເຮົາ”
4 ຝ່າຍນາງຣາຮາບກໍເຊື່ອງຊາຍສອງຄົນນັ້ນໄວ້ເທິງຫລັງຄາພຽງ ໃນກອງລຳຕົ້ນປ່ານທີ່ນາງໄດ້ລຽນໄວ້ຢູ່ເທິງນັ້ນ
5 ນາງຈຶ່ງຕອບວ່າ, “ຊາຍພວກນັ້ນມາພັກຢູ່ເຮືອນຂອງຂ້ານ້ອຍແທ້ຈິງ ແຕ່ຂ້ານ້ອຍບໍ່ຮູ້ຈັກການເປັນມາຂອງ
ພວກເຂົາ
6 ດຽວນີ້ ເຂົາໄດ້ອອກໜີໄປແລ້ວຕັ້ງແຕ່ເວລາມືດຊຸ້ມ ເພື່ອໃຫ້ທັນວິດກ່ອນປະຕູເມືອງຈະອັດ ສ່ວນຂ້ານ້ອຍເອງກໍ
ບໍ່ຮູ້ຈັກວ່າເຂົາໄປທາງໃດ ຈົ່ງຟ້າວອອກໄປຕິດຕາມເຂົາໃຫ້ທັນ”
7 ດັ່ງນັ້ນ ພວກເຂົາຈຶ່ງຟ້າວອອກຕິດຕາມຈົນຮອດທ່ານແມ່ນໍ້າຈໍແດນ ເມື່ອເຂົາອອກໜວິດເມືອງແລ້ວປະຕູ
ເມືອງກໍອັດ
8 ກ່ອນຊາຍທັງສອງຍັງບໍ່ນອນ ນາງຣາຮາບກໍຂຶ້ນໄປຫາເຂົາຢູ່ເທິງຫລັງຄາພຽງ
9 ແລະເວົ້າວ່າ, “ຂ້ານ້ອຍຮູ້ວ່າພຣະຜູ້ເປັນເຈົ້າຊົງປະທານແຜ່ນດິນນີ້ໃຫ້ແກ່ພວກທ່ານ ແລະຂ້ານ້ອຍຍອມຮັບວ່າ
ພວກຂ້ານ້ອຍທຸກຄົນຢ້ານພວກທ່ານຫລາຍ ແລະຄົນທົ່ວທຸກອານາເຂດກໍເກີດຄວາມຢ້ານຕົກໃຈຕໍ່ໜ້າພວກ
ທ່ານ

10 ເພາະພວກຂ້ານ້ອຍໄດ້ຍິນຂ່າວວ່າ ພຣະຜູ້ເປັນເຈົ້າຊົງບັນດານໃຫ້ນ້ຳທະເລໄມ້ອໍ້ແຫ້ງແລ້ງຕໍ່ໜ້າພວກທ່ານ
ໃນຂະນະທີ່ພວກທ່ານເດີນທາງອອກມາຈາກປະເທດເອຢິບ ແລະພວກຂ້ານ້ອຍກໍໄດ້ຍິນຂ່າວອີກວ່າພວກທ່ານ
ໄດ້ຂ້າເຈົ້າຊີວິດຊາວອາໂມຣິດທັງສອງອົງ ຄື ຊີໂຮນ ແລະໂອກ ຢູ່ທາງທິດຕາເວັນອອກຂອງແມ່ນ້ຳຈໍແດນ
11 ຍ້ອນພວກຂ້ານ້ອຍໄດ້ຍິນເຣື່ອງຕ່າງໆນີ້ແຫລະ ທຸກຄົນຈຶ່ງເກີດມີຄວາມວຸ້ນວາຍໃຈ ແລະຢ້ານກົວຕໍ່ໜ້າພວກ
ທ່ານ ເພາະພຣະຜູ້ເປັນເຈົ້າຂອງພວກທ່ານ ແມ່ນອົງທີ່ສະຖິດຢູ່ເທິງຟ້າສວັນແລະແຜ່ນດິນໂລກ
12 ບັດນີ້ ຂໍໃຫ້ພວກທ່ານຈົ່ງສາບານຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ ເນື່ອງຈາກຄວາມດີທີ່ຂ້ານ້ອຍໄດ້ທຳມາຕໍ່
ພວກທ່ານນີ້ ຂໍໃຫ້ຄິດເຫັນຂ້ານ້ອຍແລະຄອບຄົວຍາດຕິພີ່ນ້ອງຂອງຂ້ານ້ອຍດ້ວຍ ແລະຂໍໃຫ້ສະແດງຫລັກ
ຖານກ່ຽວກັບຄຳສາບານນີ້ແກ່
ຂ້ານ້ອຍ
13 ເພື່ອຊ່ອຍພໍ່ແມ່ອ້າຍນ້ອງຕລອດທັງຄອບຄົວຂອງຂ້ານ້ອຍໃຫ້ພົ້ນຈາກຄວາມຕາຍ”
14 ດັ່ງນັ້ນ ຊາຍທັງສອງຈຶ່ງເວົ້າຕໍ່ນາງວ່າ, “ພວກຂ້າພະເຈົ້າຈະຕອບສນອງຄຸນງາມຄວາມດີ ແລະຄວາມສັດຊື່
ຂອງເຈົ້າໃນເວລາທີ່ພຣະຜູ້ເປັນເຈົ້າຊົງປະທານແຜ່ນດິນນີ້ໃຫ້ແກ່ພວກຂ້າພະເຈົ້າ”
15 ເນື່ອງຈາກວ່າເຮືອນຂອງນາງຣາຮາບ ຕິດກັບກຳແພງເມືອງ ນາງຈຶ່ງຢ່ອນເຊືອກໃຫ້ຊາຍທັງສອງລົງທາງປ່ອງ
ຢ້ຽມ
16 ແລະເວົ້າແກ່ເຂົາວ່າ, “ຈົ່ງຂຶ້ນໄປລີ້ຢູ່ເທິງພູນັ້ນສາມວັນ ຈົນພວກທີ່ຕິດຕາມນັ້ນກັບມາເສັຽກ່ອນ ເພື່ອເຂົາຈະບໍ່
ພົບພໍ້ພວກທ່ານ ຫລັງຈາກນັ້ນ ຈຶ່ງພາກັນໄປຕາມທົນທາງຂອງພວກທ່ານ”
17 ສອດແນມທັງສອງຈຶ່ງບອກນາງວ່າ, “ພວກຂ້າພະເຈົ້າຈະທຳຕາມຄຳສັນຍາທີ່ມີໄວ້ກັບເຈົ້າ
18 ຈົ່ງຟັງເທີນ ໃນເວລາທີ່ພວກຂ້າພະເຈົ້າກັບມາໂຈມຕີປະເທດນີ້ ເຈົ້າຈົ່ງເອົາເຊືອກສີແດງເຂັ້ມຜູກໄວ້ທີ່ປ່ອງ
ຢ້ຽມບ່ອນທີ່ເຈົ້າຢ່ອນພວກຂ້າພະເຈົ້າລົງນີ້ ແລະໃຫ້ພວກພໍ່ແມ່ອ້າຍນ້ອງຕລອດທັງຄອບຄົວຂອງເຈົ້າມາໂຮມ
ກັນຢູ່ເຮືອນຫລັງນີ້ຫມົດ
19 ຖ້າວ່າຜູ້ໃດອອກຈາກເຮືອນເຈົ້າໄປ ຄວາມຕາຍຈະມາເຖິງຜູ້ນັ້ນຍ້ອນຄວາມຜິດຂອງເຂົາເອງ ພວກຂ້າພະເຈົ້າ
ຈະບໍ່ຮັບຜິດຊອບ ແຕ່ວ່າຖ້າຜູ້ນຶ່ງຜູ້ໃດຢູ່ໃນເຮືອນຂອງເຈົ້າຖືກຂ້າ ຈຶ່ງແມ່ນຄວາມຜິດຂອງພວກຂ້າພະເຈົ້າ
20 ແລະຖ້າເຈົ້າເປີດເຜີຍສິ່ງທີ່ໄດ້ທຳນີ້ ພວກຂ້າພະເຈົ້າກໍຈະຕ້ອງພົ້ນຈາກຄຳສາບແຊ່ງນັ້ນ
21 ນາງຈຶ່ງຕອບວ່າ, “ຂ້ານ້ອຍຍິນຍອມທຸກຢ່າງ” ເມື່ອຊາຍສອງຄົນອອກໄປແລ້ວ ນາງກໍເອົາເຊືອກສີແດງເຂັ້ມ
ຜູກໄວ້ທີ່ປ່ອງຢ້ຽມ
22 ຫລັງຈາກນັ້ນ ຊາຍທັງສອງກໍຂຶ້ນໄປລີ້ຢູ່ເທິງພູເປັນເວລາສາມວັນ ສ່ວນພວກທີ່ອອກຕິດຕາມກໍຊອກຫາທົ່ວທຸກ
ບ່ອນແຕ່ບໍ່ພົບຈຶ່ງພາກັນກັບຄືນເມືອ
23 ເມື່ອນັ້ນ ສອດແນມທັງສອງຄົນກໍພາກັນລົງມາຈາກພູຂ້າມແມ່ນ້ຳແລ້ວມຸ່ງໜ້າໄປຫາໂຢຊວຍ ແລະເລົ່າເຫດ
ການທີ່ເກີດຂຶ້ນນັ້ນສູ່ທ່ານຟັງ
24 ເຂົາເວົ້າວ່າ, “ພວກຂ້າພະເຈົ້າແນ່ໃຈວ່າ ພຣະຜູ້ເປັນເຈົ້າຊົງປະທານແຜ່ນດິນນັ້ນໃຫ້ແກ່ພວກເຮົາ ເພາະວ່າປະ
ຊາຊົນທຸກຄົນໃນເມືອງນັ້ນພາກັນເກີດຄວາມວິຕົກວຸ້ນວາຍຍ້ອນພວກເຮົາ”

## 3 ອິສຣາເອນຂ້າມແມ່ນ້ຳຈໍແດນ

Israel Crosses the Jordan

1 ມື້ໃຫມ່ຕໍ່ມາ ໂຢຊວຍກໍຕື່ນແຕ່ເຊົ້າ ພາພວກອິສຣາເອນທຸກຄົນອອກຈາກຄ້າຍພັກທີ່ ຊິດຕີມ ມຸ່ງໜ້າສູ່ແມ່ນ້ຳ
ຈໍແດນ ເຂົາຢຸດພັກຢູ່ທີ່ນັ້ນກ່ອນຈະຂ້າມແມ່ນ້ຳໄປ
2 ຄັນເວລາລ່ວງມາໄດ້ສາມວັນແລ້ວ ພວກຫົວໜ້າກໍຍ່າງເລາະໄປມາໃນບ່ອນທີ່ຕັ້ງຄ້າຍພັກນັ້ນ

3 ແລະສັ່ງຕໍ່ປະຊາຊົນວ່າ, “ເວລາພວກເຈົ້າເຫັນປະໂຣຫິດຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຂອງພວກເຈົ້າ
ອອກໄປ ຈົ່ງອອກຕິດຕາມໂລດ
4 ເພື່ອໃຫ້ຮູ້ຈັກຫົນທາງທີ່ຈະໄປ ເພາະວ່າພວກເຈົ້າຍັງບໍ່ເຄີຍຜ່ານທາງເສັ້ນນັ້ນຈັກເທື່ອ ແຕ່ວ່າ ຢ່າຫຍັບເຂົ້າໄປ
ໃກ້ຫີບນັ້ນ ຈົ່ງຍ່າງໃຫ້ມີລະຍະໄກຈາກຫີບຄຳສັນຍາປະມານສອງພັນສອກ”
5 ແລ້ວໂຢຊວຍກໍບອກປະຊາຊົນວ່າ, “ຈົ່ງບຳເພັນຕົນໃຫ້ບໍຣິສຸດຕໍ່ພຣະຜູ້ເປັນເຈົ້າ ເພາະວ່າມື້ອື່ນພຣະອົງຈະຊົງ
ທຳການອັດສະຈັນຖ້າມກາງພວກເຈົ້າ”
6 ແລ້ວໂຢຊວຍໄດ້ບອກພວກປະໂຣຫິດຫາມຫີບຄຳສັນຍາອອກໜ້າໄປກ່ອນຄົນທັງຫລາຍ ພວກເຂົາກໍປະຕິ
ບັດຕາມ
7 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂຢຊວຍວ່າ, “ມື້ອື່ນ ເຮົາຈະບອກອິສຣາເອນທຸກຄົນໃຫ້ກຽດແກ່ເຈົ້າເປັນຜູ້ຍິ່ງ
ໃຫຍ່ ແລ້ວເຂົາຈະໄດ້ຮູ້ວ່າເຮົາໄດ້ສະຖິດຢູ່ນຳເຈົ້າເໝືອນດັ່ງໄດ້ສະຖິດຢູ່ນຳໂມເຊ
8 ດັ່ງນັ້ນ ເຈົ້າຈົ່ງສັ່ງພວກປະໂຣຫິດທີ່ຫາມຫີບຄຳສັນຍານັ້ນວ່າ ເມື່ອໄປຮອດແມ່ນ້ຳຈໍແດນແລ້ວ ໃຫ້ຢຸດຢູ່ໃນແມ່
ນ້ຳໃກ້ໆກັບຕາຝັ່ງເສັຽກ່ອນ”
9 ແລ້ວໂຢຊວຍກໍສັ່ງປະຊາຊົນວ່າ, “ຈົ່ງພາກັນຫຍັບເຂົ້າມາໃກ້ໆພີ້ ເພື່ອຟັງຄຳທີ່ພຣະຜູ້ເປັນເຈົ້າຂອງພວກເຈົ້າ
ຊົງສັ່ງໄວ້
10 ວັນນີ້ພວກເຈົ້າຈະຮູ້ຈັກວ່າ ພຣະເຈົ້າຜູ້ຊົງມີຊີວິດຢູ່ກໍຊົງສະຖິດຢູ່ໃນຖ້າມກາງພວກເຈົ້າ ເພາະພຣະອົງຈະຊົງ
ຂັບໄລ່ຊາວການາອານ ຮິດຕີ ຮີວີ ເປຣິສຊີ ກີຣ໌ກາຊີ ອາໂມຣິດ ແລະເຢບຸສ ໃຫ້ໜີອອກໄປຕໍ່ໜ້າພວກເຈົ້າ
11 ສ່ວນຫີບຄຳສັນຍາແຫ່ງພຣະຜູ້ເປັນເຈົ້າຂອງແຜ່ນດິນໂລກຈະຂ້າມໄປຂ້າງໜ້າກ່ອນພວກເຈົ້າລົງໄປໃນແມ່
ນ້ຳຈໍແດນ
12 ດັ່ງນັ້ນ ຈົ່ງຄັດເລືອກເອົາສິບສອງຄົນຈາກຕະກູນອິສຣາເອນ ແຕ່ລະຕະກູນໃຫ້ໄດ້ຜູ້ນຶ່ງ
13 ເມື່ອເວລາພວກປະໂຣຫິດທີ່ຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຍ່າງໄປຢຽບນ້ຳ ແມ່ນ້ຳຈໍແດນຈະແຍກ
ອອກຈາກກັນ ແລະນ້ຳທີ່ໄຫລມາແຕ່ທາງເໜືອຈະຢຸດໂຮມຢູ່ບ່ອນດຽວ
14 ເວລານັ້ນເປັນເວລາເກັບກ່ຽວ ນ້ຳໄດ້ຂຶ້ນເຕັມຕາຝັ່ງ ດັ່ງນັ້ນພວກປະຊາຊົນຈຶ່ງມຸ່ງໜ້າອອກຈາກຄ້າຍພັກໄປ
ຂ້າມແມ່ນ້ຳຈໍແດນ ສ່ວນປະໂຣຫິດກໍຫາມຫີບຄຳສັນຍາອອກໄປກ່ອນ
15 ພໍຮອດແມ່ນ້ຳຈໍແດນພວກປະໂຣຫິດກໍລົງຢຽບນ້ຳ
16 ທັນໃດນັ້ນ ນ້ຳກໍໂຮມເຂົ້າກັນ ແລະຢຸດໄຫລໄກຈາກພວກເຂົາທີ່ເມືອງອາດາມ ໃກ້ໆກັບເມືອງຊາເຣທານ ນ້ຳ
ນັ້ນກໍບໍ່ໄຫລລົງສູ່ທະເລຕາຍອີກ ຝ່າຍປະຊາຊົນກໍຂ້າມໄປໃກ້ເມືອງເຢຣິໂກ
17 ໃນຂນະທີ່ພວກເຂົາຂ້າມໄປຢູ່ເທິງດິນແຫ້ງນັ້ນ ພວກປະໂຣຫິດທີ່ຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ ກໍ
ຢືນຢູ່ເທິງດິນແຫ້ງກາງແມ່ນ້ຳຈໍແດນຈົນພວກປະຊາຊົນທຸກຄົນຂ້າມໄປຫວິດໝົດ

## 4 ຫີນສິບສອງກ້ອນໝາຍເຖິງຫຍັງ?

Twelve Stones Set Up at Gilgal

1 ຫລັງຈາກປະຊາຊົນຂ້າມແມ່ນ້ຳຈໍແດນໄປແລ້ວ
ພຣະຜູ້ເປັນເຈົ້າກໍຊົງກ່າວຕໍ່ໂຢຊວຍວ່າ,
2 “ຈົ່ງເລືອກເອົາສິບສອງຄົນຈາກແຕ່ລະຕະກູນອິສຣາເອນ ແລ້ວສັ່ງໃຫ້ເຂົາຍົກເອົາກ້ອນຫີນສິບສອງກ້ອນອອກ
ຈາກກາງແມ່ນ້ຳ
3 ໃນບ່ອນທີ່ພວກປະໂຣຫິດໄດ້ຢືນຢູ່ ແລະຂົນໄປວາງໄວ້ໃນບ່ອນຈະຕັ້ງທີ່ພັກຄືນນີ້”
4 ດັ່ງນັ້ນ ໂຢຊວຍຈຶ່ງເອີ້ນເອົາສິບສອງຄົນທີ່ເລືອກໄວ້ນັ້ນມາ

5 ແລະເວົ້າກັບເຂົາວ່າ, “ຈົ່ງໄປໃນແມ່ນໍ້າຈໍແດນ ທາງດ້ານໜ້າຫີບຄໍາສັນຍາຂອງພຣະຜູ້ເປັນເຈົ້າຂອງພວກເຈົ້າ
ແຕ່ລະຄົນຈົ່ງແບກເອົາຫີນກ້ອນນຶ່ງມາສໍາລັບຕະກູນຂອງຕົນ
6 ກ້ອນຫີນເຫລົ່ານັ້ນເປັນສິ່ງທີ່ເຕືອນໃຫ້ປະຊາຊົນຈື່ຈໍາວ່າ ພຣະຜູ້ເປັນເຈົ້າຊົງໄດ້ຊ່ອຍເຫລືອເຂົາຢ່າງໃດ ຖ້າວ່າ
ພາຍຂ້າງໜ້າລູກຫລານຂອງພວກເຈົ້າຈະຖາມເຖິງຄວາມໝາຍຂອງກ້ອນຫີນເຫລົ່ານັ້ນ
7 ພວກເຈົ້າຈະບອກເຂົາໄດ້ວ່າ ກ້ອນຫີນເຫລົ່ານັ້ນເປັນສິ່ງທີ່ເຕືອນໃຫ້ປະຊາຊົນຊາດອິສຣາເອນຈື່ຈໍາຕລອດໄປ
ວ່າ ແມ່ນໍ້າຈໍແດນຢຸດໄຫລເມື່ອເວລາຫາມຫີບຄໍາສັນຍາຂອງພຣະຜູ້ເປັນເຈົ້າຂ້າມແມ່ນໍ້າມາ”
8 ຕໍ່ມາພວກນັ້ນກໍທໍາຕາມຄໍາສັ່ງຂອງໂຢຊວຍ ຕາມທີ່ພຣະຜູ້ເປັນເຈົ້າໄດ້ບອກແກ່ທ່ານ ພວກເຂົາແບກເອົາກ້ອນ
ຫີນສິບສອງກ້ອນອອກຈາກກາງແມ່ນໍ້າຈໍແດນຕາມຈໍານວນຕະກູນອິສຣາເອນ ເພື່ອເອົາໄປວາງໄວ້ໃນບ່ອນທີ່
ຕັ້ງຄ້າຍພັກເຊົາ
9 ຕໍ່ມາໂຢຊວຍຕັ້ງຫີນອີກສິບສອງກ້ອນໄວ້ກາງແມ່ນໍ້າຈໍແດນ ໃນບ່ອນທີ່ພວກປະໂຣຫິດຫາມຫີບຄໍາສັນຍາ
ຢືນຢູ່ນັ້ນ ຫີນນັ້ນຍັງມີຢູ່ຈົນເຖິງເທົ່າທຸກວັນນີ້
10 ສ່ວນພວກປະໂຣຫິດກໍຢືນຢູ່ກາງແມ່ນໍ້າຈໍແດນຈົນເທົ່າຄໍາສັ່ງທີ່ພຣະຜູ້ເປັນເຈົ້າຊົງສັ່ງໄວ້ກັບໂຢຊວຍສໍາເຣັດ
ລົງຕາມທີ່ໂມເຊໄດ້ສັ່ງໄວ້
11 ປະຊາຊົນກໍຟ້າວຂ້າມໄປ ເມື່ອທຸກຄົນຂ້າມໄປໝົດແລ້ວ ພວກປະໂຣຫິດພ້ອມດ້ວຍຫີບຄໍາສັນຍາຂອງພຣະຜູ້
ເປັນເຈົ້າກໍຂຶ້ນຈາກແມ່ນໍ້າ ແລະອອກໄປກ່ອນໜ້າເຂົາ
12 ສ່ວນຊາວຄົນຣູເບນ ຄົນກາດແລະຄົນມານັສເຊເຄິ່ງເຜົ່າ ຖືອາວຸດນໍາໜ້າຄົນອິສຣາເອນຂ້າມໄປຕາມທີ່ໂມເຊ
ໄດ້ສັ່ງເຂົາໄວ້
13 ຄົນທັງໝົດນີ້ມີປະມານສີ່ໝື່ນຄົນ ຊຶ່ງຕຽມພ້ອມໃນການເລວເສິກໄດ້ຂ້າມໄປສູ່ທົ່ງຮາບພຽງໃກ້ເມືອງເຢຣິໂກ
ແລະພຣະຜູ້ເປັນເຈົ້າຊົງທອດພຣະເນດເບິ່ງເຂົາຢູ່
14 ໃນວັນນັ້ນ ພຣະຜູ້ເປັນເຈົ້າຊົງກະທໍາໃຫ້ພວກອິສຣາເອນໃຫ້ກຽດແກ່ໂຢຊວຍເປັນຜູ້ຍິ່ງໃຫຍ່ ເພື່ອເຂົາຈະ
ຢ້ານຢໍາຕລອດຊົ່ວຊີວິດຂອງທ່ານເໝືອນດັ່ງໄດ້ຢ້ານຢໍາໂມເຊ
15 ແລ້ວພຣະຜູ້ເປັນເຈົ້າຊົງບອກໂຢຊວຍວ່າ,
16 “ຈົ່ງບອກປະໂຣຫິດທີ່ຫາມຫີບຄໍາສັນຍານັ້ນຂຶ້ນມາຈາກກາງແມ່ນໍ້າຈໍແດນ”
17 ໂຢຊວຍຈຶ່ງສັ່ງປະໂຣຫິດວ່າ, “ຈົ່ງຂຶ້ນມາຈາກຈໍແດນເຖີດ”
18 ເມື່ອປະໂຣຫິດຂຶ້ນມາຮອດດິນແຫ້ງແລ້ງ ແລະແມ່ນໍ້າກໍໄຫລເຂົ້າໃສ່ກັນເຕັມຕາຝັ່ງຄືເກົ່າອີກ
19 ໃນວັນທີ່ປະຊາຊົນຂ້າມແມ່ນໍ້ານັ້ນ ເປັນວັນທີສິບຂອງເດືອນທີນຶ່ງ ແລະພວກເຂົາພາກັນຢຸດພັກທີ່ກິນການທາງ
ທິດຕາເວັນອອກຂອງເມືອງເຢຣິໂກ
20 ສ່ວນໂຢຊວຍກໍເອົາຫີນສິບສອງກ້ອນທີ່ເອົາຂຶ້ນມາຈາກແມ່ນໍ້າຈໍແດນຕັ້ງໄວ້ຢູ່ທີ່ນັ້ນ
21 ແລະທ່ານໄດ້ເວົ້າຕໍ່ພວກອິສຣາເອນວ່າ, “ໃນອະນາຄົດຂ້າງໜ້າ ຖ້າລູກຖາມພໍ່ວ່າ ຫີນນີ້ໝາຍເຖິງຫຍັງ
22 ພວກເຈົ້າຈົ່ງບອກລູກວ່າ ໝາຍເຖິງເວລາທີ່ພວກອິສຣາເອນໄດ້ຂ້າມແມ່ນໍ້າຈໍແດນເທິງດິນແຫ້ງ
23 ດ້ວຍວ່າພຣະຜູ້ເປັນເຈົ້າຂອງພວກເຈົ້າໄດ້ໃຫ້ແມ່ນໍ້າຈໍແດນແຫ້ງລົງຈົນທຸກໆຄົນຂ້າມໄປໄດ້ເໝືອນດັ່ງທີ່ພຣະ
ອົງຊົງບັນດານໃຫ້ນໍ້າທະເລໄມ້ອໍ້ແຫ້ງລົງ ເພື່ອໃຫ້ພວກເຮົາຂ້າມມານີ້
24 ຍ້ອນເຣື່ອງນີ້ທຸກໆຄົນໃນໂລກຈະຮູ້ຈັກອໍານາດຂອງພຣະຜູ້ເປັນເຈົ້າ ແລະພວກເຈົ້າຈະຢ້ານຢໍາ
ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຈົ້າຕລອດໄປ”

## 5 ການຮັບພິທີຕັດ ແລະງານສລອງ

### ປັສຄາທີ່ກີນການ

The New Generation Circumcised

1 ເມື່ອໄດ້ຍິນຂ່າວວ່າ ພຣະຜູ້ເປັນເຈົ້າຊົງໃຫ້ແມ່ນໍ້າຈໍແດນແຫ້ງລົງ ເພື່ອຊົງໂຜດໃຫ້ຄົນອິສຣາເອນຂ້າມໄປ ເຈົ້າ
ຊີວິດຊາວອາໂມຣິດທີ່ຢູ່ທາງທິດຕາເວັນຕົກຂອງແມ່ນໍ້າຈໍແດນ ແລະບັນດາເຈົ້າຊີວິດການາອານທີ່ຢູ່ໃກ້ທະເລ
ຈຶ່ງເກີດມີຄວາມຢ້ານກົວ ແລະເສັຽຂວັນຍ້ອນພວກອິສຣາເອນ
2 ໃນຄາວນັ້ນ ພຣະຜູ້ເປັນເຈົ້າຊົງບອກໂຢຊວຍວ່າ, “ໃຫ້ລົງມືທໍາມີດຫີນ ເພື່ອໃຫ້ຄົນອິສຣາເອນຮັບທີຕັດອີກ”
3 ດັ່ງນັ້ນ ໂຢຊວຍຈຶ່ງທໍາມີດຫີນ ເພື່ອໃຫ້ພວກອິສຣາເອນຮັບພິທີຕັດທີ່ພູກີເບອາດຣາອາຣາໂລທ
4 ການທີ່ທ່ານໄດ້ທໍາດັ່ງນັ້ນກໍເພາະວ່າຈໍານວນຜູ້ຊາຍທີ່ພໍເປັນທະຫານໄດ້ເວລາອອກຈາກປະເທດເອຢິບມາ
ພວກເຂົາໄດ້ຕາຍຫມົດໃນຖິ່ນກັນດານ
5 ພວກນັ້ນແມ່ນພວກທີ່ຮັບພິທີຕັດແລ້ວ ແຕ່ຜູ້ທີ່ເກີດໃນຖິ່ນກັນດານຍັງບໍ່ໄດ້ຮັບພິທີຕັດຈັກຄົນ
6 ໃນເວລາທີ່ພວກອິສຣາເອນທ່ຽວໄປມາໃນຖິ່ນກັນດານລະຫວ່າງສີ່ສິບປີນັ້ນ ພວກຜູ້ຊາຍທີ່ເຂົ້າຮົບເສິກໄດ້ຊຶ່ງ
ອອກມາຈາກປະເທດເອຢິບກໍຕາຍຫມົດແລ້ວ ເພາະເຂົາບໍ່ຍອມຟັງຄວາມພຣະຜູ້ເປັນເຈົ້າ ພຣະອົງຊົງສັນຍາ
ກັບເຂົາວ່າ “ພວກເຈົ້າຈະບໍ່ເຫັນແຜ່ນດິນອັນອຸດົມສົມບູນທີ່ເຮົາໄດ້ສັນຍານໍາປູ່ຍ່າຕາຍາຍວ່າຈະໃຫ້ແກ່ພວກ
ເຈົ້າ”
7 ສ່ວນບຸດຊາຍທັງຫລາຍຂອງເຂົາຊຶ່ງຈະເປັນຜູ້ແທນເຂົານັ້ນ ໂຢຊວຍໄດ້ທໍາພິທີຕັດໃຫ້ເພາະເຂົາຍັງບໍ່ທັນໄດ້
ຮັບມາກ່ອນໃນເວລາເດີນທາງຢູ່ຖິ່ນກັນດານ
8 ຫລັງຈາກຮັບພິທີຕັດແລ້ວ ຊົນຊາດທັງຫມົດກໍພາກັນພັກເຊົາຢູ່ຈົນບາດແຜຫາຍເຈັບ
9 ຕໍ່ມາພຣະຜູ້ເປັນເຈົ້າໄດ້ຊົງບອກໂຢຊວຍວ່າ, “ມື້ອື່ນເຮົາໄດ້ໃຫ້ພວກເຈົ້າພົ້ນຈາກຄວາມຫມິ່ນປມາດໃນການ
ເປັນທາດ ທີ່ປະເທດເອຢິບ” ດັ່ງນີ້ ບ່ອນນັ້ນເຂົາຈຶ່ງເອີ້ນວ່າ ກີນການ ເທົ່າເຖິງທຸກວັນນີ້

The Passover at Gilgal

10 ໃນເວລາທີ່ພວກອິສຣາເອນພັກເຊົາຢູ່ທີ່ກີນການຕາມທົ່ງຮາບພຽງຂອງເມືອງເຢຣີໂກ ພວກເຂົາໄດ້ສລອງປັສ
ຄາໃນຕອນຄໍ່າວັນທີສິບສີ່ຂອງເດືອນນັ້ນ
11 ຫລັງຈາກປັສຄາແລ້ວ ເຂົາໄດ້ກິນແຕ່ສິ່ງທີ່ຊາວການາອານປູກໄວ້ ຄືເຂົ້າຂົ້ວ ແລະເຂົ້າຈີ່ບໍ່ມີເຊື້ອ
12 ຕັ້ງແຕ່ວັນນັ້ນມາພວກອິສຣາເອນບໍ່ມີມານາອີກ ໃນປີນັ້ນພວກເຂົາກິນແຕ່ສິ່ງທີ່ຊາວການາອານປູກໄວ້

### ໂຢຊວຍພົບຊາຍຖືດາບ

Joshua Vision

13 ເວລາໂຢຊວຍໄປໃກ້ຈະຮອດເມືອງເຢຣີໂກ ໃນທັນໃດນັ້ນ ທ່ານໄດ້ເຫັນຊາຍຜູ້ນຶ່ງຖືດາບຢືນຢູ່ຕໍ່ຫນ້າທ່ານ ໂຢ
ຊວຍຈຶ່ງຫຍັບເຂົ້າໄປໃກ້ ແລະຖາມວ່າ, “ທ່ານເປັນທະຫານຝ່າຍເຮົາ ຫລືຝ່າຍສັດຕຣູ”
14 ຊາຍຜູ້ນັ້ນຕອບວ່າ, “ເຮົາບໍ່ເປັນທະຫານຝ່າຍໃດ ເຮົາມານີ້ໃນຖານະເປັນຜູ້ບັນຊາການກອງທັບຂອງພຣະຜູ້
ເປັນເຈົ້າ” ໂຢຊວຍຈຶ່ງຫມູບລົງຂາບໄຫວ້ ແລະທູນຖາມວ່າ, “ຂ້າພຣະອົງເປັນຜູ້ຮັບໃຊ້ຂອງພຣະອົງ ພຣະອົງ
ຢາກຈະໃຫ້ຂ້າພຣະອົງເຮັດຫຍັງ
15 ຜູ້ບັນຊາການກອງທັບຂອງພຣະຜູ້ເປັນເຈົ້າກ່າວແກ່ໂຢຊວຍວ່າ, “ຈົ່ງຖອດເກີບຂອງເຈົ້າອອກ ເພາະບ່ອນທີ່
ເຈົ້າຢືນຢູ່ນັ້ນເປັນບ່ອນສັກສິດ” ແລ້ວໂຢຊວຍກໍທໍາຕາມຄໍາສັ່ງ

## 6 ການພັງທະລາຍເມືອງເຢຣິໂກ

Jericho Taken and Destroyed

1 ຍ້ອນຊາວອິສຣາເອນໃກ້ເມືອງເຢຣິໂກ ປະຕູເມືອງກໍອັດໄວ້ຢ່າງແໜ້ນໜາ ໂດຍບໍ່ມີໃຜເຂົ້າອອກໄດ້
2 ພຣະຜູ້ເປັນເຈົ້າຈຶ່ງຊົງບອກໂຢຊວຍວ່າ, “ຈົ່ງຟັງເທີ້ນ ເຮົາຈະມອບເມືອງເຢຣິໂກ ແລະເຈົ້າຊີວິດໃນເມືອງນີ້
ພ້ອມທັງທະຫານຜູ້ກ້າຫານໄວ້ໃນກຳມືຂອງເຈົ້າ
3 ເຈົ້າພ້ອມບັນດາທະຫານຂອງເຈົ້າ ຈົ່ງພາກັນຍ່າງອ້ອມເມືອງນີ້ວັນລະເທື່ອພາຍໃນຫົກວັນ ໃຫ້ປະໂຣຫິດເຈັດ
ຄົນຖືແກອອກໄປກ່ອນຫີບຄຳສັນຍາ
4 ແລ້ວໃນວັນທີເຈັດ ພວກເຈົ້າຈົ່ງຍ່າງອ້ອມເຈັດຮອບ ໂດຍມີພວກປະໂຣຫິດເປົ່າແກນຳໜ້າ
5 ເມື່ອໄດ້ຍິນສຽງແກດັງຂຶ້ນເປັນສຽງຍາວໆທຸກຄົນຈົ່ງພາກັນຮ້ອງໂຮ່ດ້ວຍສຽງດັງ ແລ້ວກຳແພງເມືອງຈະເຈື່ອນ
ລົງ ເມື່ອນັ້ນໃຫ້ທຸກຄົນເຂົ້າໄປໃນເມືອງທັນທີ”
6 ດັ່ງນັ້ນ ໂຢຊວຍຈຶ່ງເອີ້ນພວກປະໂຣຫິດມາແລ້ວບອກວ່າ, “ຈົ່ງຫາມຫີບຄຳສັນຍາໄປ ສ່ວນປະໂຣຫິດອີກເຈັດ
ຄົນໃຫ້ຖືແກນຳໜ້າຫີບຄຳສັນຍາໄປ”
7 ແລ້ວໂຢຊວຍໄດ້ບອກປະຊາຊົນວ່າ, “ຈົ່ງເດີນອ້ອມເມືອງ ແລະໃຫ້ພວກທະຫານຍ່າງອອກໜ້າຫີບຄຳສັນຍາ
ຂອງພຣະຜູ້ເປັນເຈົ້າ”
8 ເມື່ອໂຢຊວຍສັ່ງແລ້ວ ປະໂຣຫິດເຈັດຄົນກໍເປົ່າແກຍ່າງນຳໜ້າຫີບຄຳສັນຍາຂອງພຣະຜູ້ເປັນຈົ້າ
9 ສ່ວນທະຫານກອງໜ້າກໍຍ່າງອອກໄປກ່ອນພວກປະໂຣຫິດທີ່ເປົ່າແກ ແລະພວກກອງຫລັງກໍຍ່າງຕາມຫີບຄຳ
ສັນຍາໄປ ສຽງແກດັງຢູ່ຕລອດເວລາ
10 ແຕ່ໂຢຊວຍໄດ້ບອກພວກປະຊາຊົນແລ້ວວ່າ ບໍ່ໃຫ້ຮ້ອງໂຮ່ ຫລືໃຊ້ສຽງຈົນກວ່າຈະມີຄຳສັ່ງໃໝ່
11 ດັ່ງນັ້ນ ທ່ານໄດ້ສັ່ງໃຫ້ປະໂຣຫິດຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຍ່າງອ້ອມເມືອງນຶ່ງຮອບ ແລ້ວຈຶ່ງພາ
ກັນກັບໄປຄ້າຍພັກ ເພື່ອພັກຜ່ອນໃນເວລາກາງຄືນ
12 ເຊົ້າວັນໃໝ່ມາໂຢຊວຍລຸກແຕ່ເດິກ ສ່ວນພວກປະໂຣຫິດກໍຫາມຫີບຄຳສັນຍາອອກໄປ
13 ເມື່ອພວມຍ່າງໄປນັ້ນປະໂຣຫິດເຈັດຄົນຖືເຂົາແກະເຈັດອັນເດີນອອກໜ້າຫີບຄຳສັນຍາຂອງພຣະເຈົ້າ ເປົ່າ
ເຂົາແກະເລື້ອຍໄປ ສ່ວນທະຫານກອງໜ້າກໍຍ່າງຢູ່ຂ້າງໜ້າເຂົາ ແລະກອງລະວັງຫລັງກໍຍ່າງຢູ່ຂ້າງຫລັງຫີບ
ແຫ່ງພຣະຜູ້ເປັນເຈົ້າໄປພ້ອມທັງສຽງແກດັງຢູ່ຕລອດເວລາ
14 ໃນວັນທີສອງພວກເຂົາຍ່າງອ້ອມເມືອງອີກຮອບນຶ່ງ ແລ້ວກໍຫລິບຄືນເມືອຄ້າຍພັກ ພວກເຂົາກໍພາກັນທຳດັ່ງນີ້
ຕລອດທັງຫົກວັນ
15 ສ່ວນວັນທີເຈັດເຂົາໄດ້ລຸກແຕ່ເດິກ ແລະຍ່າງອ້ອມເມືອງເຖິງເຈັດຮອບໃນວັນດຽວກັນນັ້ນ ມີແຕ່ວັນດຽວເທົ່ານີ້
ທີ່ພວກເຂົາໄດ້ຍ່າງອ້ອມເມືອງເຈັດຮອບ
16 ພໍຮອບທີເຈັດ ໃນຂນະທີ່ພວກປະໂຣຫິດກຳລັງເປົ່າແກຢູ່ ໂຢຊວຍຮ້ອງບອກແກ່ປະຊາຊົນວ່າ, “ຈົ່ງຮ້ອງໂຮ່ຂຶ້ນ
ເພາະວ່າ  ພຣະຜູ້ເປັນເຈົ້າໄດ້ຊົງປະທານເມືອງນີ້ໃຫ້ແກ່ພວກເຈົ້າແລ້ວ
17 ແຕ່ວ່າຈົ່ງທຳລາຍເມືອງ ແລະທຸກໆສິ່ງໃນເມືອງນີ້ຖິ້ມໝົດ ເພື່ອເປັນການຖວາຍແກ່ພຣະຜູ້ເປັນເຈົ້າ ເວັ້ນໄວ້
ແຕ່ນາງຣາຮາບຍິງໂສເພນີ ພ້ອມທັງທຸກຄົນທີ່ຢູ່ພາຍໃນເຮືອນຂອງນາງໃຫ້ມີຊີວິດຢູ່ໄດ້ ເພາະວ່ານາງໄດ້
ເຊື່ອງສອດແນມສອງຄົນຂອງເຮົາໄວ້
18 ແຕ່ສ່ວນທ່ານທັງຫລາຍຈົ່ງຫ່າງໄກຈາກຂອງທີ່ຕ້ອງທຳລາຍຖວາຍນັ້ນຢ້ານວ່າ ຖ້າພວກທ່ານເອົາສິ່ງເຫລົ່ານັ້ນ
ພວກທ່ານຈະນຳຄວາມເດືອດຮ້ອນ ແລະຄວາມຈິບຫາຍມາສູ່ຄ້າຍອິສຣາເອນ
19 ສ່ວນເງິນຄຳ ແລະເຄື່ອງໃຊ້ທີ່ເປັນທອງເຫລືອງ ຫລືເຫລັກ ຕ້ອງເປັນສິ່ງທີ່ຖວາຍແກ່ພຣະຜູ້ເປັນເຈົ້າ ແລະຕ້ອງ
ເກັບໄວ້ໃນທໍພຣະຄັງຂອງພຣະອົງ”

20 ແລ້ວປະໂຣຫິດກໍເປົ່າແກຂຶ້ນ ເມື່ອປະຊາຊົນໄດ້ຍິນສຽງແກ ເຂົາກໍຮ້ອງໂຮ່ດ້ວຍສຽງດັງ ແລະກຳແພງເມືອງກໍ
ເຈື່ອນລົງ ທຸກໆຄົນກໍເຂົ້າໄປໃນເມືອງ ແລະຍຶດເອົາທັນທີ
21 ເຂົາໃຊ້ດາບຂ້າທັງຊາຍຍິງ ແລະເດັກນ້ອຍ ຜູ້ເຖົ້າຕລອດທັງງົວຄວາຍ ແກະແລະລໍ
22 ແລ້ວໂຢຊວຍໄດ້ບອກຊາຍສອງຄົນຜູ້ເປັນສອດແນມວ່າ, “ໃຫ້ພວກເຈົ້າເຂົ້າໄປໃນເຮືອນຂອງຍິງໂສເພນີເພື່ອ
ນຳເອົານາງພ້ອມທັງທຸກຄົນໃນເຮືອນຂອງນາງອອກມາຕາມທີ່ໄດ້ສັນຍາໄວ້”
23 ດັ່ງນັ້ນ ຊາຍທັງສອງຈຶ່ງເຂົ້າໄປໃນເຮືອນ ພາເອົານາງຣາຮາບພ້ອມດ້ວຍພໍ່ແມ່ອ້າຍນ້ອງ ແລະພວກອື່ນໆທີ່ຢູ່
ໃນເຮືອນຂອງນາງອອກມາ ພາໄປອາໄສຢູ່ທາງນອກຄ້າຍພັກຂອງພວກອິສຣາເອນ
24 ແລ້ວພວກອິສຣາເອນກໍຈູດເຜົາເມືອງ ແລະທຸກໆສິ່ງທີ່ຢູ່ໃນເມືອງນັ້ນ ເວັ້ນໄວ້ແຕ່ເງິນຄຳແລະເຄື່ອງໃຊ້ທີ່ເປັນ
ທອງເຫລືອງ ຫລືເຫລັກທີ່ເຂົາເອົາໄວ້ໃນທໍພຣະຄັງຂອງພຣະຜູ້ເປັນເຈົ້າ
25 ຍ້ອນນາງຣາຮາບໄດ້ເຊື່ອງສອດແນມທັງສອງຄົນທີ່ໃຊ້ໄປຈອບເບິ່ງເມືອງເຢຣິໂກ ໂຢຊວຍຈຶ່ງໄດ້ຊ່ອຍຊີວິດ
ຂອງນາງພ້ອມທັງພໍ່ແມ່ອ້າຍນ້ອງ ເຊື້ອສາຍຂອງນາງຣາຮາບກໍຢູ່ກັບອິສຣາເອນຈົນເຖິງທຸກວັນນີ້
26 ຕໍ່ມາ ໂຢຊວຍໄດ້ເຕືອນຢ່າງຫນັກແຫນ້ນວ່າ, “ຖ້າຜູ້ນຶ່ງຜູ້ໃດຈະສ້າງເມືອງເຢຣິໂກນີ້ຂຶ້ນໃຫມ່ ຈົ່ງໃຫ້ຄວາມ
ສາບແຊ່ງຂອງພຣະຜູ້ເປັນເຈົ້າຕົກຖືກຜູ້ນັ້ນ “ໃຜກໍຕາມທີ່ລົງມືສ້າງເມືອງນີ້ ຈະຕ້ອງເສັຽບຸດຊາຍກົກຂອງຕົນ
ແລະຜູ້ທີ່ສ້າງຈະສ້າງປະຕູເມືອງນີ້ຈະເສັຽບຸດຊາຍຫລ້າຂອງຕົນ”
27 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງສະຖິດຢູ່ກັບໂຢຊວຍ ແລະຊື່ສຽງຂອງທ່ານໄດ້ຊ່າລືໄປທົ່ວທັງປະເທດນັ້ນ

## 7 ບາບຂອງອາຄານ

Achan's Sin

1 ແຕ່ຄົນອິສຣາເອນໄດ້ລະເມີດໃນເຣື່ອງຂອງຕ້ອງຖວາຍນັ້ນ ເພາະອາຄານບຸດກາຣ໌ມີ ຜູ້ເປັນບຸດຊັບດີ ຜູ້ເປັນ
ບຸດເຊຣາ ເຜົ່າຢູດາ ໄດ້ນຳຂອງຖວາຍບາງສ່ວນໄປເປັນຂອງຕົນ ແລະພຣະພິໂຣດຂອງພຣະຜູ້ເປັນເຈົ້າກໍພຸ່ງ
ຂຶ້ນຕໍ່ຄົນອິສຣາເອນ
2 ຝ່າຍໂຢຊວຍໃຫ້ຄົນອອກຈາກເມືອງເຢຣິໂກໄປຍັງເມືອງອາອີ ຊຶ່ງຢູ່ໃກ້ເບັດອາເວນຂ້າງທິດຕາເວັນອອກຂອງ
ເມືອງເບັດເອນບອກເຂົາວ່າ, “ຈົ່ງຂຶ້ນໄປແລະສອດແນມເບິ່ງເມືອງນັ້ນ” ຄົນເຫລົ່ານັ້ນກໍຂຶ້ນໄປ ແລະສອດແນມ
ເບິ່ງເມືອງອາອີ
3 ແລະເຂົາກັບມາຣາຍງານແກ່ໂຢຊວຍວ່າ, “ບໍ່ຕ້ອງໃຫ້ປະຊາຊົນທັງຫມົດຂຶ້ນໄປ ໃຫ້ຈັກສອງສາມພັນຄົນຂຶ້ນ
ໄປຕີເມືອງອາອີກໍພໍ ບໍ່ຕ້ອງໃຫ້ປະຊາຊົນປີນຂຶ້ນໄປທີ່ນັ້ນເພາະເຂົາມີຄົນຫນ້ອຍ”
4 ເຫດສັນນັ້ນຈຶ່ງມີປະຊາຊົນຂຶ້ນໄປທີ່ນັ້ນພຽງສາມພັນຄົນ ແຕ່ຕ້ອງແຕກຫນີຈາກຊາວເມືອງອາອີ
5 ຝ່າຍຊາວເມືອງອາອີກໍຂ້າຟັນຄົນເຫລົ່ານັ້ນຕາຍປະມານສາມສິບຫົກຄົນ ໂດຍຂັບໄລ່ຄົນເຫລົ່ານັ້ນຈາກປະຕູ
ເມືອງໄປຍັງເຊບາຣິມ ຟັນເຂົາຕາມທາງລົງ ແລະຈິດໃຈຂອງປະຊາຊົນກໍແຫລກເຫລວໄປເຫມືອນນ້ຳ
6 ຝ່າຍໂຢຊວຍກໍຈີກເສື້ອຜ້າຂອງຕົນຊົບຫນ້າລົງເຖິງດິນຫນ້າຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຈົນເຖິງເວລາ
ຄ່ຳ ທັງທ່ານກັບພວກຜູ້ໃຫຍ່ຂອງຄົນອິສຣາເອນຕ່າງກໍເອົາຝຸ່ນຂີ້ດິນໃສ່ຫົວຂອງຕົນ
7 ໂຢຊວຍກາບທູນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ດ້ວຍເຫດໃດພຣະອົງຈຶ່ງຊົງນຳຊົນຊາດນີ້ຂ້າມແມ່ນ້ຳຈໍແດນມາ
ເພື່ອຈະມອບເຮົາທັງຫລາຍໄວ້ໃນມືຂອງຄົນອາໂມຣິດໃຫ້ທຳລາຍເສັຽ ພວກຂ້າພຣະອົງມີຄວາມເສັຽດາຍທີ່ບໍ່
ພໍໃຈຢູ່ພຽງຟາກຕາເວັນອອກຂອງຈໍແດນ
8 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະທູນປະການໃດໄດ້ ເມື່ອອິສຣາເອນຫັນຫລັງຫນີສັດຕຣູເສັຽແລ້ວ

9 ເພາະວ່າຄົນການາອານກັບບັນດາຊາວເມືອງຄົງຈະໄດ້ຍິນ ແລ້ວຄົງຈະຍົກມາຕັ້ງລ້ອມພວກຂ້າພຣະອົງ ແລະ
ຕັດຊື່ ຂອງບັນດາຂ້າພຣະອົງເສັຽຈາກໂລກ ແລະພຣະອົງຈະຊົງກະທຳປະການໃດ ເພື່ອພຣະນາມອັນຍິ່ງ
ໃຫຍ່ຂອງພຣະອົງ”
10 ຝ່າຍພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂຢຊວຍວ່າ, “ຈົ່ງລຸກຂຶ້ນເຖີດ ເປັນຫຍັງເຈົ້າຈຶ່ງຫມູບຫນ້າລົງດັ່ງນີ້
11 ຄົນອິສຣາເອນໄດ້ກະທຳບາບ ເຂົາໄດ້ລະເມີດຄຳສັນຍາຊຶ່ງເຮົາໄດ້ສັ່ງເຂົາໄວ້ ເຂົາໄດ້ຍັກຍອກຂອງທີ່ຕ້ອງ
ຖວາຍ ເຂົາໄດ້ລັກ ແລະປິດບັງ ແລະໄດ້ເອົາຂອງຮວມໄວ້ກັບສິ່ງຂອງຂອງຕົນ
12 ເຫດສັນນັ້ນຄົນອິສຣາເອນຈຶ່ງຢືນຢັດຕໍ່ສູ້ສັດຕຣູຂອງຕົນບໍ່ໄດ້ ໄດ້ຫັນຫລັງຫນີສັດຕຣູ ເພາະເຂົາກາຍເປັນສິ່ງທີ່
ຕ້ອງຖືກທຳລາຍ ເຮົາຈະບໍ່ຢູ່ກັບເຈົ້າທັງຫລາຍອີກຕໍ່ໄປ ເວັ້ນແຕ່ເຈົ້າຈະທຳລາຍສິ່ງຂອງທີ່ຕ້ອງຖວາຍເຫລົ່າ
ນັ້ນເສັຽຈາກຖ້າມກາງພວກເຈົ້າ
13 ຈົ່ງລຸກຂຶ້ນຊຳຣະປະຊາຊົນໃຫ້ບໍຣິສຸດ ແລະກ່າວວ່າ “ຈົ່ງຊຳຣະຕົວເສັຽເພື່ອມື້ອື່ນ ເພາະພຣະຜູ້ເປັນເຈົ້າ ພຣະ
ເຈົ້າຂອງຄົນ ອິສຣາເອນກ່າວເຊັ່ນນີ້ວ່າ “ໂອ ອິສຣາເອນເອີຍ ມີສິ່ງຂອງທີ່ຕ້ອງຖວາຍໃນຫມູ່ພວກເຈົ້າ ເຈົ້າຈະ
ຢືນຢັດຕໍ່ສູ້ສັດຕຣູຂອງເຈົ້າບໍ່ໄດ້ຈົນກວ່າເຈົ້າຈະນຳສິ່ງຂອງທີ່ຕ້ອງຖວາຍນັ້ນອອກເສັຽຈາກຫມູ່ພວກເຈົ້າ”
14 ພໍຮຸ່ງເຊົ້າເຈົ້າທັງຫລາຍຈົ່ງເຂົ້າມາທີລະເຜົ່າ ເຜົ່າໃດທີ່ພຣະຜູ້ເປັນເຈົ້າຊົງເລືອກຈັບໄວ້ກໍຕ້ອງເຂົ້າມາທີລະຕະ
ກູນ ຕະກູນໃດທີ່ພຣະຜູ້ເປັນເຈົ້າຊົງເລືອກຈັບໄວ້ກໍເຂົ້າມາທີລະຄອບຄົວ ຄອບຄົວໃດທີ່ພຣະຜູ້ເປັນເຈົ້າຊົງ
ເລືອກຈັບໄວ້ກໍໃຫ້ເຂົ້າມາທີລະຄົນ
15 ຜູ້ໃດຖືກຈັບວ່າມີຂອງຕ້ອງຖວາຍ ກໍຕ້ອງຖືກເຜົາເສັຽດ້ວຍໄຟ ທັງຕົວເຂົາແລະສາຣະພັດທີ່ເປັນຂອງເຂົາ
ເພາະເຂົາໄດ້ລະເມີດຄຳສັນຍາຂອງພຣະຜູ້ເປັນເຈົ້າ ແລະເພາະເຂົາໄດ້ກະທຳສິ່ງທີ່ຫນ້າອາຍໃນອິສຣາເອນ”
16 ໂຢຊວຍຈຶ່ງລຸກຂຶ້ນແຕ່ເດິກ ແລະນຳຄົນອິສຣາເອນເຂົ້າມາທີລະເຜົ່າ ແລະພຣະຜູ້ເປັນເຈົ້າຊົງເລືອກເຜົ່າຢູດາ
17 ຈຶ່ງນຳຕະກູນໃນເຜົ່າຢູດາເຂົ້າມາ ແລະຕະກູນເຊຣາຖືກຊົງເລືອກ ແລ້ວຈຶ່ງນຳຕະກູນເຊຣາມາທີລະຄົນ ແລະ
ຊັບດີຖືກຊົງເລືອກ
18 ແລະນຳຄອບຄົວຂອງທ່ານເຂົ້າມາທີ່ລະຄົນ ແລະຄົນທີ່ຖືກຊົງເລືອກຄື ອາຄານບຸດກາຣ໌ມີ ຜູ້ເປັນບຸດຊັບດີ ຜູ້
ເປັນບຸດເຊຣາ ເຜົ່າຢູດາ
19 ຝ່າຍໂຢຊວຍຈຶ່ງກ່າວແກ່ອາຄານວ່າ, “ລູກເອີຍ ຈົ່ງຖວາຍສະງ່າຣາສີແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາ
ເອນ ແລະຖວາຍສັຣເສີນແດ່ພຣະອົງ ຈົ່ງບອກເຮົາມາວ່າເຈົ້າໄດ້ກະທຳສິ່ງໃດໄປ ຢ່າປິດບັງໄວ້ຈາກເຮົາເລີຍ”
20 ແລະອາຄານຕອບໂຢຊວຍວ່າ, “ເປັນຄວາມຈິງແລ້ວທີ່ຂ້າພະເຈົ້າໄດ້ກະທຳບາບຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງອິສຣາເອນ ຂ້າພະເຈົ້າໄດ້ກະທຳຜິດດັ່ງນີ້
21 ໃນຫມູ່ຂອງທີ່ຍຶດມາຂ້າພະເຈົ້າໄດ້ເຫັນເສື້ອຄຸມງາມໂຕນຶ່ງຂອງເມືອງບາບີໂລນ (ຊີນາຣ໌) ກັບເງິນສອງຮ້ອຍເຊ
ເກລ ແລະທອງຄຳແທ່ງນຶ່ງຫນັກຫ້າສິບເຊເກລ ຂ້າພະເຈົ້າກໍໂລບຢາກໄດ້ຂອງເຫລົ່ານັ້ນ ຂ້າພະເຈົ້າຈຶ່ງເອົາມາ
ເບິ່ງແມ,ຂອງເຫລົ່ານັ້ນເຊື່ອງຢູ່ໃຕ້ດິນໃນເຕັນຂອງຂ້າພະເຈົ້ານັ້ນຢູ່ຂ້າງລຸ່ມ”
22 ຝ່າຍໂຢຊວຍກໍໃຫ້ຜູ້ສົ່ງຂ່າວອອກໄປ ແລະເຂົາທັງຫລາຍກໍແລ່ນໄປຫາເຕັນ ເບິ່ງແມ, ຂອງນັ້ນຝັງຢູ່ພາຍໃນ
ເຕັນຂອງເຂົາມີເງິນຢູ່ຂ້າງລຸ່ມ
23 ເຂົາກໍເອົາອອກມາຈາກເຕັນນຳໄປໃຫ້ໂຢຊວຍ ແລະຄົນອິສຣາເອນທັງປວງ ແລ້ວເຂົາກໍວາງຂອງເຫລົ່ານັ້ນລົງ
ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
24 ໂຢຊວຍກັບບັນດາຄົນອິສຣາເອນຈຶ່ງພາອາຄານບຸດເຊຣາ ພ້ອມກັບເງິນ ເສື້ອຄຸມໂຕນັ້ນ ແລະທອງແທ່ງນັ້ນ
ທັງບຸດຊາຍຍິງຂອງເຂົາ ທັງງົວ ລໍ ແບ້ແກະ ແລະເຕັນຂອງເຂົາທຸກສິ່ງທີ່ເຂົາມີຢູ່ ແລະນຳຄົນກັບຂອງທັງຫມົດ
ຂຶ້ນໄປຍັງຫຸບເຂົາ ອາໂຄຣ໌

25 ແລະໂຢຊວຍກ່າວວ່າ, “ເປັນຫຍັງເຈົ້າຈຶ່ງນຳຄວາມເດືອດຮ້ອນມາໃຫ້ເຮົາ ພຣະຜູ້ເປັນເຈົ້າຊົງນຳຄວາມເດືອດ
ຮ້ອນມາເຖິງເຈົ້າໃນວັນນີ້” ແລະບັນດາຄົນອິສຣາເອນກໍເອົາຫີນແກວ່ງໃສ່ເຂົາໃຫ້ຕາຍ ເຜົາເຂົາທັງຫລາຍ
ດ້ວຍໄຟ ແລະແກວ່ງເຂົາດ້ວຍກ້ອນຫີນ
26 ແລ້ວເອົາຫີນຖົມກອງທັບເຂົາໄວ້ເປັນກອງໃຫຍ່ຢູ່ຈົນທຸກວັນນີ້ ແລະພຣະຜູ້ເປັນເຈົ້າກໍຊົງຫັນກັບຄືນຈາກພຣະ
ພິໂຣດອັນແຮງກ້າຂອງພຣະອົງ ເພາະສະນັ້ນຈົນເຖິງທຸກວັນນີ້ເຂົາຍັງເອີ້ນທີ່ນັ້ນວ່າຮ່ອມພູ ອາໂຄຣ໌

## 8 ການເຂົ້າຍຶດແລະການທຳລາຍເມືອງອາອີ

Ai Captured by a Stratagem and Destroyed

1 ພຣະຜູ້ເປັນເຈົ້າກ່າວກັບໂຢຊວຍວ່າ, “ຢ່າຢ້ານ ຫລືທໍ້ຖອຍເລີຍ ຈົ່ງນຳທະຫານທັງຫມົດໄປກັບເຈົ້າ ລຸກຂຶ້ນໄປ
ຍັງເມືອງອາອີເຖີດ ເຮົາໄດ້ມອບກະສັດເມືອງອາອີໄວ້ໃນມືເຈົ້າແລ້ວ ພ້ອມທັງປະຊາຊົນຂອງເຂົາ ເມືອງຂອງ
ເຂົາແລະແຜ່ນດິນຂອງເຂົາດ້ວຍຂອງເຂົາດ້ວຍ
2 ເຈົ້າຈົ່ງກະທຳແກ່ເມືອງອາອີ ແລະກະສັດຂອງເມືອງນັ້ນເຊັ່ນດຽວກັບທີ່ເຈົ້າກະທຳກັບເມືອງເຢຣິໂກ ແລະກະ
ສັດຂອງເມືອງນັ້ນ ແຕ່ສິ່ງຂອງແລະສັດທີ່ຍຶດມານັ້ນຕົກເປັນຂອງເຈົ້າໄດ້ ຈົ່ງຕຽມໂຈມຕີເມືອງທາງດ້ານຫລັງ
ໂດຍບໍ່ໃຫ້ພວກເຂົາຮູ້ຕົວ
3 ໂຢຊວຍຈຶ່ງລຸກຂຶ້ນພ້ອມກັບທະຫານໄປຍັງເມືອງອາອີ ແລະໂຢຊວຍໄດ້ຄັດເລືອກທະຫານເອກ ທະຫານສາມ
ຫມື່ນຄົນໃຫ້ຍົກໄປໃນເວລາກາງຄືນ
4 ແລະທ່ານສັ່ງເຂົາວ່າ, “ເບິ່ງແມ໋, ທ່ານຈົ່ງຊຸ່ມຢູ່ຂ້າງຫລັງເມືອງ ຢ່າໃຫ້ຫ່າງໄກຈາກເມືອງຫລາຍ ແລະໃຫ້ຕຽມ
ຕົວໄວ້ພ້ອມທຸກຄົນ
5 ສ່ວນຕົວເຮົາແລະປະຊາຊົນທັງຫມົດທີ່ຢູ່ກັບເຮົາຈະເຂົ້າໄປເຖິງຕົວເມືອງ ແລະເມື່ອເຂົາອອກມາຕໍ່ສູ້ເຮົາຢ່າງ
ຄາວກ່ອນ ເຮົາກໍຈະຖອຍຫນີຈາກເຂົາ
6 ເຂົາຈະຕາມເຮົາອອກມາ ຈົນເຮົາຈະໄດ້ລໍ້ເຂົາໃຫ້ອອກມາຫ່າງຈາກຕົວເມືອງເພາະເຂົາຈະເວົ້າວ່າ “ເຂົາທັງ
ຫລາຍກຳລັງຫນີຈາກເຮົາຢ່າງຄາວກ່ອນ” ສະນັ້ນເຮົາຈະຫນີເຂົາເລື້ອຍມາ
7 ແລ້ວທ່ານທັງຫລາຍຈົ່ງລຸກຈາກທີ່ຊຸ່ມລີ້ໂຕເຂົ້າຍຶດເມືອງນັ້ນໄວ້ ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະ
ຊົງມອບເມືອງນັ້ນໄວ້ໃນມືທ່ານແລ້ວ
8 ແລະເມື່ອທ່ານທັງຫລາຍເຂົ້າຍຶດເມືອງໄດ້ແລ້ວ ທ່ານຈົ່ງຈູດໄຟເຜົາເມືອງເສັຽ ຈົ່ງກະທຳຕາມທີ່ພຣະຜູ້ເປັນເຈົ້າ
ໄດ້ສັ່ງໄວ້ ເບິ່ງດູ ຂ້າພະເຈົ້າໄດ້ສັ່ງທ່ານໄວ້ແລ້ວ”
9 ແລ້ວໂຢຊວຍກໍໃຫ້ເຂົາໄປ ເຂົາກໍອອກໄປຍັງທີ່ຊຸ່ມຢູ່ລະຫວ່າງເບັດເອນກັບເມືອງອາອີ ທາງທິດຕາເວັນຕົກ
ຂອງເມືອງອາອີ ແຕ່ຄືນວັນນັ້ນໂຢຊວຍນອນຄ້າງຢູ່ກັບປະຊາຊົນ
10 ໂຢຊວຍຕື່ນຂຶ້ນແຕ່ເດິກກໍອອກກວດພົນ ແລ້ວຂຶ້ນໄປພ້ອມກັບພວກຜູ້ໃຫຍ່ຂອງອິສຣາເອນນຳຫນ້າພົນໄປ
ເມືອງອາອີ
11 ທະຫານທີ່ຢູ່ນຳທ່ານທຸກຄົນກໍຂຶ້ນໄປແລ້ວບຸກໃກ້ຕົວເມືອງເຂົ້າໄປ ແລະຕັ້ງຄ້າຍຢູ່ດ້ານເຫນືອຂອງເມືອງອາອີ
ມີຫ້ວຍຂັ້ນລະຫວ່າງເຂົາກັບເມືອງອາອີ
12 ແລະທ່ານຈັດຄົນປະມານຫ້າພັນຄົນ ໃຫ້ເຂົາແອບຊຸ່ມຢູ່ລະຫວ່າງເມືອງເບັດເອນກັບເມືອງອາອີທາງທິດຕາ
ເວັນຕົກຂອງຕົວເມືອງ
13 ດັ່ງນັ້ນເຂົາທັງຫລາຍກໍວາງກຳລັງຮົບໃຫ້ກອງຫລວງຢູ່ດ້ານເຫນືອຂອງເມືອງ ແລະກອງລະວັງຫລັງຢູ່ດ້ານຕາ
ເວັນຕົກຂອງເມືອງ ໃນຄືນວັນນັ້ນໂຢຊວຍນອນຢູ່ໃນຮ່ອມພູ

14 ເມື່ອກະສັດເມືອງອາອິເຫັນດັ່ງນັ້ນ ຊາວເມືອງກໍລຸກຂຶ້ນແຕ່ເດິກອອກໄປສູ້ຮົບກັບອິສຣາເອນໃນທີ່ປະທະກັນຫນ້າອາຣາບາ ທັງທ່ານແລະປະຊາຊົນທັງຫມົດຂອງທ່ານ ແຕ່ທ່ານບໍ່ຮູ້ວ່າມີກອງຊຸ່ມຄອຍຢູ່ຕໍ່ສູ້ທ່ານຂ້າງຫລັງເມືອງ

15 ໂຢຊວຍຈຶ່ງເຮັດເປັນຝ່າຍແພ້ຝີມືຂອງເຂົາແລ້ວຫນີໄປຍັງຖິ່ນກັນດານ

16 ຄົນໃນເມືອງທັງຫມົດກໍຖືກເອີ້ນໃຫ້ຕາມອອກໄປ ເມື່ອເຂົາໄລ່ຕາມໂຢຊວຍໄປນັ້ນເຂົາກໍອອກຫ່າງຈາກເມືອງໄປທຸກທີ

17 ບໍ່ມີຊາຍຈັກຄົນນຶ່ງທີ່ເຫລືອຢູ່ໃນເມືອງອາອິ ຫລືເມືອງເບັດເອນ ທີ່ບໍ່ໄດ້ອອກໄປໄລ່ຕິດຕາມອິສຣາເອນ ເຂົາປ່ອຍໃຫ້ເມືອງເປີດຢູ່ໄລ່ຕາມອິສຣາເອນໄປ

18 ແລ້ວພຣະຜູ້ເປັນເຈົ້າໄດ້ສັ່ງໂຢຊວຍວ່າ, "ຈົ່ງຍື່ນຫອກຊຶ່ງຢູ່ໃນມືຂອງເຈົ້າອອກຕົງໄປຍັງເມືອງອາອິ ເພາະເຮົາຈະມອບເມືອງນັ້ນໄວ້ໃນມືຂອງເຈົ້າ" ແລ້ວໂຢຊວຍກໍຍື່ນຫອກຊຶ່ງຢູ່ໃນມືອອກໄປຍັງເມືອງນັ້ນ

19 ທະຫານທີ່ຊຸ່ມຢູ່ກໍລຸກອອກຈາກບ່ອນລີ້ໂຕຢ່າງໄວ ພໍໂຢຊວຍຍື່ນມືຂອງທ່ານອອກ ທະຫານກໍແລ່ນຕົງເຂົ້າໄປຍັງເມືອງແລະຍຶດເມືອງໄວ້ ແລ້ວເຂົາກໍຮີບຈູດໄຟເຜົາເມືອງ

20 ເມື່ອຊາວເມືອງອາອິຫລຽວຫລັງມາເບິ່ງ ເບິ່ງແມ, ຄວັນໄຟທີ່ໄຫມ້ເມືອງພຸ່ງຂຶ້ນໄປຍັງທ້ອງຟ້າ ເຂົາກໍຫມົດກໍາລັງທີ່ຈະຫນີໄປທາງນີ້ຫລືຫນີໄປທາງນັ້ນ ເພາະວ່າປະຊາຊົນທີ່ຫນີໄປທາງຖິ່ນກັນດານຫັນກັບມາຕໍ່ສູ້ກັບຜູ້ທີ່ໄລ່ຕິດຕາມ

21 ເມື່ອໂຢຊວຍກັບບັນດາອິສຣາເອນເຫັນວ່າກອງຊຸ່ມຍຶດເມືອງໄດ້ແລ້ວ ແລະຄວັນໄຟທີ່ໄຫມ້ເມືອງພຸ່ງຂຶ້ນ ເຂົາກໍຫັນກັບຄືນມາໂຈມຕີຊາວເມືອງອາອິ

22 ຄົນອື່ນໆກໍອອກມາຈາກເມືອງສູ້ຮົບກັບເຂົາ ກະທໍາໃຫ້ເຂົາຢູ່ລະຫວ່າງກາງອິສຣາເອນ ຜູ້ຢູ່ຂ້າງນີ້ແລະຂ້າງນັ້ນ ແລະຄົນອິສຣາເອນກໍໂຈມຕີເຂົາຈົນບໍ່ມີຈັກຄົນນຶ່ງລອດຊີວິດຫລືຫນີໄປໄດ້

23 ແຕ່ກະສັດເມືອງອາອິຍັງມີຊີວິດຢູ່ ໄດ້ຖືກຈັບແລະຄຸມຕົວມາຫາໂຢຊວຍ

24 ເມື່ອອິສຣາເອນໄລ່ຂ້າຟັນຊາວເມືອງອາອິໃນທົ່ງໃນຖິ່ນກັນດານທີ່ເຂົາໄລ່ຕາມໄປນັ້ນ ແລະຄົນເຫລົ່ານັ້ນລົ້ມຕາຍຫມົດດ້ວຍດາບຈົນສຸດທ້າຍບັນດາຄົນອິສຣາເອນກໍກັບເຂົ້າເມືອງອາອິໂຈມຕີຄົນໃນເມືອງດ້ວຍຄົມດາບ

25 ຄົນທີ່ລົ້ມຕາຍທັງຫມົດວັນນັ້ນທັງຊາຍແລະຍິງຈໍານວນຫມື່ນສອງພັນຄົນ ຄືຊາວເມືອງອາອິທັງຫມົດ

26 ເພາະໂຢຊວຍບໍ່ໄດ້ຫົດມືທີ່ຖືຫອກຍື່ນຢູ່ນັ້ນ ຈົນກວ່າຈະໄດ້ເຜົາຜານຊາວເມືອງອາອິພິນາດສິ້ນ

27 ແຕ່ຄົນອິສຣາເອນໄດ້ຍຶດເອົາຝູງສັດ ແລະສິ່ງຂອງຂອງເມືອງນັ້ນມາເປັນຂອງຕົນ ຕາມພຣະທັມຂອງພຣະຜູ້ເປັນເຈົ້າ ຊຶ່ງຊົງບັນຊາໄວ້ກັບໂຢຊວຍ

28 ດັ່ງນີ້ແຫລະໂຢຊວຍຈຶ່ງຜານເມືອງອາອິເສັຽ ກະທໍາໃຫ້ເປັນກອງເມືອງຮ້າງຢູ່ເປັນນິດຈົນເຖິງທຸກວັນນີ້

29 ແລະທ່ານແຂວນກະສັດເມືອງອາອິໄວ້ທີ່ຕົ້ນໄມ້ຈົນເຖິງເວລາຄໍ່າ ເມື່ອດວງອາທິດຕົກໂຢຊວຍຈຶ່ງສັ່ງ ແລະເຂົາກໍປົດສົບລົງຈາກຕົ້ນໄມ້ນໍາໄປຖິ້ມໄວ້ທີ່ທາງເຂົ້າປະຕູເມືອງ ແລ້ວເອົາຫີນຖົມທັບໄວ້ທີ່ທາງເຂົ້າປະຕູເມືອງ ແລ້ວເອົາຫີນຖົມທັບໄວ້

ກອງໃຫຍ່ຊຶ່ງຍັງຢູ່ຈົນເຖິງທຸກວັນນີ້

**ຊຽນທັມບັນຍັດທີ່ພູເອບານ**

Joshua Renews the Covenant

(ພບຍ 27:4-5)

30 ແລ້ວໂຢຊວຍໄດ້ສ້າງແທ່ນບູຊາໃນພູເອບານຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ

31 ດັ່ງທີ່ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າສັ່ງປະຊາຊົນອິສຣາເອນ ຕາມທີ່ຈາຣຶກໄວ້ໃນຫນັງສືທັມບັນຍັດຂອງ
ໂມເຊວ່າ "ແທ່ນບູຊາທຳດ້ວຍຫີນບໍ່ໄດ້ຕົກແຕ່ງ ຊຶ່ງບໍ່ມີຜູ້ໃດໃຊ້ເຄື່ອງມືເຫລັກຖືກຕ້ອງເລີຍ" ແລ້ວເຂົາກໍຖວາຍ
ເຄື່ອງເຜົາບູຊາແດ່ ພຣະຜູ້ເປັນເຈົ້າເທິງແທ່ນນັ້ນ ແລະຖວາຍສານຕິບູຊາ
32 ໃນທີ່ນັ້ນທ່ານຂຽນທັມບັນຍັດຂອງໂມເຊເທິງຫີນຕໍ່ຫນ້າປະຊາຊົນອິສຣາເອນ ຊຶ່ງເປັນສິ່ງທີ່ໂມເຊໄດ້ຂຽນໄວ້
33 ຄົນອິສຣາເອນທັງຫມົດ ທັງຄົນຕ່າງດ້າວແລະຄົນທີ່ເກີດໃນອິສຣາເອນ ພ້ອມທັງຜູ້ໃຫຍ່ ເຈົ້າຫນ້າທີ່ແລະຜູ້ພິ
ພາກສາຢືນຢູ່ທັງສອງຂ້າງຂອງຫີບຕໍ່ຫນ້າຄົນເລວີທີ່ເປັນປະໂຣຫິດຜູ້ທີ່ຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ
ເຄິ່ງນຶ່ງຢືນຢູ່ຂ້າງຫນ້າພູເຂົາເກຣີຊິມ ອີກເຄິ່ງນຶ່ງຂ້າງພູເຂົາເອບານ ດັ່ງທີ່ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ
ໄດ້ສັ່ງໄວ້ໃນຄັ້ງແຣກໃຫ້ເຂົາທັງຫລາຍອວຍພອນແກ່ຄົນອິສຣາເອນ
34 ພາຍຫລັງທ່ານຈຶ່ງອ່ານຖ້ອຍຄຳໃນທັມບັນຍັດເປັນຄຳອວຍພອນແລະຄຳສາບແຊ່ງຕາມທີ່ມີຈາຣຶກໄວ້ໃນຫນັງ
ສືທັມບັນຍັດທຸກປະການ
35 ບໍ່ມີຄຳຊຶ່ງໂມເຊໄດ້ສັ່ງໄວ້ຈັກຄຳດຽວທີ່ໂຢຊວຍບໍ່ໄດ້ອ່ານຕໍ່ຫນ້າປະຊຸມຊົນອິສຣາເອນ ຜູ້ຍິງກັບເດັກນ້ອຍ
ແລະຄົນຕ່າງດ້າວຢູ່ໃນຫມູ່ພວກເຂົາ

## 9 ກົນອຸບາຍຂອງຊາວກິເບໂອນ

The Gibeonites Save Themselves by Trickery

1 ເມື່ອກະສັດທີ່ຢູ່ຟາກຕາເວັນຕົກຂອງແມ່ນ້ຳຈໍແດນ ຄືທີ່ຢູ່ໃນແດນພູດອຍ ແລະໃນທີ່ເນີນພູ ແລະຕາມທົ່ງຮາບ
ພຽງ ແລະຕາມຝັ່ງທະເລເມດິເຕຣາເນທາງເຫນືອຈົນເຖິງເລບານອນ ເປັນຊາວຮິດຕີ ຊາວອາໂມຣິດ ຊາວກາ
ນາອານ ຊາວເປຣິສຊີ ຊາວຮີວີ ແລະຊາວເຢບຸສໄດ້ຍິນຂ່າວນີ້
2 ຈຶ່ງພ້ອມໃຈຮ່ວມກຳລັງກັນຈະຕໍ່ສູ້ໂຢຊວຍ ແລະອິສຣາເອນ
3 ແຕ່ເມື່ອຊາວກິເບໂອນໄດ້ຍິນຂ່າວການຊຶ່ງໂຢຊວຍກະທຳແກ່ເມືອງເຢຣິໂກ ແລະເມືອງອາອີ
4 ຝ່າຍເຂົາຈຶ່ງທຳຢ່າງສລາດ ທຳເປັນທູດ ເອົາກະສອບຂາດໆບັນທຸກເທິງລໍຂອງເຂົາ ກັບຖົງຫນັງທີ່ເກົ່າຂາດ
ແລະປະໄວ້ ບັນຈຸເຫລົ້າອະງຸ່ນ
5 ສວມເກີບເກົ່າແລະປະໄວ້ ແລະສວມເສື້ອຜ້າເກົ່າ ສ່ວນສະບຽງອາຫານກໍແຫ້ງທີ່ຕົກໂມະ
6 ເຂົາເດີນທາງມາຫາໂຢຊວຍທີ່ຄ້າຍໃນເມືອງກິນການ ກ່າວແກ່ທ່ານແລະຄົນອິສຣາເອນວ່າ, "ພວກຂ້າພະເຈົ້າ
ມາຈາກປະເທດທີ່ຫ່າງໄກ ຂໍທຳຂໍ້ຕົກລົງກັບພວກຂ້າພະເຈົ້າເຖີດ"
7 ແຕ່ຄົນອິສຣາເອນກ່າວແກ່ຄົນຮີວີເຫລົ່ານັ້ນວ່າ, "ເຈົ້າອາສັຍໃນຫມູ່ພວກເຮົາ ເຮົາຈະທຳຂໍ້ຕົກລົງກັບເຈົ້າໄດ້
ຢ່າງໃດ"
8 ເຂົາກ່າວແກ່ໂຢຊວຍວ່າ, "ຂ້າພະເຈົ້າທັງຫລາຍເປັນຜູ້ຮັບໃຊ້ຂອງທ່ານ" ແລະໂຢຊວຍກ່າວແກ່ເຂົາວ່າ, "ພວກ
ເຈົ້າເປັນໃຜກັນ ແລະມາຈາກທີ່ໃດ"
9 ເຂົາຕອບທ່ານວ່າ, "ເນື່ອງດ້ວຍພຣະນາມແຫ່ງພຣະຜູ້ເປັນເຈົ້າຂອງພຣະເຈົ້າຂອງທ່ານ ຜູ້ຮັບໃຊ້ຂອງທ່ານມາ
ຈາກປະເທດທີ່ໄກຫລາຍ ເຮົາໄດ້ຊາບເຖິງກິດຕິສັບຂອງພຣະອົງແລະເຖິງບັນດາພຣະຣາຊກິຈທີ່ພຣະອົງຊົງ
ກະທຳໃນເອຢິບ
10 ແລະໄດ້ຊາບເຖິງບັນດາສິ່ງທີ່ພຣະອົງຊົງກະທຳຕໍ່ກະສັດຄົນອາໂມຣິດທັງສອງພຣະອົງຜູ້ຢູ່ທາງຟາກຕາເວັນ
ອອກຂອງແມ່ນ້ຳຈໍແດນ ຄືຊີໂຮນກະສັດເມືອງເຮສໂບນ ແລະໂອກກະສັດເມືອງບາຊານຜູ້ຢູ່ທີ່ອັສຕາໂຣທ
11 ດ້ວຍເຫດນີ້ ພວກຜູ້ໃຫຍ່ ແລະຊາວເມືອງທັງຫລາຍຂອງເມືອງຂ້າພະເຈົ້າໄດ້ກ່າວແກ່ພວກຂ້າພະເຈົ້າວ່າ "ຈົ່ງ
ເອົາສະບຽງສຳລັບເດີນທາງໄປຫາພວກເຂົາຮຽນເຂົາວ່າ "ພວກຂ້າພະເຈົ້າທັງຫລາຍເປັນຜູ້ຮັບໃຊ້ຂອງທ່ານ ຂໍ
ທຳຂໍ້ຕົກລົງກັບພວກຂ້າພະເຈົ້າເຖີດ"

12 ເຂົ້າຈີ່ຂອງພວກຂ້າພະເຈົ້ານີ້ໃນວັນທີ່ຂ້າພະເຈົ້າອອກມາຫາທ່ານ ຂ້າພະເຈົ້າເອົາອອກຈາກບ້ານຍັງຮ້ອນໆຢູ່ ເພື່ອໃຊ້ເປັນອາຫານຮັບປະທານຕາມທາງ ແຕ່ບັດນີ້ ເບິ່ງແມ, ແຫ້ງແລະເປັນໂມະຂຶ້ນແລ້ວ

13 ຖົງນີ້ເມື່ອຂ້າພະເຈົ້າເຕີມເຫລົ້າອະງຸ່ນກໍຍັງໃຫມ່ຢູ່ ແຕ່ເບິ່ງແມ, ມັນຂາດອອກ ເສື້ອຜ້າແລະເກີບຂອງຂ້າພະເຈົ້າກໍເກົ່າ ເພາະຫົນທາງໄກຫລາຍ"

14 ຝ່າຍຄົນເຫລົ່ານັ້ນກໍຮັບສະບຽງຂອງເຂົາ ແຕ່ບໍ່ໄດ້ທູນຂໍການແນະນໍາຈາກພຣະຜູ້ເປັນເຈົ້າ

15 ແລະໂຢຊວຍກໍທໍາສັນຕິພາບກັບເຂົາ ແລະນໍາຂໍ້ຕົກລົງກັບເຂົາໃຫ້ໄວ້ຊີວິດພວກເຂົາ ແລະບັນດາຜູ້ນໍາຂອງຊຸມນຸມຊົນກໍສາບານຕໍ່ເຂົາ

16 ເມື່ອໄດ້ຂໍ້ຕົກລົງກັບເຂົາລ່ວງໄດ້ມາສາມວັນ ກໍໄດ້ຍິນວ່າພວກເຫລົ່ານັ້ນເປັນຊາວເມືອງຢູ່ໃນຫມູ່ພວກຕົນ

17 ຄົນອິສຣາເອນກໍອອກໄປເຖິງເມືອງຂອງເຂົາໃນວັນທີສາມ ເມືອງຂອງເຂົານັ້ນຄືເມືອງກິເບໂອນ ເຄຟີຣາ ເບເອໂຣທ ແລະກີຣິອາດເຢອາຣີມ

18 ແຕ່ຄົນອິສຣາເອນບໍ່ໄດ້ຂ້າເຂົາ ເພາະວ່າບັນດາຜູ້ນໍາຂອງຊຸມນຸມຊົນໄດ້ສາບານຕໍ່ເຂົາໃນພຣະນາມພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນແລ້ວຊຸມນຸມຊົນກໍຈົ່ມຕໍ່ວ່າພວກຜູ້ນໍາ

19 ແຕ່ບັນດາຜູ້ນໍາໄດ້ກ່າວແກ່ຊຸມນຸມຊົນທັງປວງວ່າ, "ເຮົາໄດ້ສາບານຕໍ່ເຂົາໃນພຣະນາມພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ ເຫດສະນັ້ນເຮົາຈະແຕະຕ້ອງເຂົາບໍ່ໄດ້

20 ເຮົາຕ້ອງກະທໍາແກ່ເຂົາຢ່າງນັ້ນໂດຍໃຫ້ເຂົາມີຊີວິດຢູ່ໄດ້ ຢ້ານວ່າພຣະພິໂຣດຈະຕົກລົງເຫນືອເຮົາ ຕາມຄໍາສາບານຊຶ່ງເຮົາໄດ້ສາບານແກ່ເຂົານັ້ນ"

21 ແລະຜູ້ນໍາກໍກ່າວແກ່ເຂົາທັງຫລາຍວ່າ, "ໃຫ້ເຂົາມີຊີວິດຢູ່ເຖີດ" ເຫດສັນນັ້ນເຂົາຈຶ່ງເປັນຄົນຕັດຟືນແລະເປັນຄົນຕັກນໍ້າໃຫ້ຊຸມນຸມຊົນ ດັ່ງທີ່ຜູ້ນໍາໄດ້ບອກເຂົາໄວ້ແລ້ວ

22 ໂຢຊວຍຈຶ່ງເອີ້ນຄົນເຫລົ່ານັ້ນມາ ແລະທ່ານກ່າວແກ່ເຂົາວ່າ, "ເຫດໃດເຈົ້າທັງຫລາຍຈຶ່ງຫລອກລວງເຮົາໂດຍກ່າວວ່າ "ຂ້າພະເຈົ້າທັງຫລາຍຢູ່ຫ່າງໄກຈາກທ່ານຫລາຍ" ໃນເມື່ອເຈົ້າທັງຫລາຍຢູ່ຖ້າມກາງເຮົາ

23 ເຈົ້າທັງຫລາຍຕ້ອງຮັບຄໍາສາບແຊ່ງ ແລະພວກເຈົ້າຈະບໍ່ຂາດທີ່ຕ້ອງເປັນທາດຢູ່ ເປັນຄົນຕັດຟືນ ແລະເປັນຄົນຕັກນໍ້າສໍາລັບພຣະວິຫານຂອງພຣະຜູ້ເປັນເຈົ້າຂອງເຮົາ"

24 ເຂົາທັງຫລາຍຕອບໂຢຊວຍວ່າ, "ເພາະເຂົາໄດ້ບອກຜູ້ຮັບໃຊ້ຂອງທ່ານຢ່າງແນ່ນອນວ່າ ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ສັ່ງໂມເຊຜູ້ຮັບໃຊ້ຂອງພຣະອົງໃຫ້ມອບແຜ່ນດິນນີ້ທັງຫມົດແກ່ທ່ານ ແລະໃຫ້ທໍາລາຍຊາວແຜ່ນດິນໃຫ້ພົ້ນຫນ້າທ່ານ ເຫດສະນັ້ນຂ້າພະເຈົ້າທັງຫລາຍກໍວິຕົກຢ້ານທ່ານທັງຫລາຍຈະທໍາອັນຕະຣາຍແກ່ຊີວິດຂອງຂ້າພະເຈົ້າ ພວກຂ້າພະເຈົ້າຈຶ່ງກະທໍາຢ່າງນີ້"

25 ເບິ່ງແມ່, ບັດນີ້ຂ້າພະເຈົ້າທັງຫລາຍຢູ່ໃນກໍາມືຂອງທ່ານ ຈົ່ງກະທໍາແກ່ຂ້າພະເຈົ້າທັງຫລາຍຕາມທີ່ທ່ານເຫັນສົມຄວນເຖີດ"

26 ໂຢຊວຍຈຶ່ງກະທໍາເຊັ່ນນັ້ນ ຄືໃຫ້ເຂົາລອດຈາກມືຄົນອິສຣາເອນ ບໍ່ໃຫ້ປະຫານຊີວິດເຂົາເສັຽ

27 ໃນວັນນັ້ນໂຢຊວຍຕັ້ງເຂົາໃຫ້ເປັນຄົນຕັດຟືນ ແລະຄົນຕັກນໍ້າສໍາລັບອິສຣາເອນ ແລະສໍາລັບແທ່ນບູຊາຂອງພຣະຜູ້ເປັນເຈົ້າສືບມາຈົນເຖິງທຸກວັນນີ້ຊຶ່ງຢູ່ໃນສະຖານທີ່ຊຶ່ງພຣະອົງຊົງເລືອກ

## 10 ຊາວອາໂມຣິດເສັຽໄຊ

The Sun Stands Still

1 ອາໂດນີເຊເດກ ເຈົ້າຊີວິດກຸງເຢຣູຊາເລັມໄດ້ຍິນຂ່າວວ່າ ໂຢຊວຍຍຶດ ແລະທໍາລາຍເມືອງອາອີ ພ້ອມທັງຂ້າເຈົ້າຊີວິດໃນເມືອງນັ້ນເຫມືອນດັ່ງໄດ້ທໍາລາຍເມືອງເຢຣີໂກແລ້ວ ທັງໄດ້ຍິນວ່າຊາວກິເບໂອນກໍທໍາສັນຍາສັນຕິພາບແລະຮ່ວມມືກັບຄົນອິສຣາເອນ

2 ດ້ວຍເຫດນີ້ ປະຊາຊົນໃນກຸງເຢຣູຊາເລັມຈຶ່ງພາກັນຢ້ານຫລາຍ ເພາະເມືອງກິເບໂອນເປັນເມືອງໃຫຍ່ເທົ່າກັບ
ມະຫານະຄອນເມືອງນຶ່ງ ແລະໃຫຍ່ກວ່າເມືອງອາອີອີກ ພ້ອມທັງທະຫານກໍເປັນຄົນເກັ່ງກ້າ
3 ດັ່ງນັ້ນ ເຈົ້າຊີວິດອາໂດນີເຊເດກຈຶ່ງສົ່ງຄົນໄປບອກ ໂຮຮາມເຈົ້າຊີວິດເມືອງເຮໂບຣນ ປີຣາມ ເຈົ້າຊີວິດຢາຣ໌ມູ
ທ ຢາຟີອາ ເຈົ້າຊີວິດລາຄິສ ແລະເດບີຣ໌ ເຈົ້າຊີວິດເອກໂລນ ໂດຍບອກວ່າ
4 “ຂໍໃຫ້ມາຊ່ອຍຂ້າພະເຈົ້າຕີເອົາເມືອງກິເບໂອນແດ່ ເພາະວ່າປະຊາຊົນໃນເມືອງນີ້ໄດ້ທຳສັນຍາສັນຕິພາບກັບ
ໂຢຊວຍ ແລະພວກອິສຣາເອນແລ້ວ”
5 ຝ່າຍເຈົ້າຊີວິດຂອງພວກອາໂມຣິດທັງຫ້າອົງນີ້ ຄືເຈົ້າເມືອງກຸງເຢຣູຊາເລັມ ເຈົ້າເມືອງເຮໂບຣນ ເຈົ້າເມືອງຢາ
ຣ໌ມູທ ເຈົ້າເມືອງລາຄິສ ເຈົ້າເມືອງເອກໂລນ ໄດ້ພ້ອມພາກັນຍົກກອງທັບມາອ້ອມ ແລະເຂົ້າໂຈມຕີເມືອງກິເບ
ໂອນ
6 ໃນເວລານັ້ນ ຊາວກິເບໂອນກໍຟ້າວສົ່ງຄົນໄປຫາໂຢຊວຍຊຶ່ງໃນຄ້າຍທີ່ກິນການ ໂດຍບອກວ່າ “ຈົ່ງຟ້າວມາ
ຊ່ອຍພວກຂ້າພະເຈົ້າໃຫ້ພົ້ນການນີ້ ເພາະວ່າເຈົ້າຊີວິດຂອງພວກອາໂມຣິດທັງຫມົດ ຊຶ່ງຢູ່ເທິງພູຂອງປະເທດນີ້
ໄດ້ພາກັນຍົກກອງທັບມາຕໍ່ສູ້ພວກຂ້າພະເຈົ້າ ຂໍຢ່າປະຖິ້ມພວກຂ້າພະເຈົ້າຖ້ອນ”
7 ໂຢຊວຍພ້ອມທັງກອງທັບກໍພາກັນອອກຈາກ ກິນການ
8 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂຢຊວຍວ່າ, “ຢ່າຢ້ານເຂົາ ເພາະວ່າເຮົາໄດ້ມອບພວກເຂົາໄວ້ໃນມືຂອງເຈົ້າແລ້ວ
ບໍ່ມີຜູ້ໃດຈະສາມາດຕໍ່ສູ້ເຈົ້າໄດ້”
9 ຫລັງຈາກນັ້ນ ໂຢຊວຍກໍເຄື່ອນທັບອອກໄປຈາກກິນການ ໂດຍເດີນທາງຕລອດທັງຄືນ ແລະເຂົ້າບຸກໂຈມຕີ
ພວກເຂົາທັນທີ
10 ພຣະຜູ້ເປັນເຈົ້າກໍຊົງທຳໃຫ້ພວກເຂົາແຕກຕື່ນກະຈັດກະຈາຍຕໍ່ຫນ້າກອງທັບຂອງພວກອິສຣາເອນ ຝ່າຍພວກ
ອິສຣາເອນກໍຂ້າເຂົາເປັນຈຳນວນຫລວງຫລາຍຢູ່ທີ່ເມືອງກິເບໂອນ ແລະໄລ່ຕິດຕາມພວກທີ່ຍັງເຫລືອລົງຈາກ
ພູທີ່ເມືອງເບັດໂຮໂຣນ ແລ້ວໄລ່ຕິດຕາມເຂົາໄປຈົນເຖິງເມືອງອາເຊກາ ແລະເມືອງມັກເກດາ
11 ໃນຂນະທີ່ພວກເຂົາກຳລັງຫລົບຫນີຈາກເມືອງເບັດໂຮໂຣນ ໄປສູ່ເມືອງອາເຊກາ ພຣະຜູ້ເປັນເຈົ້າຊົງທຳໃຫ້
ຫມາກເຫັບໃຫຍ່ຈາກທ້ອງຟ້າຕົກລົງມາຖືກເຂົາຕາຍ ພວກທີ່ຕາຍຍ້ອນຫມາກເຫັບຕົກຖືກນັ້ນມີຫລາຍກວ່າ
ພວກທີ່ຕາຍຍ້ອນດາບຂອງພວກອິສຣາເອນ
12 ໃນວັນທີ່ພຣະຜູ້ເປັນເຈົ້າຊົງທຳໃຫ້ພວກອິສຣາເອນຊະນະພວກອາໂມຣິດນັ້ນ ໂຢຊວຍຂາບທູນພຣະຜູ້ເປັນ
ເຈົ້າຕໍ່ຫນ້າອິສຣາເອນວ່າ, “ດວງຕາເວັນເອີຍ ຈົ່ງຢຸດຢູ່ເມືອງກິເບໂອນ ດວງເດືອນເອີຍ ຈົ່ງຢຸດຢູ່ລະຫວ່າງ
ຮ່ອມພູອັຍຢາໂລນ”
13 ແລ້ວຕາເວັນ ແລະດວງເດືອນກໍຢຸດຢູ່ບ່ອນດັ່ງກ່າວ ຈົນເຖິງຄົນໃນຊາດນັ້ນໄດ້ຜາບແພ້ສັດຕຣູ ເຣື່ອງນີ້ບໍ່ໄດ້ບັນ
ທຶກໄວ້ໃນປຶ້ມຜູ້ຊອບທັມຢາຊາຣ໌ຫລື ແລະຕາເວັນນັ້ນໄດ້ຢຸດຢູ່ກາງທ້ອງຟ້າໂດຍບໍ່ໄດ້ຕົກຈົນຄົບນຶ່ງວັນ
14 ນັບຕັ້ງແຕ່ກ່ອນຕລອດມາເຖິງດຽວນີ້ ບໍ່ເຄີຍມີວັນນຶ່ງວັນໃດທີ່ພຣະຜູ້ເປັນເຈົ້າໄດ້ຟັງຄວາມຂອງມະນຸດດັ່ງວັນ
ນັ້ນ ເຫດວ່າພຣະອົງຊົງທຳເສິກຢູ່ນຳຝ່າຍພວກອິສຣາເອນ
15 ຫລັງຈາກນັ້ນ ໂຢຊວຍທັງກອງທັບກໍກັບຄືນສູ່ຄ້າຍທີ່ກິນການ

Five Kings Defeated

16 ເຈົ້າເມືອງທັງຫ້ານັ້ນຫນີໄປຫລົບລີ້ຢູ່ໃນຖ້ຳມັກເກດາ
17 ມີຄົນໄປບອກໂຢຊວຍວ່າ, “ມີຄົນພົບເຈົ້າເມືອງທັງຫ້າລີ້ຊ່ອນຕົວຢູ່ໃນຖ້ຳທີ່ມັກເກດາ”
18 ໂຢຊວຍຈຶ່ງກ່າວວ່າ, “ຈົ່ງກິ້ງກ້ອນຫີນໃຫຍ່ປິດປາກຖ້ຳເສັຽ ແລະວາງຍາມໃຫ້ເຝົ້າຮັກສາໄວ້

19 ແຕ່ທ່ານທັງຫລາຍຢ່າຄອຍຢູ່ເລີຍຈົ່ງຕິດຕາມສັດຕຣູຂອງທ່ານເຖີດ ຈົ່ງເຂົ້າໂຈມຕີກອງລະວັງຫລັງຢ່າໃຫ້ກັບ
ເຂົ້າໃນເມືອງຂອງເຂົາໄດ້ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ໄດ້ມອບເຂົາທັງຫລາຍໄວ້ໃນມືຂອງ
ທ່ານແລ້ວ”
20 ເມື່ອໂຢຊວຍກັບອິສຣາເອນຂ້າພວກເຫລົ່ານັ້ນເປັນຈຳນວນຫລວງຫລາຍຫມົດແລ້ວ ສ່ວນຜູ້ທີ່ເຫລືອຢູ່ກໍຫນີ
ກັບເຂົ້າໄປໃນເມືອງທີ່ມີກຳແພງລ້ອມ
21 ປະຊາຊົນທັງປວງກໍກັບມາຫາໂຢຊວຍໃນຄ້າຍທີ່ມັກເກດາ ໂດຍສວັດດີພາບທຸກຄົນ ຢູ່ໃນດິນແດນນັ້ນບໍ່ມີຜູ້
ໃດກ້າຕໍ່ຕ້ານອິສຣາເອນໄດ້
22 ແລ້ວໂຢຊວຍຈຶ່ງວ່າ, “ຈົ່ງເປີດປາກຖ້ຳຄຸມເຈົ້າເມືອງທັງຫ້ານັ້ນອອກຈາກຖ້ຳມາຫາເຮົາ”
23 ເຂົາກໍກະທຳຕາມ ຈຶ່ງຄຸມເຈົ້າເມືອງທັງຫ້າອອກຈາກຖ້ຳມາຫາທ່ານມີເຈົ້າເມືອງເຢຣູຊາເລັມ ເຈົ້າເມືອງເຮໂບ
ຣນ ເຈົ້າເມືອງຢາຣ໌ມູທ ເຈົ້າເມືອງລາຄິສ ແລະເຈົ້າເມືອງເອກໂລນ
24 ເມື່ອເຂົາພາເຈົ້າເມືອງເຫລົ່ານັ້ນມາຫາໂຢຊວຍ ໂຢຊວຍຈຶ່ງເອີ້ນບັນດາຄົນອິສຣາເອນມາ ແລະສັ່ງຫົວຫນ້າ
ຂອງທະຫານຜູ້ທີ່ອອກໄປຮົບພ້ອມກັບທ່ານວ່າ, “ຈົ່ງເຂົ້າມາໃກ້ເຖີດ ເອົາຕີນຢຽບຄໍເຈົ້າເມືອງເຫລົ່ານີ້” ແລ້ວ
ເຂົາກໍເຂົ້າມາໃກ້ ແລະເອົາຕີນຢຽບທີ່ຄໍ
25 ໂຢຊວຍກ່າວແກ່ເຂົາວ່າ, “ຢ່າຢ້ານ ຫລືທໍ້ຖອຍເລີຍ ຈົ່ງເຂັ້ມແຂງ ແລະກ້າຫານເຖີດ ເພາະວ່າພຣະຜູ້ເປັນເຈົ້າ
ຈະຊົງທຳແກ່ບັນດາສັດຕຣູຂອງທ່ານຊຶ່ງທ່ານສູ້ຮົບຢ່າງນີ້ແຫລະ”
26 ພາຍຫລັງໂຢຊວຍກໍໄດ້ປະຫານເຈົ້າເມືອງທັງຫ້າເສັຽ ແລ້ວແຂວນໄວ້ທີ່ຕົ້ນໄມ້ຫ້າຕົ້ນ ແລະແຂວນຢູ່ເທິງຕົ້ນ
ໄມ້ເຊັ່ນນັ້ນຈົນຮອດຄ່ຳ
27 ແຕ່ເມື່ອເຖິງເວລາດວງຕາເວັນຕົກ ໂຢຊວຍໄດ້ສັ່ງແລະເຂົາກໍປົດສົບຊົງຈາກຕົ້ນໄມ້ແລະຖິ້ມໄວ້ໃນຖ້ຳ ຊຶ່ງເຈົ້າ
ເມືອງເຫລົ່ານັ້ນໄດ້ຫລົບລີ້ຕົວຢູ່ ແລະເອົາຫີນໃຫຍ່ໆປິດປາກຖ້ຳໄວ້ ຊຶ່ງຍັງຢູ່ຈົນເຖິງທຸກວັນນີ້
28 ໃນວັນນັ້ນໂຢຊວຍຍຶດເມືອງມັກເກດາໄດ້ ໄດ້ປະຫານເມືອງນັ້ນເສັຽດ້ວຍຄົມດາບ ທັງເຈົ້າເມືອງຂອງເມືອງນັ້ນ
ທ່ານໄດ້ທຳລາຍເຂົາເສັຽຢ່າງສິ້ນເຊີງ ຮວມທຸກຊີວິດທີ່ຢູ່ໃນເມືອງ ບໍ່ມີເຫລືອຈັກຄົນດຽວ ແລະທ່ານໄດ້ກະທຳ
ແກ່ເຈົ້າເມືອງມັກເກດາຢ່າງທີ່ທ່ານໄດ້ກະທຳແກ່ເຈົ້າເມືອງເຢຣີໂກ
29 ແລ້ວໂຢຊວຍແລະບັນດາຄົນອິສຣາເອນກໍຍົກກອງທັບຈາກເມືອງມັກເກດາມາເຖິງລິບນາ ແລະເຂົ້າສູ້ຮົບກັບ
ເມືອງລິບນາ
30 ພຣະຜູ້ເປັນເຈົ້າໄດ້ຊົງມອບເມືອງນັ້ນ ແລະເຈົ້າເມືອງໄວ້ໃນມືຄົນອິສຣາເອນ ແລະທ່ານໄດ້ປະຫານເມືອງນັ້ນ
ດ້ວຍຄົມດາບ ແລະທຸກຄົນທີ່ຢູ່ໃນເມືອງນັ້ນ ທ່ານບໍ່ໃຫ້ເຫລືອຈັກຄົນດຽວໃນເມືອງນັ້ນ ແລະທ່ານໄດ້ກະທຳຕໍ່
ເຈົ້າເມືອງຂອງເມືອງນັ້ນຢ່າງທີ່ທ່ານໄດ້ກະທຳຕໍ່ເຈົ້າເມືອງເຢຣີໂກ
31 ໂຢຊວຍອອກຈາກເມືອງລິບນາພ້ອມກັບອິສຣາເອນທັງຫມົດໄປຍັງລາຄິສ ແລ້ວລ້ອມເມືອງໄວ້ ແລະເຂົ້າໂຈມ
ຕີເມືອງນັ້ນ
32 ພຣະຜູ້ເປັນເຈົ້າຊົງມອບເມືອງລາຄິສໄວ້ໃນມືຄົນອິສຣາເອນ ແລະທ່ານທໍໄດ້ຍຶດເມືອງນັ້ນໃນວັນທີສອງ ແລະ
ປະຫານເສັຽດ້ວຍຄົມດາບ ທຸກຄົນທີ່ຢູ່ໃນເມືອງນັ້ນ ດັ່ງທີ່ທ່ານໄດ້ກະທຳແກ່ເມືອງລິບນາ
33 ຄັ້ງນັ້ນໂຮຣາມເຈົ້າຊີວິດເກເຊີ ໄດ້ຂຶ້ນມາຊ່ອຍເມືອງລາຄິສ ແລະໂຢຊວຍໄດ້ປະຫານເຂົາ ແລະຄົນຂອງເຂົາ
ເສັຽ ຈົນບໍ່ເຫລືອໃຫ້ເຂົາຈັກຄົນດຽວ
34 ໂຢຊວຍກັບຄົນອິສຣາເອນທັງປວງໄດ້ຍົກອອກຈາກລາຄິສໄປຍັງເມືອງເອກໂລນ ໄດ້ເຂົ້າລ້ອມແລະໄດ້ໂຈມ
ຕີເມືອງນັ້ນ
35 ເຂົາກໍຕີໄດ້ໃນວັນທີ່ສອງແລະຂ້າຟັນທຸກຄົນເສັຽດ້ວຍຄົມດາບຈົນທຳລາຍເຂົາເສັຽສິ້ນໃນວັນນັ້ນ ດັ່ງທີ່ທ່ານໄດ້
ກະທຳແກ່ເມືອງລາຄິສ

36 ໂຢຊວຍກັບຄົນອິສຣາເອນທັງປວງໄດ້ຂຶ້ນຈາກເມືອງເອກໂລນໄປຍັງເມືອງເຮໂບຣນເຂົ້າໂຈມຕີເມືອງນັ້ນ
37 ຍຶດເມືອງນັ້ນແລ້ວກໍປະຫານເຈົ້າເມືອງ ແລະຊົນນະບົດຂອງເມືອງນັ້ນ ກັບທຸກຄົນທີ່ຢູ່ໃນເມືອງນັ້ນເສັຽດ້ວຍ
ຄົມດາບ ທ່ານບໍ່ໃຫ້ເຫລືອຈັກຄົນດຽວ ດັ່ງທີ່ທ່ານໄດ້ກະທຳຕໍ່ເມືອງເອກໂລນ ແລະໄດ້ທຳລາຍເມືອງນັ້ນ ແລະ
ທຸກຄົນທີ່ຢູ່ໃນເມືອງນັ້ນເສັຽສິ້ນ
38 ແລ້ວໂຢຊວຍກັບຄົນອິສຣາເອນທັງປວງກັບມາຍັງເມືອງເດບີຣ໌ ເຂົ້າໂຈມຕີເມືອງນັ້ນ
39 ທ່ານໄດ້ຍຶດເມືອງນັ້ນຮວມທັງເຈົ້າເມືອງ ແລະຊົນນະບົດຂອງເມືອງ ແລະໄດ້ໄປປະຫານເຂົາທັງຫລາຍ
ເສັຽດ້ວຍຄົມດາບ ແລະໄດ້ທຳລາຍທຸກຄົນທີ່ຢູ່ໃນເມືອງນັ້ນເສັຽຢ່າງສິ້ນເຊີງ ທ່ານບໍ່ໃຫ້ເຫລືອຈັກຄົນດຽວ ທ່ານ
ໄດ້ກະທຳແກ່ເມືອງເດບີຣ໌ ແລະແກ່ເຈົ້າເມືອງຢ່າງນັ້ນ ດັ່ງທຳແກ່ເມືອງລິບນາ ແລະແກ່ເຈົ້າເມືອງເຊັ່ນກັນ
40 ໂຢຊວຍກໍຕີແຜ່ນດິນນັ້ນໃຫ້ຝ່າຍແພ້ໄປຫມົດ ຄືແດນພູດອຍທີ່ເນເກັບ ທີ່ເນີນພູ ຕາມຕີນພູ ທັງເຈົ້າເມືອງທັງ
ຫມົດຂອງເມືອງເຫລົ່ານັ້ນດ້ວຍ ທ່ານບໍ່ໃຫ້ເຫລືອຈັກຄົນດຽວ ແຕ່ໄດ້ທຳລາຍທຸກສິ່ງທີ່ຫາຍໃຈເສັຽ ດັ່ງທີ່ພຣະຜູ້
ເປັນເຈົ້າພຣະເຈົ້າຂອງຄົນອິສຣາເອນໄດ້ຊົງສັ່ງໄວ້
41 ໂຢຊວຍໄດ້ກະທຳໃຫ້ເຂົາຝ່າຍແພ້ຕັ້ງແຕ່ເມືອງກາເດັສບາຣ໌ເນອາຈົນເຖິງເມືອງກາຊາ ແລະທົ່ວປະເທດໂກ
ເຊນຈົນເຖິງເມືອງກິເບໂອນ
42 ໂຢຊວຍກໍຍຶດຕົວເຈົ້າເມືອງເຫລົ່ານີ້ພ້ອມທັງພື້ນດິນຂອງເຂົາທັງຫມົດໃນຄາວດຽວກັນ ເພາະວ່າພຣະຜູ້ເປັນເຈົ້
າພຣະເຈົ້າຂອງຄົນອິສຣາເອນໄດ້ຊົງສູ້ຮົບເພື່ອອິສຣາເອນ
43 ແລ້ວໂຢຊວຍພ້ອມກັບບັນດາຄົນອິສຣາເອນກໍຍົກມາຍັງຄ້າຍທີ່ ກິນການ

## 11 ພັນທະມິດຂອງຢາບິນຝ່າຍແພ້

The United Kings of Northern Canaan Defeated

1 ຄັ້ງນັ້ນເມື່ອຢາບິນເຈົ້າເມືອງຮາໂຊຣ໌ໄດ້ຍິນຂ່າວນີ້ ຈຶ່ງໃຊ້ຄົນໄປຫາໂຢບັບເຈົ້າເມືອງມາໂດນ ແລະໄປຫາເຈົ້າ
ເມືອງຊິມໂຣນ ແລະເຈົ້າເມືອງອັກຊາບ
2 ແລະເຈົ້າເມືອງຊຶ່ງຢູ່ໃນແດນພູດອຍທາງພາກເຫນືອແລະທີ່ຢູ່ໃນອາຣາບາ ໃຕ້ເມືອງຄິນເນໂຣທ ແລະຕາມຕີນ
ພູ ແລະ
ໃນທີ່ສູງ ນາໂຟທໂດຣ໌ ທາງທິດຕາເວັນຕົກ
3 ແລະໄປຫາຄົນການາອານທາງທິດຕາເວັນອອກ ແລະທິດຕາເວັນຕົກ ຄົນອາໂມຣິດ ຄົນຮິດຕີ ຄົນເປຣິສຊີ
ແລະຄົນເຢບຸສໃນແດນພູດອຍ ແລະຄົນຮີວີຢູ່ເນີນພູເຮີໂມນໃນແຜ່ນດິນມິສປາ
4 ເຈົ້າເມືອງເຫລົ່ານີ້ກໍຍົກອອກມາກັບພົນໂຍທາເປັນກອງທັບທີ່ມີຄົນຢ່າງຫລວງຫລາຍ ມີຈຳນວນດັ່ງເມັດຊາຍ
ທີ່ຊາຍທະເລ ມີມ້າແລະຣົດຮົບຫລວງຫລາຍດ້ວຍ
5 ເຈົ້າເມືອງເຫລົ່ານີ້ ໄດ້ຮ່ວມກຳລັງກັນເຂົ້າ ແລະມາຕັ້ງຄ້າຍຢູ່ທີ່ລຳຫ້ວຍເມໂຣມ ເພື່ອຈະສູ້ຮົບກັບອິສຣາເອນ
6 ແລະພຣະຜູ້ເປັນເຈົ້າກ່າວແກ່ໂຢຊວຍວ່າ, “ຢ່າຢ້ານເຂົາເລີຍ ເພາະວ່າມື້ອື່ນນີ້ໃນເວລາດຽວກັນນີ້ເຮົາຈະມອບ
ເຂົາໄວ້ຫມົດຕໍ່ອິສຣາເອນໃຫ້ຖືກປະຫານ ເອັນຄະນ່ອງມ້າຂອງເຂົາໃຫ້ເຈົ້າຕັດເສັຽ ແລະຣົດຮົບຂອງເຂົາ ເຈົ້າ
ຈົ່ງເຜົາໄຟເສັຽ”
7 ຝ່າຍໂຢຊວຍກໍຍົກພົນເຂົາໂຈມຕີເຂົາທັນທີທີ່ຫ້ວຍນ້ຳເມໂຣມ
8 ພຣະຜູ້ເປັນເຈົ້າຊົງມອບເຂົາໄວ້ໃນມືອິສຣາເອນ ຜູ້ປະຫານເຂົາແລະໄລ່ຕາມເຂົາໄປຈົນເຖິງມະຫາຊີໂດນ ແ
ລະເຖິງມິສເຣໂຟທມາອິມແລະເຖິງຮ່ອມພູມິສປາດ້ານຕາເວັນອອກ ໄດ້ປະຫານເຂົາເສັຽຈົນບໍ່ມີເຫລືອຈັກຄົນ
ດຽວ
9 ໂຢຊວຍໄດ້ກະທຳແກ່ເຂົາຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ ຄືໄດ້ຕັດເອັນຄະນ່ອງມ້າແລະເຜົາຣົດຮົບເສັຽ

10 ຂນະນັ້ນໂຢຊວຍກັບມາຍຶດເມືອງຮາໂຊຣ໌ ແລະປະຫານເຈົ້າເມືອງເສັຽດ້ວຍດາບ ເພາະວ່າແຕ່ກ່ອນນີ້ຮາໂຊຣ໌
ເປັນຫົວໜ້າແຫ່ງແຜ່ນດິນເຫລົ່ານັ້ນທັງໝົດ
11 ເຂົາໄດ້ປະຫານຊາວເມືອງນັ້ນເສັຽດ້ວຍຄົມດາບ ແລະທຳລາຍເສັຽສິ້ນ ສິ່ງທີ່ຫາຍໃຈໄດ້ບໍ່ມີເຫລືອເລີຍ ແລະ
ທ່ານກໍເຜົາເມືອງຮາໂຊຣ໌ເສັຽດ້ວຍໄຟ
12 ໂຢຊວຍຍຶດບັນດາຫົວເມືອງຂອງເຈົ້າເມືອງເຫລົ່ານັ້ນ ພ້ອມກັບເຈົ້າເມືອງທັງໝົດ ແລະປະຫານເສັຽດ້ວຍຄົມ
ດາບ ທຳລາຍເຂົາສິ້ນ ດັ່ງທີ່ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ສັ່ງໄວ້
13 ແຕ່ເມືອງຕ່າງໆທີ່ຢູ່ຕາມໂຄກຕາມເນີນບໍ່ໄດ້ເຜົາ ເວັ້ນແຕ່ເມືອງຮາໂຊຣ໌ເມືອງດຽວທີ່ໂຢຊວຍໄດ້ເຜົາເສັຽ
14 ສິ່ງຂອງຕ່າງໆທີ່ຍຶດໄດ້ຈາກເມືອງນີ້ ທັງຝູງສັດ ຄົນອິສຣາເອນໄດ້ຍຶດເປັນຂອງຕົນ ແຕ່ເຂົາໄດ້ປະຫານມະນຸດ
ທຸກຄົນເສັຽດ້ວຍຄົມດາບຈົນທຳລາຍເສັຽສິ້ນ ສິ່ງໃດທີ່ຫາຍໃຈໄດ້ເຂົາບໍ່ໃຫ້ເຫລືອຢູ່ເລີຍ
15 ພຣະຜູ້ເປັນເຈົ້າຊົງສັ່ງໂມເຊຜູ້ຮັບໃຊ້ຂອງພຣະອົງຢ່າງໃດ ໂມເຊກໍສັ່ງໂຢຊວຍຢ່າງນັ້ນ ແລະໂຢຊວຍກໍກະທຳ
ຕາມ ທ່ານບໍ່ໄດ້ເວັ້ນທີ່ຈະທຳທຸກຢ່າງຊຶ່ງພຣະຜູ້ເປັນເຈົ້າຊົງສັ່ງໂມເຊໄວ້

**ເຂດແດນທີ່ໂຢຊວຍຍຶດໄດ້**

Summary of Joshua's Conquests

16 ໂຢຊວຍຍຶດແຜ່ນດິນນັ້ນທັງສິ້ນຄືເຂດພູດອຍ ແລະເນເກັບທັງໝົດ ແລະແຜ່ນດິນໂກເຊນທັງໝົດ ແລະ
ຕາມຕີນພູອາຣາບາ ແລະພູດອຍຂອງອິສຣາເອນ ແລະທີ່ຕີນພູຂອງມັນ
17 ຕັ້ງແຕ່ພູຮາລັກທີ່ສູງເລື່ອຍຂຶ້ນໄປເຖິງເຊອີຣ໌ ໄກໄປຈົນເຖິງບາອັນກາດໃນຫຸບເຂົາເລບານອນ ເນີນພູເຮີໂມນ
ທ່ານໄດ້ຈັບບັນດາເຈົ້າເມືອງແຫ່ງເມືອງເຫລົ່ານັ້ນມາປະຫານຊີວິດເສັຽ
18 ໂຢຊວຍທຳເສິກສົງຄາມກັບເຈົ້າເມືອງເຫລົ່ານີ້ຢູ່ເປັນເວລານານ
19 ບໍ່ມີຈັກເມືອງນຶ່ງກະທຳສັນຕິພາບກັບອິສຣາເອນ ນອກຈາກຄົນຮີວີ ຊຶ່ງເປັນຊາວເມືອງກິເບໂອນ ເຂົາຕ້ອງທຳ
ເສິກສົງຄາມຕົນມາທັງນັ້ນ
20 ເພາະເປັນມາຈາກພຣະຜູ້ເປັນເຈົ້າ ທີ່ຊົງໃຫ້ເຂົາມີໃຈແຂງກະດ້າງເຂົ້າຕໍ່ສູ້ທຳສົງຄາມກັບອິສຣາເອນ ເພື່ອເຂົາ
ຈະໄດ້ຖືກທຳລາຍເສັຽສິ້ນ ແລະບໍ່ໄດ້ຮັບຄວາມກະຣຸນາ ແຕ່ຕ້ອງຖືກທຳລາຍລ້າງເສັຽສິ້ນ ດັ່ງທີ່ພຣະຜູ້ເປັນເຈົ້າ
ສັ່ງໄວ້ກັບໂມເຊ
21 ຄາວນັ້ນໂຢຊວຍໄດ້ມາທຳລາຍຄົນອານາກິມຈາກພູດອຍ ຈາກເຮໂບຣນ ຈາກເດບີຣ໌ ຈາກອານາບ ແລະຈາກ
ທົ່ວແດນພູດອຍຢູດາ ແລະຈາກທົ່ວແດນພູດອຍອິສຣາເອນ ໂຢຊວຍໄດ້ທຳລາຍຄົນເຫລົ່ານີ້ເສັຽສິ້ນພ້ອມທັງ
ເມືອງດ້ວຍ
22 ບໍ່ມີຄົນອານາກິມເຫລືອຢູ່ໃນແຜ່ນດິນຂອງປະຊາຊົນອິສຣາເອນ ເວັ້ນແຕ່ໃນກາຊາ ກາດ ແລະອັສໂດດ
23 ດັ່ງນັ້ນແຫລະ ໂຢຊວຍໄດ້ຍຶດແຜ່ນດິນທັງສິ້ນຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ກັບໂມເຊ ແລະໂຢຊວຍໃຫ້ເປັນ
ມໍຣະດົກແກ່ຄົນອິສຣາເອນຕາມສ່ວນແບ່ງຂອງເຜົ່າ ແລະແຜ່ນດິນນັ້ນກໍສງົບຈາກການເສິກສົງຄາມ

## 12 ບັນດາກະສັດທີ່ຝ່າຍແພ້ໂມເຊ

The Kings Conquered by Moses

(ຈຊບ 21:21-35)

1 ຕໍ່ໄປນີ້ເປັນກະສັດຊຶ່ງປະຊາຊົນອິສຣາເອນໄດ້ກະທຳໃຫ້ແພ້ໄປ ແລະໄດ້ຍຶດຄອງແຜ່ນດິນຟາກແມ່ນ້ຳຈໍແດນ
ຂ້າງດວງອາທິດຂຶ້ນ ຈາກທີ່ລຸ່ມອາຣ໌ໂນນເຖິງພູເຮີໂມນ ມີອາຣາບາຢູ່ດ້ານຕາເວັນອອກທັງໝົດ
2 ຄືຊີໂຮນກະສັດຄົນອາໂມຣິດຜູ້ຢູ່ທີ່ເຮສໂບນ ແລະປົກຄອງຈາກອາໂຣເອີ ຊຶ່ງຢູ່ໃນຂ້າງລຸ່ມແມ່ນ້ຳອາຣ໌ໂນນ
ແລະຈາກກາງທີ່ລຸ່ມໄກໄປເຖິງແມ່ນ້ຳຢັບໂບກ ເຂດແດນຄົນອັມໂມນ ຄືເຄິ່ງນຶ່ງຂອງກີເລອາດ

3 ແລະແຖບອາຣາບາເຖິງທະເລຄິນເນໂຣທຂ້າງຕາເວັນອອກ ແລະໄປຍັງເບັດເຢຊີໂມທ ໄປເຖິງທະເລໃນອາຣາ
ບາ ຄືທະເລເຄັມດ້ານໃຕ້ມາຈົນເຖິງເນີນເຂົາປີສກາ
4 ເຂດແດນຂອງໂອກກະສັດເມືອງບາຊານ ເປັນຄົນເຊື້ອສາຍເຣຟາອິມທີ່ເຫລືອຢູ່ທີ່ອັສຕາໂຣທ ແລະເອັດເຣອີ
5 ແລະປົກຄອງທີ່ພູເຮີໂມນ ແລະຊາເລກາ ແລະທົ່ວບາຊານ ເຖິງເຂດແດນຄົນເກຊູຣ໌ ແລະຄົນມາອາກາ ແລະ
ປົກຄອງເຄິ່ງນຶ່ງຂອງແດນກີເລອາດ ເຖິງເຂດແດນຂອງຊີໂຮນ ກະສັດເມືອງເຮສໂບນ
6 ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ແລະຄົນອິສຣາເອນໄດ້ກະທຳໃຫ້ເຂົາຜ່າຍແພ້ໄປ ແລະໂມເຊຜູ້ຮັບໃຊ້
ຂອງພຣະຜູ້ເປັນເຈົ້າໄດ້ມອບແຜ່ນດິນນີ້ໃຫ້ແກ່ຄົນຣູເບນ ຄົນກາດແລະຄົນເຄິ່ງເຜົ່າມານັສເຊ

**ບັນດາເຈົ້າເມືອງທີ່ຜ່າຍແພ້ໂຢຊວຍ**

The Kings Conquered by Joshua

7 ຕໍ່ໄປນີ້ເປັນເຈົ້າເມືອງຊຶ່ງໂຢຊວຍກັບຄົນອິສຣາເອນໄດ້ທຳໃຫ້ຜ່າຍແພ້ຢູ່ຟາກແມ່ນໍ້າຈໍແດນຂ້າງຕາເວັນຕົກ
ຕັ້ງແຕ່ບາອັນກາດໃນຮ່ອມພູເລບານອນ ເຖິງພູຮາລັກ ທີ່ສູງເລື່ອຍຂຶ້ນໄປເຖິງເຊອີຣ໌ (ແລະໂຢຊວຍມອບແຜ່ນ
ດິນຕອນນີ້ໃຫ້ແກ່ເຜົ່າຄົນອິສຣາເອນໃຫ້ຖືເປັນກຳມະສິດຕາມສ່ວນແບ່ງຂອງເຂົາ
8 ຄືທີ່ດິນໃນພູດອຍ ໃນເຂດຕີນພູໃນອາຣາບາ ໃນທີ່ເນີນພູ ໃນຖິ່ນກັນດານ ແລະໃນເນເກັບ ເປັນແຜ່ນດິນຂອງ
ຄົນຮິດຕີ ຄົນອາໂມຣິດ ຄົນການາອານ ຄົນເປຣີສຊີ ຄົນຮີວີ ແລະຄົນເຢບຸສ)
9 ຄືເຈົ້າເມືອງເຢຣີໂກ ເຈົ້າເມືອງອາອີທີ່ຢູ່ຂ້າງເບັດເອນ
10 ເຈົ້າເມືອງເຢຣູຊາເລັມ ເຈົ້າເມືອງເຮໂບຣນ
11 ເຈົ້າເມືອງຢາຣ໌ມູທ ເຈົ້າເມືອງລາຄິສ
12 ເຈົ້າເມືອງເອກໂລນ ເຈົ້າເມືອງເກເຊີ
13 ເຈົ້າເມືອງເດບີຣ໌ ເຈົ້າເມືອງເກເດີ
14 ເຈົ້າເມືອງໂຮຣ໌ມາ ເຈົ້າເມືອງອາຣາດ
15 ເຈົ້າເມືອງລິບນາ ເຈົ້າເມືອງອາດູນລາມ
16 ເຈົ້າເມືອງມັກເກດາ ເຈົ້າເມືອງເບັດເອນ
17 ເຈົ້າເມືອງຕັປປູອາ ເຈົ້າເມືອງເຮເຟີ
18 ເຈົ້າເມືອງອາເຟກ ເຈົ້າເມືອງລາຊາໂຣນ
19 ເຈົ້າເມືອງມາໂດນ ເຈົ້າເມືອງຮາໂຊຣ໌
20 ເຈົ້າເມືອງຊິມໂຣນເມໂຣນ ເຈົ້າເມືອງອັກຊາບ
21 ເຈົ້າເມືອງຕາອານັກ ເຈົ້າເມືອງເມກິດໂດ
22 ເຈົ້າເມືອງເກເດັສ ເຈົ້າເມືອງໂຢກເນອາມ ໃນກາຣ໌ເມນ
23 ເຈົ້າເມືອງໂດຣ໌ ໃນນາຟັທໂດຣ໌ ເຈົ້າເມືອງກົວອິມ ໃນຄາລີເລ
24 ເຈົ້າເມືອງຕີຣ໌ຊາ ຮວມທັງຫມົດເປັນສາມສິບເອັດເຈົ້າເມືອງດ້ວຍກັນ

## 13 ແຜ່ນດິນສ່ວນທີ່ຈະຕ້ອງຍຶດຄອງ

The Parts of Canaan Still Unconquered

1 ເມື່ອໂຢຊວຍເຖົ້າແກ່ມີອາຍຸຫລາຍແລ້ວ ພຣະຜູ້ເປັນເຈົ້າກ່າວກັບທ່ານວ່າ, “ເຈົ້າຊະຣາລົງມີອາຍຸຫລາຍແລ້ວ
ແຕ່ແຜ່ນດິນທີ່ຈະຕ້ອງຍຶດຄອງນັ້ນຍັງມີອີກຫລາຍ
2 ຕໍ່ໄປນີ້ເປັນແຜ່ນດິນທີ່ຍັງເຫລືອຢູ່ ຄືທ້ອງຖິ່ນຟີລິສຕິນທັງຫມົດ ແລະທ້ອງຖິ່ນຂອງຄົນເກຊູຣ໌ທັງຫມົດ

3 (ຕັ້ງແຕ່ຊີໂຮຣ໌ຊຶ່ງຢູ່ທາງທິດຕາເວັນອອກຂອງເອຢິບເຫນືອຂຶ້ນໄປເຖິງເຂດແດນເອກໂຣນ) ແລະເມືອງຂອງຄົນ
ອາວວິມດ້ວຍ
4 ຊຶ່ງຢູ່ທິດໃຕ້ຄືແຜ່ນດິນທັງສິ້ນຂອງຄົນການາອານ ແລະເຂດເມອາຣາ ຊຶ່ງເປັນຂອງຊາວຊີໂດນີອານ ເຖິງເມືອງ
ອາເຟກ ເຖິງເຂດແດນຂອງຄົນອາໂມຣິດ
5 ແຜ່ນດິນຂອງຊາວເກບານ ແລະເລບານອນທັງຫມົດ ໄປທາງທີ່ດວງຕາເວັນຂຶ້ນ ຈາກບາອັນກາດທີ່ຢູ່ພູເຮີໂມນ
ເຖິງ ທາງເຂົ້າເມືອງຮາມັທ
6 ຊາວພູດອຍທັງຫມົດຈາກເລບານອນ ຈົນເຖິງມີສເຣໂຟດມາອິມ ຄືຄົນຊີໂດນທັງຫມົດ ເຮົາຈະຂັບໄລ່ເຂົາທັງ
ຫລາຍອອກໄປໃຫ້ພົ້ນຫນ້າຄົນອິສຣາເອນເອງ ພຽງແຕ່ເຈົ້າຈົ່ງຈັບສລາກແບ່ງດິນແດນເຫລົ່ານັ້ນໃຫ້ເປັນມໍຣະ
ດົກ ດັ່ງທີ່ເຮົາບັນຊາເຈົ້າໄວ້
7 ບັດນີ້ຈົ່ງແບ່ງແຜ່ນດິນນີ້ອອກແກ່ຄົນເກົ້າເຜົ່າຮວມກັບຄົນມານັສເຊເຄິ່ງເຜົ່າດ້ວຍ"

**ດິນແດນທາງຟາກແມ່ນ້ຳຈໍແດນດ້ານຕາເວັນອອກ**

The Territory East of the Jordan

8 ສ່ວນມານັສເຊອີກເຄິ່ງເຜົ່າ ເຜົ່າຣູເບນ ແລະເຜົ່າກາດໄດ້ຮັບສ່ວນມໍຣະດົກຂອງເຂົາ ຊຶ່ງໂມເຊໄດ້ມອບໃຫ້ທາງ
ຟາກແມ່ນ້ຳຈໍແດນດ້ານຕາເວັນອອກ ສ່ວນທີ່ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າມອບໃຫ້ເຂົາຄື
9 ຕັ້ງແຕ່ອາໂຣເອີ ຊຶ່ງຢູ່ລຸ່ມແມ່ນ້ຳອາຣ໌ໂນນ ແລະເມືອງທີ່ຢູ່ກາງລຸ່ມແມ່ນ້ຳນີ້ ແລະທີ່ຮາບພຽງເມເດບາທັງຫມົດ
ຕລອດເຖິງດີໂບນ
10 ແລະຫົວເມືອງທັງຫມົດຂອງຊີໂຮນກະສັດຄົນອາໂມຣິດ ຜູ້ຊຶ່ງປົກຄອງຢູ່ໃນເຮສໂບນ ໄກອອກໄປຈົນເຖິງເຂດ
ແດນຄົນອັມໂມນ
11 ແລະເຂດກີເລອາດ ແລະທ້ອງຖິ່ນຂອງຄົນເກຊູຣ໌ ແລະຄົນມາອາກາ ແລະພູເຮີໂມນທັງຫມົດ ແລະເມືອງບາ
ຊານທັງຫມົດຈົນເຖິງເມືອງຊາເລກາ
12 ຕລອດຣາຊອານາຈັກຂອງໂອກໃນບາຊານ ຜູ້ປົກຄອງຢູ່ໃນອັສຕາໂຣທ ແລະໃນເອັດເຣອີ (ທ່ານເປັນເຜົ່າເຣຟ
ຣາອິມຜູ້ດຽວທີ່ເຫລືອຢູ່) ເມືອງເຫລົ່ານີ້ໂມເຊຮົບຊະນະ ແລະໄດ້ຂັບໄລ່ໃຫ້ອອກໄປ
13 ແຕ່ຄົນອິສຣາເອນບໍ່ໄດ້ຂັບໄລ່ຄົນເກຊູຣ໌ ຫລືຄົນມາອາກາໃຫ້ອອກໄປ ແຕ່ເກຊູຣ໌ກັບມາອາກາຍັງອາສັຍຢູ່ໃນ
ຫມູ່ຄົນອິສຣາເອນຈົນເຖິງທຸກວັນນີ້
14 ສະເພາະເຜົ່າເລວີເຜົ່າດຽວທີ່ໂມເຊບໍ່ໄດ້ມອບມໍຣະດົກໃຫ້ ຂອງບູຊາດ້ວຍໄຟທີ່ຖວາຍແດ່ພຣະຜູ້ເປັນເຈົ້າ ພ
ຣະເຈົ້າຂອງອິສຣາເອນເປັນມໍຣະດົກຂອງເຂົາດັ່ງທີ່ພຣະອົງຊົງສັ່ງໄວ້ແກ່ເຂົາແລ້ວ

**ດິນແດນທີ່ແບ່ງໃຫ້ແກ່ຄົນຣູເບນ**

The Territory of Reuben

15 ແລະໂມເຊໄດ້ມອບສ່ວນມໍຣະດົກໃຫ້ແກ່ເຜົ່າຣູເບນຕາມຕະກູນຂອງເຂົາ
16 ດັ່ງນັ້ນເຂດແດນຂອງເຂົາຈຶ່ງຕັ້ງແຕ່ອາໂຣເອີຊຶ່ງຢູ່ລຸ່ມແມ່ນ້ຳອາຣ໌ໂນນແລະເມືອງຊຶ່ງຢູ່ກາງລຸ່ມແມ່ນ້ຳນັ້ນ ແລະ
ທີ່ຮາບພຽງເມືອງເມເດບາທັງຫມົດ
17 ທັງເມືອງເຮສໂບນ ຮວມກັບຫົວເມືອງຂຶ້ນທັງຫມົດຊຶ່ງຢູ່ເທິງທີ່ຮາບພຽງນັ້ນຄືດີໂບນ ແລະບາໂມທບາອານ
ແລະເບັດບາ ອັນເມໂອນ
18 ກັບຢາຮັສ ແລະເກເດໂມທ ແລະເມຟາອາດ
19 ແລະກີຣີອາທາອິມ ແລະຊິບມາ ແລະເຊເຣັທຊາຮາຣ໌ ຊຶ່ງຢູ່ເທິງເນີນພູໃນລຸ່ມແມ່ນ້ຳນັ້ນ
20 ກັບເບັດເປໂອຣ໌ ແລະທີ່ເນີນພູປີສກາແລະເມືອງເບັດເຢຊີໂມທ

21 ຄືຫົວເມືອງທັງຫມົດຊຶ່ງຢູ່ເທິງທີ່ຮາບພຽງ ແລະທັງຣາຊອານາຈັກທັງຫມົດຂອງຊີໂຮນກະສັດຄົນອາໂມຣິດຜູ້
ປົກຄອງຢູ່ໃນເຮສໂບນ ຊຶ່ງໂມເຊໄດ້ກະທຳໃຫ້ພ່າຍແພ້ ພ້ອມກັບຜູ້ນຳຂອງມີດີອານ ຄືເອວີ ແລະເຣເກມ ແລະ
ຊູຣ໌ ແລະຮູຣ໌ ແລະເຣບາ ເປັນເຈົ້ານາຍຊຶ່ງໄດ້ປົກຄອງດິນແດນໃຫ້ກະສັດຊີໂຮນ
22 ຄົນອິສຣາເອນໄດ້ຂ້າບາລາອາມ ບຸດຂອງເບໂອຣ໌ ຜູ້ເປັນຄົນທຳນວາຍເສັ່ງດ້ວຍດາບພ້ອມກັບຄົນອື່ນທີ່ເຂົາ
ໄດ້ຂ້ານັ້ນ
23 ອານາເຂດຂອງຄົນຣູເບນຄືແມ່ນ້ຳຈໍແດນເປັນເຂດແດນ ນີ້ເປັນມໍຣະດົກຂອງຄົນຣູເບນຕາມຕະກູນ ຮວມ
ທັງຫົວເມືອງ ແລະຊົນນະບົດດ້ວຍ

**ດິນແດນທີ່ແບ່ງໃຫ້ແກ່ຄົນກາດ**

The territory of Gad

24 ໂມເຊໄດ້ມອບມໍຣະດົກໃຫ້ແກ່ຄົນກາດຕາມຕະກູນຂອງເຂົາດ້ວຍ
25 ອານາເຂດຂອງເຂົາຄືຢາເຊີ ແລະຫົວເມືອງກິເລອາດທັງຫມົດ ເຄິ່ງນຶ່ງຂອງແຜ່ນດິນຄົນອັມໂມນເຖິງອາໂຣເອີ
ຊຶ່ງຢູ່ທາງທິດຕາເວັນອອກຂອງເມືອງຣັບບາ
26 ຕັ້ງແຕ່ເມືອງເຮສໂບນຈົນເຖິງເມືອງຣາມັທມິສເປ ແລະເບໂທນີມ ແລະຕັ້ງແຕ່ມາຮານາອິມຈະເຖິງເຂດແດນ
ເດບີຣ໌
27 ໃນຫວ່າງພູມີເມືອງເບັດຮາຣາມ ເບັດນິມຣາ ຊຸກໂກທ ແລະຊາໂຟນ ຣາຊອານາຈັກສ່ວນທີ່ເຫລືອຂອງຊີໂຮນ
ກະສັດເມືອງເຮສໂບນນັ້ນ ມີແມ່ນ້ຳຈໍແດນເປັນເຂດແດນຈົນເຖິງທະເລຄິນເນເຣທດ້ານຕາເວັນອອກຂອງແມ່
ນ້ຳຈໍແດນ
28 ນີ້ເປັນມໍຣະດົກຂອງຄົນເຜົ່າກາດຕາມຕະກູນຂອງເຂົາຮວມທັງຫົວເມືອງແລະຊົນນະບົດດ້ວຍ

**ດິນແດນທີ່ແບ່ງໃຫ້ແກ່ຄົນມານັສເຊເຄິ່ງເຜົ່າ**

The Territory of the Half-Tribe of Manasseh (East)

29 ໂມເຊໄດ້ມອບມໍຣະດົກໃຫ້ແກ່ຄົນມານັສເຊເຄິ່ງເຜົ່າ ເປັນສ່ວນແບ່ງທີ່ໄດ້ກັບຄົນມານັສເຊເຄິ່ງເຜົ່າຕາມຕະກູນ
ຂອງເຂົາ
30 ທ້ອງຖິ່ນຂອງເຂົາທັງຫລາຍເລີ້ມຕັ້ງແຕ່ມາຮານາອິມຕລອດບາຊານທັງຫມົດ ຄືຣາຊອານາຈັກທັງຫມົດຂອງ
ໂອກກະສັດເມືອງບາຊານ ແລະຫົວເມືອງທັງຫມົດຂອງຢາອີຣ໌ມີຫົກສິບຫົວເມືອງດ້ວຍກັນຢູ່ໃນບາຊານ
31 ແລະກິເລອາດເຄິ່ງນຶ່ງແລະເມືອງອັສຕາໂຣທກັບເມືອງເອັດເຣອີ ຫົວເມືອງຂອງຣາຊອານາຈັກໂອກໃນບາຊານ
ຫົວເມືອງເຫລົ່ານີ້ເປັນສ່ວນແບ່ງຂອງຄົນມາຄີຣ໌ຕາມຕະກູນຂອງເຂົາ
32 ເຫລົ່ານີ້ເປັນສ່ວນມໍຣະດົກຊຶ່ງໂມເຊໄດ້ແບ່ງປັນໃນທົ່ງຮາບພຽງໂມອາບຟາກແມ່ນ້ຳຈໍແດນຂ້າງຟາກນັ້ນທາງ
ທິດຕາເວັນອອກຂອງເມືອງເຢຣິໂກ
33 ແຕ່ໂມເຊບໍ່ໄດ້ມອບມໍຣະດົກໃຫ້ແກ່ຄົນເລວີ ພຣະຜູ້ເປັນເຈົ້າຂອງອິສຣາເອນເປັນມໍຣະດົກຂອງເຂົາ ດັ່ງທີ່ພຣະ
ອົງຊົງສັ່ງໄວ້ກັບເຂົາ

## 14 ປະເທດການາອານຖືກແບ່ງອອກດ້ວຍ

**ສລາກ**

The Distribution of Territory West of the Jordan

1 ຕໍ່ໄປນີ້ເປັນສ່ວນມໍຣະດົກຊຶ່ງປະຊາຊົນອິສຣາເອນໄດ້ຮັບໃນແຜ່ນດິນການາອານ ຊຶ່ງປະໂຣຫິດເອເລອາຊາ
ແລະໂຢຊວຍບຸດນູນ ແລະຫົວຫນ້າຕະກູນເຜົ່າຄົນອິສຣາເອນໄດ້ແຈກຈ່າຍໃຫ້ແກ່ເຂົາ
2 ມໍຣະດົກນີ້ເຂົາຈັບສລາກແບ່ງກັນໃນລະຫວ່າງເກົ້າເຜົ່າເຄິ່ງ

3 ເພາະໂມເຊໄດ້ໃຫ້ມໍຣະດົກແກ່ຄົນສອງເຜົ່າເຄິ່ງທາງຟາກຕາເວັນອອກຂອງແມ່ນໍ້າຈໍແດນແລ້ວ ແຕ່ທ່ານບໍ່ໄດ້
ແບ່ງສ່ວນໃຫ້ພວກເລວີ
4 ເພາະວ່າເຊື້ອສາຍຂອງໂຢເຊັບມີສອງເຜົ່າຄື ມານັສເຊແລະເອຟຣາອິມ ແລະພວກເລວີບໍ່ໄດ້ມີສ່ວນໃນແຜ່ນ
ດິນນັ້ນ ໄດ້ແຕ່ຫົວເມືອງທີ່ຈະເຂົ້າອາໄສຢູ່ ກັບລານທົ່ງຫຍ້າຮອບເມືອງສຳລັບຝູງສັດແລະຊັບສິນຂອງເຂົາເທົ່າ
ນັ້ນ
5 ຄົນອິສຣາເອນໄດ້ກະທຳຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງໄວ້ກັບໂມເຊ ເຂົາແບ່ງທີ່ດິນກັນ

### ຍົກເຮໂບຣນໃຫ້ກາເລັບ

Hebron Allotted to Caleb

6 ຂນະນັ້ນຄົນຢູດາມາຫາໂຢຊວຍໃນເມືອງກິນການ ແລະກາເລັບບຸດເຢຟຸນເນຊາວຕະກູນເກນີສໄດ້ກ່າວແກ່
ທ່ານວ່າ, "ທ່ານຊາບເຣື່ອງຊຶ່ງພຣະຜູ້ເປັນເຈົ້າໄດ້ສັ່ງກັບໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າທີ່ກາເດັສບາຣ໌ເນ
ອາກ່ຽວກັບທ່ານແລະຂ້າພະເຈົ້າແລ້ວ
7 ເມື່ອໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໃຊ້ໃຫ້ຂ້າພະເຈົ້າໄປຈາກກາເດັສບາຣ໌ເນອາ ເພື່ອສອດແນມເບິ່ງແຜ່ນ
ດິນ ຂ້າພະເຈົ້າມີອາຍຸສີ່ສິບປີ ຂ້າພະເຈົ້າໄດ້ນຳຂ່າວມາແຈ້ງແກ່ທ່ານຕາມຄວາມຄິດເຫັນຂອງຂ້າພະເຈົ້າ
8 ແຕ່ສ່ວນພີ່ນ້ອງຊຶ່ງຂຶ້ນໄປພ້ອມກັບຂ້າພະເຈົ້າໄດ້ກະທຳໃຫ້ຈິດໃຈຂອງປະຊາຊົນຢ້ານ ແຕ່ຂ້າພະເຈົ້າໄດ້ຕິດ
ຕາມພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະເຈົ້າຢ່າງສຸດໃຈ
9 ໃນວັນນັ້ນໂມເຊໄດ້ສາບານວ່າ "ແທ້ຈິງແຜ່ນດິນຊຶ່ງຕີນຂອງທ່ານໄດ້ຢຽບຍ່ຳໄປນັ້ນຈະຕົກເປັນມໍຣະດົກຂອງ
ທ່ານແລະຂອງບຸດຫລານຂອງທ່ານສືບໄປເປັນນິດເພາະວ່າທ່ານໄດ້ຕິດຕາມພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າ
ພະເຈົ້າຢ່າງສຸດໃຈ
10 ບັດນີ້ ພຣະຜູ້ເປັນເຈົ້າຍັງຊົງໃຫ້ຂ້າພະເຈົ້າມີຊີວິດຢູ່ຕລອດສີ່ສິບຫ້າປີນີ້ ດັ່ງທີ່ພຣະອົງສັ່ງຕັ້ງແຕ່ພຣະຜູ້ເປັນເຈົ້າ
ສັ່ງເຊັ່ນນີ້ໄວ້ແກ່ໂມເຊ ເມື່ອຄົນອິສຣາເອນເດີນທາງຢູ່ໃນຖິ່ນກັນດານ ແລະວັນນີ້ຂ້າພະເຈົ້າມີອາຍຸແປດສິບຫ້າ
ປີແລ້ວ
11 ຂ້າພະເຈົ້າຍັງມີກຳລັງແຂງແຮງ ເຊັ່ນດຽວກັບວັນທີ່ໂມເຊໃຊ້ໃຫ້ຂ້າພະເຈົ້າໄປ ກຳລັງຂອງຂ້າພະເຈົ້າໃນການ
ທຳເສິກສົງຄາມຫລືອອກໄປແລະເຂົ້າມາດຽວນີ້ກໍເປັນເຫມືອນຄັ້ງນັ້ນ
12 ເພາະສະນັ້ນຂໍມອບແດນພູດອຍນີ້ ຊຶ່ງພຣະຜູ້ເປັນເຈົ້າສັ່ງໃນວັນນັ້ນໃຫ້ແກ່ຂ້າພະເຈົ້າ ເພາະທ່ານໄດ້ຍິນໃນ
ວັນນັ້ນແລ້ວວ່າຄົນອານາກິມຢູ່ທີ່ນັ້ນ ມີຫົວເມືອງໃຫຍ່ທີ່ມີກຳແພງລ້ອມຢ່າງເຂັ້ມແຂງ ບາງທີ່ພຣະຜູ້ເປັນເຈົ້າ
ຈະຊົງສະຖິດຢູ່ກັບຂ້າພະເຈົ້າ ຂ້າພະເຈົ້າຈະຂັບໄລ່ເຂົາອອກໄປໄດ້ ດັ່ງທີ່ພຣະຜູ້ເປັນເຈົ້າສັ່ງໄວ້ແລ້ວ"
13 ແລ້ວໂຢຊວຍ ກໍອວຍພອນແກ່ທ່ານ ແລະຍົກເມືອງເຮໂບຣນໃຫ້ກາເລັບບຸດເຢຟຸນເນເປັນມໍຣະດົກ
14 ເຮໂບຣນຈຶ່ງຕົກເປັນມໍຣະດົກແກ່ກາເລັບບຸດເຢຟຸນເນຕະກູນເກນີສຈົນເຖິງທຸກວັນນີ້ ເພາະວ່າທ່ານຕິດຕາມພ
ຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນຢ່າງສຸດໃຈ
15 ເມືອງເຮໂບຣນນັ້ນແຕ່ເດີມມີຊື່ວ່າກີຣິອາດອາຣ໌ບາ ອາຣ໌ບາຄົນນີ້ເປັນຄົນໃຫຍ່ໂຕທີ່ສຸດໃນຄົນອານາກິມ ແຜ່ນ
ດິນຈຶ່ງສງົບຈາກການເສິກສົງຄາມ

## 15 ດິນແດນທີ່ແບ່ງໃຫ້ແກ່ເຜົ່າຢູດາ

The Territory of Judah

1 ທີ່ດິນສ່ວນຂອງເຜົ່າຢູດາຕາມຕະກູນຂອງເຂົານັ້ນ ດ້ານໃຕ້ເຖິງເຂດແດນເມືອງເອໂດມ ຄືເຖິງຖິ່ນກັນດານຊິນ
ເປັນທີ່ສຸດປາຍເຂດດ້ານໃຕ້
2 ເຂດແດນທາງທິດໃຕ້ນັ້ນຕັ້ງແຕ່ຕົ້ນຈາກປາຍທະເລຕາຍ ຄືຕັ້ງແຕ່ອ່າວ ຊຶ່ງໄປທາງທິດໃຕ້

3 ອອກໄປທາງດ້ານໃຕ້ຂອງທາງຂຶ້ນເນີນອັກຣັບບິມຜ່ານໄປເຖິງຊີນ ແລ້ວຂຶ້ນໄປທາງດ້ານໃຕ້ເມືອງກາເດັສບາຣ໌
ເນອາ ຕາມທາງເມືອງເຮສໂຣນເຖິງເມືອງອັດດາລ້ຽວໄປເຖິງເມືອງກາຣ໌ກາ
4 ຜ່ານເລື້ອຍໄປເຖິງອັສໂມນ ອອກໄປເຖິງລຳທານເອຢິບມາສິ້ນສຸດລົງທີ່ທະເລ ທີ່ກ່າວນີ້ຈະເປັນເຂດແດນດ້ານ
ໃຕ້ຂອງທ່ານ
5 ເຂດແດນທາງດ້ານຕາເວັນອອກຄືທະເລຕາຍຂຶ້ນໄປເຖິງປາກແມ່ນ້ຳຈໍແດນ ແລະເຂດແດນດ້ານເໜືອ ຕັ້ງແຕ່
ອ່າວທີ່ທະເລທີ່ປາກແມ່ນ້ຳຈໍແດນ
6 ແລະເຂດແດນນັ້ນອອກໄປເຖິງເບັດໂຮກລາ ແລະຜ່ານໄປຕາມດ້ານເໜືອຂອງເມືອງເບັດອາຣາບາ ແລະ
ເຂດແດນອອກຕໍ່ໄປເຖິງກ້ອນຫີນບູຮານບຸດຣູເບນ
7 ແລະເຂດແດນອອກໄປເຖິງເດບີຣ໌ຈາກຮ່ອມພູອາໂຄ ກົງໄປທາງທິດເໜືອລ້ຽວໄປຫາເມືອງກິນການຊຶ່ງຢູ່
ກົງກັນຂ້າມທາງຂ້າມພູທີ່ຊື່ອາດູມມີມ ຊຶ່ງຢູ່ທາງດ້ານໃຕ້ຂອງຮ່ອມພູແລະເຂດແດນກໍຜ່ານໄປເຖິງນ້ຳພຸເອນເຊ
ເມສ ໄປສິ້ນສຸດລົງທີ່ເອນໂຣເກນ
8 ແລ້ວເຂດແດນກໍອອກໄປຕາມຮ່ອມພູ ບຸດຮິນໂນມ ເຖິງສັນພູດ້ານໃຕ້ຂອງເມືອງຄົນເຢບຸສ (ຄືເຢຣູຊາເລັມ)
ແລ້ວເຂດແດນກໍອອກໄປເຖິງຍອດພູຊຶ່ງຢູ່ເໜືອຮ່ອມພູຮິນໂນມທາງດ້ານຕາເວັນອອກ ທີ່ຮ່ອມພູເຣຟາອີມ
ດ້ານເໜືອສຸດ
9 ແລ້ວເຂດແດນກໍອອກໄປຈາກຍອດພູເຖິງນ້ຳພຸແຫ່ງລຳຫ້ວຍເນັຟໂຕອາ ຈາກທີ່ນັ້ນກໍມາເຖິງຫົວເມືອງແຫ່ງພູ
ຂອງເອ ໂຟຣນ ແລ້ວເຂດແດນກໍລ້ຽວໂຄ້ງຈາກບາອາລາ (ຄືເມືອງກີຣີອາດເຢອາຣີມ)
10 ແລ້ວເຂດແດນກໍລ້ຽວໂຄ້ງຈາກບາອາລາໄປທາງທິດຕາເວັນຕົກເຖິງພູເຊອີຣ໌ ຜ່ານໄປຕາມສັນພູຢາອາຣີມ
ດ້ານເໜືອ (ຄືເຄສອາໂຣນ) ລົງໄປເຖິງເບັດເຊເມສຜ່ານເມືອງຕິມນາໄປ
11 ແລ້ວເຂດແດນກໍອອກໄປຈາກທາງສັນເນີນພູດ້ານເໜືອຂອງເມືອງເອກໂຣນແລ້ວກໍໂຄ້ງໄປຫາເມືອງຊິກເກ
ໂຣນຜ່ານໄປເຖິງພູບາອາລາອອກໄປເຖິງເມືອງຢັບເນເອນແລະເຂດແດນກໍມາສິ້ນສຸດລົງທີ່ທະເລ
12 ເຂດແດນດ້ານຕາເວັນຕົກ ຄືທະເລໃຫຍ່ຕາມຝັ່ງທະເລ ນີ້ເປັນເຂດແດນລ້ອມຮອບຄົນຢູດາຕາມຕະກູນຂອງ
ເຂົາ

**ກາເລັບຊະນະເຮໂບຣນ ແລະເດບີຣ໌**

Caleb Occupies His Portion

(ພປຄ 1:11-15)

13 ຕາມພຣະດຳຣັດຂອງພຣະຜູ້ເປັນເຈົ້າສັ່ງແກ່ໂຢຊວຍ ທ່ານຍົກທີ່ດິນສ່ວນນຶ່ງໃນເຂດຂອງຄົນຢູດາໃຫ້ແກ່ກາ
ເລັບບຸດເຢຟຸນເນ ຄືກີຣີອາດອາຣາບາທີ່ເອີ້ນເມືອງເຮໂບຣນ (ອາຣາບາເປັນບິດາຂອງອານາກ)
14 ກາເລັບໄດ້ຂັບໄລ່ບຸດທັງສາມຂອງອານາກອອກຈາກທີ່ນັ້ນຄື ເຊຊັຍ ອາຮີມານ ແລະຕັລມັຍຜູ້ເປັນເຊື້ອສາຍ
ຂອງອານາກ
15 ທ່ານຂຶ້ນໄປຈາກທີ່ນັ້ນຈະຕໍ່ສູ້ກັບຊາວເມືອງເດບີຣ໌ ເມືອງເດບີຣ໌ເດີມມີຊື່ວ່າ ກີຣີອາດເຊເຟີ
16 ກາເລັບກ່າວວ່າ, “ຜູ້ໃດໂຈມຕີເມືອງກີຣີອາດເຊເຟີ ແລະຍຶດໄດ້ເຮົາຈະຍົກອັກສາບຸດສາວຂອງເຮົາໃຫ້ເປັນພັຣ
ຍາ”
17 ແລະໂອທນີເອນບຸດເກນັສ ນ້ອງກາເລັບຕີເມືອງນັ້ນໄດ້ ທ່ານຈຶ່ງຍົກອັກສາບຸດສາວຂອງທ່ານໃຫ້ເປັນເມັຽ
18 ຢູ່ມາເມື່ອແຕ່ງງານກັນແລ້ວ ນາງຈຶ່ງຊວນຜົວໃຫ້ຂໍທີ່ນາຕໍ່ບິດາ ນາງກໍລົງຈາກຫລັງລໍ ແລະກາເລັບຖາມ
ນາງວ່າ, “ເຈົ້າຕ້ອງການຫຍັງ”
19 ນາງຕອບທ່ານວ່າ, “ຂໍຂອງຂວັນໃຫ້ລູກຈັກຢ່າງນຶ່ງເຖີດ ເມື່ອພໍ່ໃຫ້ຂ້ານ້ອຍມາຢູ່ໃນແຜ່ນດິນເນເກັບລູກຂໍນ້ຳພຸ
ດ້ວຍ” ກາເລັບກໍຍົກນ້ຳພຸເທິງ ແລະນ້ຳພຸລຸ່ມໃຫ້ແກ່ນາງ

### ຫົວເມືອງຂອງເຜົ່າຢູດາ

The Towns of Judah

20 ຕໍ່ໄປນີ້ເປັນມໍຣະດົກຂອງເຜົ່າຄົນຢູດາຕາມຕະກູນຂອງເຂົາ

21 ຫົວເມືອງທີ່ເປັນຂອງເຜົ່າຄົນຢູດາ ຊຶ່ງຢູ່ທາງທິດໃຕ້ສຸດ ທາງເຂດແດນເອໂດມຄືເມືອງກັບເຊເອນ ເອເດີ ຢາກູຣ໌

22 ກີນາ ດີໂມຣາ ອາດາດາ

23 ເກເດສ ຮາໂຊຣ໌ ອິທນານ

24 ຊີຟ ເຕເລມ ເບອາໂລທ

25 ຮາໂຊຣ໌ ຮາດັດຕາ ເກຣີໂຢດ ເຮສໂຣນ(ຄືເມືອງຮາໂຊຣ໌)

26 ອາມາມ ເຊມາ ໂມລາດາ

27 ຮາຊາຣ໌ ກາດດາ ເຮສໂມນ ເບັດເປເລັດ

28 ຮາຊາຣ໌ຊູອານ ເບເອີເຊບາ ບີຊີໂອທີຢາ

29 ບາອາລາ  ອີອີມ ເອເຊມ

30 ເອນໂຕລາດ ເຄຊີນ ໂຮຣ໌ມາ

31 ຊີກລາກ ມັດມານນາ ຊານຊານນາ

32 ເລບາໂອດ ຊິນຮີມ ອາອີນ ແລະຣິມໂມນ ຮວມທັງຫມົດເປັນຊາວເກົ້າຫົວເມືອງ ກັບຊົນນະບົດຂອງເມືອງນັ້ນດ້ວຍ

33 ເມືອງຕ່າງໆທີ່ຢູ່ຕາມຕີນພູ ມີເມືອງເອສຕາໂອນ ເຊຣາ ອັສນາ

34 ຊາໂນອາ ເອນກັນນີມ ຕັປປູອາ ເອນາມ

35 ຢາຣ໌ມູທ ອາດູນລາມ ເຊໂກ ອາເຊກາ

36 ຊາອາຣາອີມ ອາດີທາອີມ ເກເດຣາ ເກເດໂຣທາອີມ ຮວມເປັນສິບສີ່ຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

37 ເມືອງເຊນານ ຮາດັສອາ ມີກດັນກາດ

38 ດີນອານ ມີສເປ ໂຢກເທເອນ

39 ລາຄີສ ໂບສກາດ ເອກໂລນ

40 ກັບໂບນ ລາມາມ ຄິດລີສ

41 ເກເດໂຣທ ເບັດດາໂກນ ນາອາມາ ແລະມັກເກດາ ຮວມເປັນສິບຫົກຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

42 ລີບນາ  ເອເທີ ອາຊານ

43 ອີຟຕາ ອັສນາ ເນຊີບ

44 ເກອີລາ ອັກຊີບ ແລະມາເຣຊາ ຮວມເປັນເກົ້າຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

45 ເອກໂລນກັບຫົວເມືອງແລະຊົນນະບົດເມືອງນັ້ນ

46 ຈາກກຸງເອກໂລນເຖິງທະເລ ແລະບັນດາເມືອງທີ່ຢູ່ໃກ້ອັສໂດດກັບຊົນນະບົດຂອງເມືອງນັ້ນ

47 ອັສໂດດກັບຫົວເມືອງແລະຊົນນະບົດເມືອງນັ້ນ ກາຊາກັບຫົວເມືອງແລະຊົນນະບົດເມືອງນັ້ນ ຈົນເຖິງລຳທານເອຢິບ ແລະທະເລໃຫຍ່ພ້ອມກັບຝັ່ງຊາຍທະເລ

48 ແລະໃນພູດອຍ ຄືຊາມີຣ໌ ຢັດຕີຣ໌ ເຊໂກ

49 ດານນາ ກີຣີອາດຊານນາ (ຄືເມືອງເດບີຣ໌)

50 ອານັບ ເອັສເຕໂມ ອານີມ
51 ໂກເຊນ ໂຮໂລນ ແລະກີໂລ ຮວມເປັນສິບເອັດຫົວເມືອງກັບຊົນນະບົດຂອງເມືອງນັ້ນ
52 ອາຣັບ ດູມາ ເອຊານ
53 ຢານີມ ເບັດຕັປປູອາ ອາເຟກາ
54 ຮູມຕາ ກີຣີອາດອາຣ໌ບາ (ຄືເມືອງເຮໂບຣນ) ແລະຊີໂອຣ໌ ຮວມເກົ້າຫົວເມືອງກັບຊົນນະບົດຂອງເມືອງນັ້ນ
55 ມາໂອນ ກາຣ໌ເມນ ຊີຟ ຢູດຕາ
56 ເຢສເຣເອນ ໂຢກເດອາມ ຊາໂນອາ
57 ກາອີນ ກີເບອາ ແລະຕີມນາ ຮວມສິບຫົວເມືອງກັບຊົນນະບົດຂອງເມືອງນັ້ນ
58 ຮັລຮູນ ເບັດຊູຣ໌ ເກໂດຣ໌
59 ມາອາຣັທ ເບັດອາໂນທ ແລະເອນເຕໂກນ ຮວມຫົກຫົວເມືອງກັບຊົນນະບົດຂອງເມືອງນັ້ນ
60 ກີຣີອາດບາອານ (ຄືເມືອງກີຣີອາດເຢອາຣີມ) ແລະຣັບບາ ຮວມສອງຫົວເມືອງກັບຊົນນະບົດຂອງເມືອງນັ້ນ
61 ເມືອງທີ່ໃນຖິ່ນກັນດານ ຄືເບັດອາຣາບາ ມິດດີນ ເຊກາກາ
62 ນິບຊານ ເມືອງເກືອ ແລະເອນເກດີ ຮວມຫົກຫົວເມືອງກັບຊົນນະບົດຂອງເມືອງນັ້ນ
63 ແຕ່ຄົນເຢບຸສຊຶ່ງເປັນຊາວເມືອງເຢຣູຊາເລັມນັ້ນ ປະຊາຊົນຢູດາບໍ່ໄດ້ຂັບໄລ່ໄປ ດັ່ງນັ້ນແຫລະຄົນເຢບຸສຈຶ່ງອາໄສຢູ່ກັບປະຊາຊົນຢູດາຈົນເຖິງທຸກວັນນີ້

## 16 ດິນແດນທີ່ແບ່ງໃຫ້ແກ່ເຜົ່າເອຟຣາອິມ ແລະມານັສເຊ

The Territory of Ephraim

1 ທີ່ດິນຕາມສະຫລາກຂອງເຊື້ອສາຍໂຢເຊັບນັ້ນເລີ້ມຈາກແມ່ນ້ຳຈໍແດນໃກ້ໆເມືອງເຢຣີໂກ ທິດຕາເວັນອອກຂອງນ້ຳພຸເຢຣີໂກເຂົ້າໄປໃນຖິ່ນກັນດານຂຶ້ນໄປຈາກເຢຣີໂກໄປໃນແດນພູດອຍເບັດເອນ
2 ຈາກເມືອງເບັດເອນໄປຍັງເມືອງລູສ ຜ່ານເລື່ອຍໄປເຖິງເມືອງອາຕາໂຣທ ຍັງເຂດຂອງຄົນອາຣ໌ຄີ
3 ແລ້ວລົງໄປທາງທິດຕາເວັນຕົກເຖິງເຂດຂອງຄົນຢັຟເລທທີ່ໄກອອກໄປຈົນເຖິງເຂດເມືອງເບັດໂຮໂຣນລຸ່ມເຖິງເມືອງເກເຊີໄປສິ້ນສຸດລົງທີ່ທະເລ
4 ເຊື້ອສາຍຂອງໂຢເຊັບ ຄືຄົນມານັສເຊ ແລະຄົນເອຟຣາອິມ ໄດ້ຮັບມໍຣະດົກຂອງເຂົາ
5 ເຂດຂອງຄົນເອຟຣາອິມຕາມຕະກູນຂອງເຂົາເປັນດັ່ງນີ້ ເຂດແດນມໍຣະດົກອຂງເຂົາດ້ານຕາເວັນອອກ ເລີ້ມແຕ່ເມືອງອາຕາໂຣທອັດດາຣ໌ໄກໄປຈົນເຖິງເບັດໂຮໂຣນເທິງ
6 ແລະເຂດແດນອອກໄປເຖິງທະເລທາງທິດເຫນືອຄືເມືອງມິກເມທັດ ທາງດ້ານຕາເວັນອອກເຂດແດນໂຄ້ງມາຫາເມືອງຕາອານັທຊີໂລ ແລ້ວຜ່ານພົ້ນເມືອງນີ້ໄປທາງຕາເວັນອອກຂອງເມືອງຢາໂນອາ
7 ແລ້ວລົງໄປຈາກຢາໂນອາເຖິງເມືອງອາຕາໂຣທແລະເມືອງນາອາຣາ ໄປຕິດເມືອງເຢຣີໂກສິ້ນສຸດລົງທີ່ແມ່ນ້ຳຈໍແດນ
8 ຈາກຕັປປູອາເຂດແດນລົງໄປທາງທິດຕາເວັນຕົກເຖິງລຳທານການາໄປສິ້ນສຸດລົງທີ່ທະເລ ນີ້ເປັນດິນແດນມໍຣະດົກຂອງຄົນເອຟຣາອິມຕາມຕະກູນຂອງເຂົາ
9 ຮວມທັງຫົວເມືອງຊຶ່ງແບ່ງແຍກໄວ້ໃຫ້ຄົນເອຟຣາອິມໃນດິນແດນມໍຣະດົກຂອງຄົນມານັສເຊ ຄືຫົວເມືອງເຫລົ່ານັ້ນ ກັບຊົນນະບົດຂອງເມືອງນັ້ນດ້ວຍ
10 ເຖິງຢ່າງໃດກໍ່ຕາມເຂົາບໍ່ໄດ້ຂັບໄລ່ຄົນການາອານຊຶ່ງອາໄສຢູ່ໃນເມືອງເກເຊີໃຫ້ອອກໄປ ດັ່ງນັ້ນຄົນການາອານຈຶ່ງອາໄສຢູ່ໃນຫມູ່ຄົນເອຟຣາອິມເຖິງທຸກວັນນີ້ ແຕ່ກໍ່ຕົກເປັນທາດຖືກເກນໃຫ້ທຳງານໂຍທາ

17

Chapter 17

1 ທີ່ດິນຕາມສະຫລາກເປັນຢ່າງນີ້ທີ່ຕົກແກ່ເຜົ່າມານັສເຊ ເພາະເປັນບຸດຫົວປີຂອງໂຢເຊັບ ສ່ວນມາຄີບຸດຫົວປີ
ຂອງມານັສເຊ ບິດາຂອງກິເລອາດ ແລະເມືອງບາຊານເປັນສ່ວນແບ່ງ ເພາະວ່າເຂົາເປັນທະຫານ

2 ແລະທີ່ດິນຕາມສະຫລາກຕົກແກ່ຄົນເຜົ່າມານັສເຊທີ່ເຫລືອຢູ່ຕາມຕະກູນ ຄືອາບີເອເຊີ ເຮເລກ ອັສຣີເອນ ເຊ
ເຄມ ເຮເຟີ ແລະເຊມີດາ ບຸກຄົນເຫລົ່ານີ້ເປັນເຊື້ອສາຍຜູ້ຊາຍຂອງມານັສເຊ ຜູ້ເປັນບຸດຂອງໂຢເຊັບ ຕາມຕະ
ກູນຂອງເຂົາ

3 ຝ່າຍເຊໂລເຟຮັດບຸດຂອງເຮເຟີ ບຸດຂອງກິເລອາດ ບຸດຂອງມາຄີຣ໌ ບຸດຂອງມານັສເຊ ບໍ່ມີບຸດຊາຍ ມີແຕ່ບຸດຕ
ຣີ ແລະຕໍ່ໄປນີ້ເປັນຊື່ບຸດຕຣີຂອງເຂົາ ຄືມາລາ ໂນອາ ຮົກລາ ມິນກາ ແລະຕີຣ໌ຊາ

4 ເຂົາເຂົ້າມາຫາປະໂຣຫິດເອເລອາຊາ ແລະໂຢຊວຍບຸດນູນ ແລະບັນດາຜູ້ນຳແລະກ່າວວ່າ,
"ພຣະຜູ້ເປັນເຈົ້າໄດ້ຊົງສັ່ງໂມເຊໄວ້ວ່າ ໃຫ້ຂ້າພະເຈົ້າທັງຫລາຍຮັບສ່ວນມໍຣະດົກໃນຫມູ່ຍາດພີ່ນ້ອງຂອງຂ້າ
ພະເຈົ້າທັງຫລາຍໄດ້" ດັ່ງນັ້ນທ່ານຈຶ່ງໃຫ້ມໍຣະດົກແກ່ຄົນເຫລົ່ານີ້ໃນຫມູ່ພີ່ນ້ອງຂອງບິດາຂອງເຂົາຕາມພຣະ
ບັນຍັດແຫ່ງພຣະຜູ້ເປັນເຈົ້າ

5 ດັ່ງນີ້ແຫລະສ່ວນທີ່ຕົກແກ່ຄົນມານັສເຊຈຶ່ງມີສິບສ່ວນ ນອກເຫນືອດິນແດນກິເລອາດແລະບາຊານຊຶ່ງຢູ່ຟາກ
ຕາເວັນອອກຂອງແມ່ນ້ຳຈໍແດນ

6 ເພາະວ່າບຸດຕຣີຂອງມານັສເຊໄດ້ຮັບມໍຣະດົກພ້ອມກັບບຸດຊາຍຂອງທ່ານດ້ວຍ ແຜ່ນດິນກິເລອາດນັ້ນ ໄດ້ຕົກ
ເປັນສ່ວນຂອງບຸດຫລານມານັສເຊທີ່ເຫລືອຢູ່

7 ເຂດແດນຂອງມານັສເຊຕັ້ງຕົ້ນຈາກອາເຊີຈົນເຖິງມີກເມທາດ ຊຶ່ງຢູ່ທາງທິດຕາເວັນອອກຂອງເມືອງເຊເຄມ
ແລ້ວ ເຂດແດນກໍຕໍ່ອອກໄປທາງທິດໃຕ້ ເຖິງທີ່ຂອງຊາວເມືອງເອນຕັປປູອາ

8 ແຜ່ນດິນເມືອງຕັປປູອາເປັນຂອງມານັສເຊ ແຕ່ຕົວເມືອງຕັປປູອາຊຶ່ງຢູ່ທີ່ເຂດແດນຂອງມານັສເຊນັ້ນເປັນຂອງ
ເຊື້ອສາຍເອຟຣາອິມ

9 ແລ້ວເຂດແດນກໍລົງໄປເຖິງລຳທານການາ ຫົວເມືອງເຫລົ່ານີ້ຊຶ່ງຢູ່ທາງທິດໃຕ້ລຳທານໃນຖ້າມກາງຫົວເມືອງ
ຂອງມານັສເຊນັ້ນເປັນຂອງເອຟຣາອິມ ແລ້ວເຂດແດນຂອງມານັສເຊກໍຂຶ້ນໄປທາງດ້ານເຫນືອຂອງລຳທານ
ໄປສິ້ນສຸດລົງທີ່ທະເລ

10 ແຜ່ນດິນທາງດ້ານໃຕ້ເປັນຂອງເອຟຣາອິມ ແລະແຜ່ນດິນທາງດ້ານເຫນືອເປັນຂອງມານັສເຊມີທະເລເປັນເຂດ
ແດນ ທາງເຫນືອຈົນເຖິງດິນແດນອາເຊີ ແລະທາງທິດຕາເວັນອອກຈົນເຖິງອິສຊາຄາ

11 ໃນເຂດອິສຊາຄາແລະໃນອາເຊີນັ້ນ ມານັສເຊຍັງມີເມືອງເບັດເຊອານກັບຊົນນະບົດຂອງເມືອງນັ້ນ ແລະເມືອງ
ອີບເລອາມ ກັບຊົນນະບົດຂອງເມືອງນັ້ນ ແລະຊາວເມືອງໂດຣ໌ກັບຊົນນະບົດຂອງເມືອງນັ້ນ ແລະຊາວເມືອງ
ຕາອານາກກັບຊົນນະບົດຂອງເມືອງນັ້ນ ແລະຊາວເມືອງເມກິດໂດກັບຊົນນະບົດຂອງເມືອງນັ້ນ ຄືພູເຂົາທັງ
ສາມຍອດ

12 ແຕ່ຄົນມານັສເຊຍັງຂັບໄລ່ແລະຍຶດຄອງເມືອງເຫລົ່ານັ້ນບໍ່ໄດ້ ດ້ວຍຄົນການາອານຍັງຂືນອາໄສຢູ່ໃນແຜ່ນດິນ
ນັ້ນ

13 ແຕ່ເມື່ອຄົນອິສຣາເອນເຂັ້ມແຂງຂຶ້ນແລ້ວ ກໍໄດ້ເກນຄົນການາອານໃຫ້ທຳງານໂຍທາ ແລະບໍ່ໄດ້ຂັບໄລ່ໃຫ້ເຂົາ
ອອກໄປໃຫ້ຫມົດ

The Tribe of Joseph Protests

14 ຄົນເຜົ່າໂຢເຊັບໄດ້ເວົ້າກັບໂຢຊວຍວ່າ, “ເຫດໃດທ່ານຈຶ່ງແບ່ງໃຫ້ຂ້າພະເຈົ້າມີແຕ່ສ່ວນດຽວເປັນມໍຣະດົກ ແມ່ນວ່າຂ້າພະເຈົ້າມີຄົນຫລາຍເພາະວ່າພຣະຜູ້ເປັນເຈົ້າໄດ້ຊົງອວຍພຣະພອນແກ່ພວກຂ້າພະເຈົ້າມາຈົນເຖິງບັດນີ້ແລ້ວ”

15 ຝ່າຍໂຢຊວຍຕອບເຂົາວ່າ, “ຖ້າເຈົ້າມີຄົນຫລາຍ ພວກເຈົ້າຈົ່ງເຂົ້າໄປໃນປ່າແລ້ວຖາງເອົາເອງ ທີ່ໃນແຜ່ນດິນຂອງຄົນເປ ຣິສຊີ ແລະຄົນເຣຟາອີມ ເພາະວ່າພູດອຍຂອງຄົນເອຟຣາອິມເປັນບ່ອນແຄບ”

16 ຄົນເຜົ່າໂຢເຊັບເວົ້າວ່າ, “ແດນພູດອຍນີ້ບໍ່ພໍສຳລັບພວກເຮົາ ຝ່າຍຄົນການາອານ ຊຶ່ງຢູ່ໃນທີ່ຮາບພຽງມີຣົດຮົບທຳດ້ວຍເຫລັກທັງທີ່ຢູ່ໃນເບັດເຊອານກັບຊົນນະບົດຂອງເມືອງນັ້ນກັບທີ່ຢູ່ໃນພູເຢສເຣເອນ

17 ແລ້ວໂຢຊວຍຈຶ່ງກ່າວແກ່ເຊື້ອສາຍໂຢເຊັບ ຄືເອຟຣາອິມແລະມານັສເຊວ່າ, “ທ່ານທັງຫລາຍເປັນພວກທີ່ມີຄົນຫລາຍແລະມີກຳລັງມະຫາສານ ທ່ານຈະມີສ່ວນແບ່ງແຕ່ສ່ວນດຽວກໍວ່າບໍ່ໄດ້

18 ແມ່ນວ່າພູດອຍເຫລົ່ານັ້ນ ຈະເປັນຂອງພວກທ່ານເຖິງແມ່ນວ່າເປັນປ່າດອນທ່ານຈົ່ງຖາກຖາງແລະຍຶດຄອງໄປຈົນສຸດເຂດເຖີດ ແມ້ວ່າຄົນການາອານຈະມີຣົດຮົບທຳດ້ວຍເຫລັກ ແລະເປັນຄົນເຂັ້ມແຂງ ທ່ານທັງຫລາຍກໍຈະຂັບໄລ່ເຂົາອອກໄປໄດ້”

## 18 ດິນແດນທີ່ແບ່ງກັນທີ່ຊີໂລ

The Territory of the Remaining Tribes

1 ຝ່າຍຊຸມນຸມຊົນອິສຣາເອນທັງສິ້ນກໍມາປະຊຸມກັນທີ່ຊີໂລ ແລະຕັ້ງເຕັນນັດພົບຂຶ້ນທີ່ນັ້ນ ແຜ່ນດິນນັ້ນກໍຕົກຢູ່ໃນຄອບຄອງຂອງເຂົາ

2 ຍັງມີປະຊາຊົນອິສຣາເອນອີກເຈັດເຜົ່າທີ່ຍັງບໍ່ໄດ້ຮັບມໍຣະດົກເປັນສ່ວນແບ່ງ

3 ດັ່ງນັ້ນໂຢຊວຍຈຶ່ງກ່າວແກ່ອິສຣາເອນວ່າ, “ທ່ານທັງຫລາຍຈະລໍຊ້າຢູ່ດົນປານໃດຈຶ່ງຈະເຂົ້າໄປຍຶດຄອງທີ່ດິນຊຶ່ງພຣະຜູ້ ເປັນເຈົ້າພຣະເຈົ້າຂອງບັນພະບຸຣຸດຂອງທ່ານປະທານແກ່ທ່ານທັງຫລາຍ

4 ຈົ່ງເລືອກຄົນເຜົ່າລະສາມຄົນ ແລ້ວຂ້າພະເຈົ້າຈະໃຊ້ຄົນເຫລົ່ານັ້ນໄປທ່ອງທ່ຽວຂຶ້ນລ່ອງຢູ່ທີ່ແຜ່ນດິນນັ້ນ ໃຫ້ຂຽນແນວເຂດທີ່ດິນທີ່ຈະມອບເປັນມໍຣະດົກ ແລະມາຫາຂ້າພະເຈົ້າ

5 ໃຫ້ເຂົາແບ່ງອອກເປັນເຈັດສ່ວນ ໃຫ້ຄົນຢູດາຄົງຢູ່ໃນດິນແດນຂອງເຂົາທາງພາກໃຕ້ ແລະຄົນເຜົ່າໂຢເຊັບໃຫ້ຄົງຢູ່ໃນດິນແດນທາງພາກເຫນືອ

6 ໃຫ້ທ່ານທັງຫລາຍຂຽນແນວເຂດທີ່ດິນເປັນເຈັດສ່ວນ ແລ້ວນຳແນວເຂດທີ່ດິນນັ້ນມາໃຫ້ຂ້າພະເຈົ້າທີ່ນີ້ ແລະຂ້າພະເຈົ້າຈະຈັບສລາກໃຫ້ທ່ານທີ່ນີ້ ຕໍ່ພຣະພັກພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາ

7 ເພາະຄົນເລວີ ບໍ່ມີສ່ວນແບ່ງໃນຫມູ່ພວກທ່ານທັງຫລາຍ ດ້ວຍຕຳແຫນ່ງປະໂຣຫິດຂອງພຣະຜູ້ເປັນເຈົ້າເປັນມໍຣະດົກຂອງເຂົາແລ້ວ ເຜົ່າກາດ ແລະເຜົ່າຣູເບນ ກັບເຜົ່າມານັສເຊເຄິ່ງນຶ່ງກໍໄດ້ຮັບມໍຣະດົກຂອງເຂົາທາງຟາກແມ່ນ້ຳຈໍແດນດ້ານຕາເວັນອອກຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ມອບໃຫ້ແກ່ເຂົາທັງຫລາຍແລ້ວ”

8 ຝ່າຍຄົນເຫລົ່ານັ້ນກໍອອກເດີນທາງແລະໂຢຊວຍໄດ້ໃຫ້ຄຳແນະນຳພວກທີ່ຈະຂຽນແນວເຂດທີ່ດິນວ່າ, “ຈົ່ງທ່ຽວຂຶ້ນທ່ຽວລ່ອງໃນແຜ່ນດິນ ແລະຂຽນແນວເຂດທີ່ດິນນັ້ນແລ້ວກັບມາຫາຂ້າພະເຈົ້າ ຂ້າພະເຈົ້າຈະຈັບສະຫລາກໃຫ້ທ່ານຕໍ່ພຣະພັກ
ພຣະຜູ້ເປັນເຈົ້າທີ່ຊີໂລ”

9 ດັ່ງນັ້ນຄົນເຫລົ່ານັ້ນກໍທ່ອງທ່ຽວໄປມາທີ່ແຜ່ນດິນ ແລ້ວຂຽນເປັນຫນັງສືແນວເຂດເມືອງຕ່າງໆແບ່ງເປັນເຈັດສ່ວນແລ້ວກັບມາຫາໂຢຊວຍໃນຄ້າຍທີ່ຊີໂລ

10 ແລ້ວໂຢຊວຍກໍຈັບສະຫລາກໃຫ້ເຂົາຕໍ່ພຣະພັກພຣະຜູ້ເປັນເຈົ້າ ໂຢຊວຍກໍໄດ້ຈັດແບ່ງທີ່ດິນໃຫ້ແກ່ປະຊາຊົນອິ
ສຣາເອນທີ່ນັ້ນຕາມສ່ວນແບ່ງຂອງແຕ່ລະເຜົ່າ

**ດິນແດນທີ່ແບ່ງໃຫ້ແກ່ເຜົ່າເບັນຢາມິນ**

The Territory of Benuamin

11 ຈັບໄດ້ສລາກຂອງເຜົ່າເບັນຢາມິນຕາມເຊື້ອສາຍຂອງເຂົາຂຶ້ນມາ ແລະດິນແດນທີ່ເປັນສ່ວນ ຂອງເຂົາຢູ່ລະ
ຫວ່າງເຜົ່າຢູດາແລະເຜົ່າໂຢເຊັບ

12 ທາງດ້ານເຫນືອເຂດແດນຂອງເຂົາເລີ້ມຕົ້ນທີ່ແມ່ນ້ຳຈໍແດນ ແລະເຂດແດນກໍຕໍ່ຂຶ້ນໄປເຖິງສັນພູຕອນເຫນືອ
ຂອງເມືອງເຢຣິໂກແລ້ວຂຶ້ນໄປທາງແດນພູດອຍທາງທິດຕາເວັນຕົກ ແລະໄປສິ້ນສຸດທີ່ຖິ່ນກັນດານເບັດອາ
ເວນ

13 ຈາກທີ່ນັ້ນເຂດແດນກໍອອກໄປທາງທິດໃຕ້ໄປສູ່ເມືອງລູສ (ເມືອງດຽວກັບເມືອງເບັດເອນ) ແລ້ວເຂດແດນກໍລົງ
ໄປເຖິງອາຕາໂຣທອັດດາຣ໌ ເທິງພູຊຶ່ງຢູ່ທາງທິດໃຕ້ຂອງເມືອງເບັດໂຮໂຣນທາງລຸ່ມ

14 ແລ້ວເຂດແດນກໍຕໍ່ອອກໄປອີກທິດນຶ່ງໂຄ້ງໄປທາງທິດໃຕ້ເປັນດ້ານຕາເວັນຕົກ ຈາກພູຊຶ່ງຢູ່ທິດໃຕ້ກົງກັນຂ້າມ
ເມືອງເບັດໂຮໂຣນ ແລະໄປສິ້ນສຸດລົງທີ່ກີຣີອາດບາອານ (ຄືກີຣີອາດເຢອາຣິມ) ເປັນເມືອງທີ່ເປັນຂອງເຜົ່າຢູ
ດາ ນີ້ແຫລະເປັນເຂດແດນດ້ານຕາເວັນຕົກ

15 ແລະດ້ານໃຕ້ນັ້ນເລີ້ມຕົ້ນທີ່ຊານເມືອງກີຣີອາດເຢອາຣິມ ແລະເຂດແດນກໍຕໍ່ຈາກທີ່ນັ້ນໄປຍັງທາງຕາເວັນຕົກ
ເຖິງນ້ຳພຸເນັຟໂຕອາ

16 ແລ້ວເຂດແດນກໍຕໍ່ລົງໄປສຸດເຂດພູຊຶ່ງມອງລົງມາເຫັນຮ່ອມພູແຫ່ງບຸດຂອງຮິນໂນມ ຊຶ່ງຢູ່ທາງປາຍເຫນືອສຸດ
ຂອງຮ່ອມພູເອຟຣາອິມ ແລ້ວກໍລົງໄປທີ່ຮ່ອມພູຮິນໂນມໃຕ້ສັນພູຂອງຄົນເຢບຸສແລ້ວລົງໄປເຖິງເມືອງເອນໂຣ
ເກນ

17 ແລ້ວໂຄ້ງໄປທາງທິດເຫນືອໄປເຖິງເອນເຊເມສ ຈາກທີ່ນັ້ນກໍຕົງໄປຍັງເກລີໂລທ ຊຶ່ງຢູ່ກົງກັນຂ້າມກັບທາງຂ້າມ
ເຂົາຊື່ອາດູມມິມ ແລ້ວລົງໄປຍັງກ້ອນຫີນບູຮານບຸດຂອງຣູເບນ

18 ແລ້ວຜ່ານໄປທາງທິດເຫນືອເຖິງສັນພູກົງກັນຂ້າມເບັດອາຣາບາແລ້ວລົງໄປສູ່ອາຣາບາ

19 ແລ້ວເຂດແດນກໍຜ່ານໄປທາງທິດເຫນືອເຖິງສັນພູທີ່ເບັດໂຮກລາ ແລະເຂດແດນໄປສິ້ນສຸດລົງທີ່ອ່າວດ້ານ
ເຫນືອ ຂອງທະເລຕາຍທີ່ປາຍໃຕ້ຂອງແມ່ນ້ຳຈໍແດນ ນີ້ເປັນເຂດແດນກັ້ນເປັນເຂດແດນດ້ານໃຕ້

20 ແມ່ນ້ຳຈໍແດນກັ້ນເປັນເຂດແດນທາງຕາເວັນອອກ ນີ້ເປັນມໍຣະດົກຂອງຊົນເຜົ່າເບັນຢາມິນຕາມຕະກູນຂອງ
ເຂົາ ມີເຂດແດນດັ່ງນີ້ລ້ອມຮອບ

21 ຝ່າຍຫົວຫນ້າຂອງເຜົ່າຄົນເບັນຢາມິນຕາມຕະກູນຂອງເຂົາ ຄືເມືອງເຢຣິໂກ ເບັດໂຮກລາ ເອເມກເກຊິສ

22 ເບັດອາຣາບາ ເຊມາຣາອິມ ເບັດເອນ

23 ອາວວິມ ປາຣາ ໂອຟຣາ

24 ເຄຟາຣາມໂມນີ ໂອຟນີ ແລະເກບາ ຮວມເປັນສິບສອງຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

25 ກິເບໂອນ ຣາມາ ເລເອີໂອທ

26 ມິສເປ ເຄຟີຣາ ໂມຊາ

27 ເຣເກມ ອີຣ໌ເປເອນ ຕາຣາລາ

28 ເຊລາ ຮາເອເລຟ ເຢບຸສ (ຄືເຢຣູຊາເລັມ) ກິເລອາແລະກີຣີອາດ ຮວມເປັນສິບສີ່ຫົວເມືອງກັບຊົນນະບົດຂອງ
ເມືອງນັ້ນດ້ວຍ ນີ້ເປັນມໍຣະດົກຂອງຄົນເຜົ່າເບັນຢາມິນຕາມຕະກູນຂອງເຂົາ

## 19 ດິນແດນທີ່ແບ່ງໃຫ້ແກ່ເຜົ່າຊີເມໂອນ

The Territory of Simeon

1 ສລາກທີສອງອອກມາເປັນຂອງຊີເມໂອນ ຕາມຕະກູນຂອງເຂົາ ມໍຣະດົກຂອງເຂົາຢູ່ຖ້າມກາງມໍຣະດົກຂອ
ງຄົນເຜົ່າຢູດາ

2 ມີເມືອງເຫລົ່ານີ້ເປັນມໍຣະດົກ ຄືເບເອີເຊບາ ເຊບາ ໂມລາດາ

3 ຮາຊາຊູອັນ ບາລາ ເອເຊມ

4 ເອນໂຕລາດ ເບທູນ ໂຮຣ໌ມາ

5 ຊິກລາກ ເບັດມາຣ໌ກາໂບທ ຮາຊາຣ໌ຊູຊາ

6 ເບັດເລບາໂອດ ແລະຊາຣູເຮນ ຮວມເປັນສິບສາມຫົວເມືອງກັບຊົນນະບົດຂອງເມືອງ

7 ອາອິນ ຣິມໂມນ ເອເທີ ແລະອາຊານ ຮວມເປັນສີ່ຫົວເມືອງກັບຊົນນະບົດຂອງເມືອງນັ້ນໆດ້ວຍ

8 ຮວມທັງຊົນນະບົດທີ່ຢູ່ຮອບຫົວເມືອງເຫລົ່ານີ້ໄກອອກໄປຈົນເຖິງເມືອງບາອາລັທເບເອີ ເມືອງຣາມາທີ່ເນເກັບ
ເຫລົ່ານີ້ເປັນມໍຣະດົກຂອງເຜົ່າຄົນຊີເມໂອນຕາມຕະກູນຂອງເຂົາ

9 ມໍຣະດົກຂອງຄົນເຜົ່າຊີເມໂອນເປັນດິນແດນໃນສ່ວນແບ່ງຂອງຄົນເຜົ່າຢູດາ ເພາະວ່າສ່ວນຂອງຄົນເຜົ່າຢູດາ
ນັ້ນໃຫຍ່ເກີນໄປ ຄົນເຜົ່າຊີເມໂອນຈຶ່ງໄດ້ຮັບມໍຣະດົກຢູ່ຖ້າມກາງຄົນເຜົ່າຢູດາ

**ດິນແດນທີ່ແບ່ງໃຫ້ແກ່ເຜົ່າເຊບູລູນ**

The Territory of Zebulun

10 ສລາກທີສາມຂຶ້ນມາເປັນເຜົ່າເຊບູລູນ ຕາມຕະກູນຂອງເຂົາ ແລະດິນແດນທີ່ເປັນມໍຣະດົກຂອງເຂົາກໍຕໍ່ອອກ
ໄປເຖິງຊາຣິດ

11 ແລ້ວເຂດແດນຂອງເຂົາອອກໄປທາງດ້ານຕາເວັນຕົກໄປຈົນເຖິງມາເຣອານ ແລະມາສຸດຢູ່ເມືອງດັບເບເຊທ
ແລ້ວມາເຖິງຫ້ວຍນໍ້າທີ່ຢູ່ທິດຕາເວັນອອກຂອງໂຢກເນອາມ

12 ຈາກຊາຣິດເຂດແດນອອກໄປອີກທາງທິດນຶ່ງທາງດ້ານຕາເວັນອອກຊື່ທາງດວງຕາເວັນຂຶ້ນ ເຖິງເຂດແດນ
ເມືອງຄິສໂລທຕາໂບຣ໌ ແລ້ວອອກໄປເຖິງເມືອງດາເບຣາດ ແລ້ວຂຶ້ນໄປເຖິງເມືອງຢາຟີອາ

13 ຈາກທີ່ນັ້ນເຂດແດນຜ່ານໄປທາງຕາເວັນອອກທາງດວງຕາເວັນຂຶ້ນເຖິງເມືອງກັທເຮເຟີ ແລະເຖິງເມືອງເອທກາ
ຊິນໄປຈົນເຖິງເມືອງຣິມໂມນ ເຂດແດນກໍໂຄ້ງເຂົ້າຫາເມືອງເນອາ

14 ທາງທິດເຫນືອເຂດແດນໂຄ້ງເຂົ້າມາເຖິງເມືອງຮານນາໂທນ ແລະສິ້ນສຸດລົງທີ່ຮ່ອມພູອິຟຕາເອນ

15 ເມືອງກັດຕັທ ນາຮັນອານ ຊິມໂຣນ ອິດາລາ ແລະເບັດເລເຮັມ ຮວມເປັນສິບສອງຫົວເມືອງກັບຊົນນະບົດຂອງ
ເມືອງນັ້ນດ້ວຍ

16 ນີ້ເປັນມໍຣະດົກຂອງເຜົ່າເຊບູລູນຕາມຕະກູນຂອງເຂົາ ຄືຫົວເມືອງຕ່າງໆກັບຊົນນະບົດຂອງເມືອງນັ້ນດ້ວຍ

**ດິນແດນທີ່ແບ່ງໃຫ້ແກ່ເຜົ່າອິສຊາຄາ**

The Territory of Issachar

17 ສລາກທີສີ່ອອກມາເປັນຂອງອິສຊາຄາ ເພື່ອເຜົ່າອິສຊາຄາຕາມຕະກູນຂອງເຂົາ

18 ດິນແດນຂອງເຂົາຮວມເມືອງຢິສເຣເອນ ເຄຊຸນໂລທ ຊູເນມ

19 ຮາຟາຣາອິມ ຊີໂອນ ອານາຮາຣາດ

20 ຣັບບິທ ກີຊີໂອນ ເອເບສ

21 ເຣເມທ ເອນການນີມ ເອນຮັດດາ ເບັດປັສເຊສ

22 ແລະເຂດແດນຍັງຕິດກັບເມືອງຕາໂບຣ໌ ຊາຮາຊູມາ ແລະເບັດເຊເມສ ແລະເຂດແດນນີ້ໄປສິ້ນສຸດລົງທີ່ແມ່ນໍ້າ
ຈໍແດນ ຮວມເປັນສິບຫົກຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

23 ນີ້ເປັນມໍຣະດົກຂອງເຜົ່າອິສຊາຄາຕາມຕະກູນຂອງເຂົາ ຄືທັງຫົວເມືອງແລະຊົນນະບົດຂອງເມືອງນັ້ນດ້ວຍ

**ດິນແດນທີ່ແບ່ງໃຫ້ແກ່ເຜົ່າອາເຊີ**

The Territory of Asher

24 ສລາກທີຫ້າອອກມາເປັນຂອງເຜົ່າຄົນອາເຊີຕາມຕະກູນຂອງເຂົາ

25 ດິນແດນຂອງເຂົາຮວມເມືອງເຮນກາດ ຮາລີ ເບເຕນ ອັກຊາຟ

26 ອານລາມເມເລກ ອາມັດ ແລະມາຊານທາງທິດຕາເວັນອອກຈາກການເມນ ແລະເມືອງຊີໂຮຣ໌
ລິບນາ

27 ແລ້ວລ້ຽວໄປທາງທິດຕາເວັນອອກໄປຍັງເບັດດາໂກນ ແລະຕໍ່ເຂດເຊບູລູນ ແລະຮ່ອມພູອີຟຕາເອນໄປທາງ
ດ້ານເໜືອ ເຖິງເມືອງເບັດເອເມກ ແລະເນອີເອນໄປທາງເໜືອເຖິງເມືອງກາບູນ

28 ເອໂບຣນ ເຣໂຮບ ຮາມໂມນ ການາ ໄກອອກໄປເຖິງມະຫາຊີໂດນ

29 ແລ້ວເຂດແດນກໍລ້ຽວກໍລ້ຽວໄປເຖິງຣາມາ ໄປເຖິງເມືອງທີ່ມີກຳແພງລ້ອມຮອບຊື່ ຕີເຣ ແລ້ວເຂດແດນກໍລ້ຽວ
ໄປເຖິງເມືອງໂຮຊາໄປສິ້ນສຸດລົງທີ່ທະເລ ຈາກເມືອງມາຮາລັບໄປເຖິງອັກຊີບ

30 ອູມມາ ອາເຟກ ແລະເຣໂຮບ ຮວມເປັນຊາວສອງຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

31 ນີ້ເປັນມໍຣະດົກຂອງເຜົ່າອາເຊີຕາມຕະກູນຂອງເຂົາ ທັງຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

**ດິນແດນທີ່ແບ່ງໃຫ້ແກ່ເຜົ່າເນັຟທາລີ**

The Territory of Naphtali

32 ສລາກທີຫົກອອກມາເປັນຂອງເຜົ່າເນັຟທາລີ ເພື່ອເຜົ່າເນັຟທາລີຕາມຕະກູນຂອງເຂົາ

33 ເຂດແດນຂອງເຂົາເລີ່ມຈາກເຮເລຟ ຈາກຕົ້ນໂອກໃນຊາອານານນິມ ແລະອາດາມີເນເກບ ແລະຢັບເນເອນ
ໄກໄປຈົນເຖິງເມືອງລາກກູມ ແລະສິ້ນສຸດລົງທີ່ແມ່ນໍ້າຈໍແດນ

34 ແລ້ວເຂດແດນກໍລ້ຽວໄປທາງດ້ານຕາເວັນຕົກເຖິງເມືອງອັສໂນທຕາໂບຣ໌ ຈາກທີ່ນັ້ນໄປເຖິງຮູກໂກກຕິດເຂດ
ເຊບູລູນທາງທິດໃຕ້ ແລະເຂດເອເຊີທາງທິດຕາເວັນຕົກ ແລະເຂດຢູດາທາງທິດຕາເວັນອອກທີ່ແມ່ນໍ້າຈໍແດນ

35 ເມືອງທີ່ມີກຳແພງຄືເມືອງຊິດດິມ ເຊີຮາມມາດ ຮັກກາດ ຄິນເນເຣທ

36 ອາດາມາດ ຣາມາ ຮາໂຊຣ໌

37 ເກເດສ ເອັດເຣອີ ເອນຮາໂຊຣ໌

38 ອີໂຣນ ມິກດັນເອນ ໂຮເຣມ ເບັດອານາດ ແລະເບັດເຊເມສ ຮວມເປັນສິບເກົ້າຫົວເມືອງກັບຊົນນະບົດຂອງ
ເມືອງນັ້ນດ້ວຍ

39 ນີ້ເປັນມໍຣະດົກຂອງເຜົ່າເນັຟທາລີຕາມຕະກູນຂອງເຂົາ ທັງຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

**ດິນແດນທີ່ແບ່ງໃຫ້ແກ່ເຜົ່າດານ**

The Territory of Dan

40 ສລາກທີເຈັດກໍອອກມາເປັນຂອງເຜົ່າດານຕາມຕະກູນຂອງເຂົາ

41 ແລະດິນແດນທີ່ເປັນມໍຣະດົກຂອງເຂົາ ຮວມເມືອງໂຊຣາ ເອສຕາໂອນ ອີຣ໌ເຊເມສ

42 ຊາອາລັບບິນ ອັຍຢາໂລນ ອີທລາ

43 ເອໂລນ ຕິມນາ ເອກໂຣນ

44 ເອນໂຣເກ ກິບເບໂທນ ບາອາລາດ

45 ເຢຮູດ ເບນເອເບຣັກ ກັທຣິມໂມນ

46 ເມຢາຣ໌ໂກນ ແລະຣັກໂກນ ແລະດິນແດນທີ່ອ້ອມແອ້ມເມືອງໂຢປປາ

47 ເມື່ອດິນແດນຄົນເຜົ່າດານຫລຸດມືເຂົາໄປ ຄົນເຜົ່າດານກໍຂຶ້ນໄປສູ້ຮົບກັບເມືອງເລເຊມ ເມື່ອຍຶດໄດ້ກໍປະຫານ
ເສັຽດ້ວຍດາບ ຈຶ່ງຍຶດຄອງທີ່ດິນແລະຕັ້ງຢູ່ທີ່ນັ້ນເອີ້ນເມືອງເລເຊມວ່າດານ ຕາມຊື່ຂອງດານບັນພະບຸຣຸດຂອງ
ຕົນ
48 ນີ້ເປັນມໍຣະດົກຂອງເຜົ່າດານຕາມຕະກູນຂອງເຂົາ ທັງຫົວເມືອງກັບຊົນນະບົດຂອງເມືອງນັ້ນດ້ວຍ

**ດິນແດນທີ່ແບ່ງໃຫ້ແກ່ໂຢຊວຍ**

Joshua’s Inheritance

49 ເມື່ອໄດ້ແບ່ງດິນແດນສ່ວນຕ່າງໆຂອງແຜ່ນດິນນັ້ນເປັນມໍຣະດົກເສັດສິ້ນແລ້ວ ຄົນອິສຣາເອນກໍໄດ້ມອບສ່ວນ
ມໍຣະດົກໃນຫມູ່ພວກເຂົາໃຫ້ແກ່ໂຢຊວຍບຸດນູນ
50 ຕາມຄໍາສັ່ງຂອງພຣະຜູ້ເປັນເຈົ້າ ເຂົາກໍໄດ້ຍົກເມືອງທີ່ທ່ານຂໍໄວ້ໃຫ້ແກ່ທ່ານ ຄືເມືອງຕິມນັທເຊຣາ ໃນພູດອຍ
ແຫ່ງເອຟຣາອິມ ທ່ານກໍເສີມສ້າງເມືອງນັ້ນເສັຽໃຫມ່ ແລະເຂົ້າຢູ່ທີ່ນັ້ນ
51 ທີ່ກ່າວມານີ້ເປັນມໍຣະດົກທີ່ປະໂຣຫິດເອເລອາຊາກັບໂຢຊວຍບຸດນູນແລະຫົວຫນ້າຂອງຕະກູນຕ່າງໆແຫ່ງເຜົ່າ
ຄົນອິສຣາເອນຈັບສລາກແບ່ງໃຫ້ເປັນມໍຣະດົກທີ່ຊີໂລຕໍ່ພຣະພັກພຣະຜູ້ເປັນເຈົ້າໃນປະຕູເຕັນນັດພົບ ດັ່ງນີ້
ແຫລະເຂົາທັງຫລາຍກໍທໍາການແບ່ງປັນແຜ່ນດິນສໍາເຣັດລົງ

## 20 ກໍານົດຫົວເມືອງລີ້ພັຍ

The Cities of Refuge

(ຈບຊ 35:9-28; ພບຍ 4:41-43;19:1-13)

1 ແລ້ວພຣະຜູ້ເປັນເຈົ້າກ່າວກັບໂຢຊວຍວ່າ,
2 “ຈົ່ງກ່າວແກ່ຄົນອິສຣາເອນວ່າ “ຈົ່ງກໍານົດຕັ້ງເມືອງລີ້ພັຍ ຊຶ່ງເຮົາໄດ້ເວົ້າກັບເຈົ້າທັງຫລາຍທາງໂມເຊແລ້ວນັ້ນ
3 ເພື່ອວ່າຜູ້ຂ້າຄົນທີ່ໄດ້ຂ້າຄົນໃດດ້ວຍບໍ່ໄດ້ເຈຕນາ ຫລືບໍ່ຈິງໃຈຈະໄດ້ຫນີໄປຢູ່ທີ່ນັ້ນ ເມືອງເຫລົ່ານີ້ຈະໄດ້ເປັນ
ທີ່ລີ້ພັຍຂອງເຈົ້າເພື່ອໃຫ້ພົ້ນຈາກຜູ້ອາຄາດ
4 ໃຫ້ຜູ້ນັ້ນຫນີໄປຍັງເມືອງເຫລົ່ານີ້ເມືອງໃດເມືອງນຶ່ງ ແລະຢືນຢູ່ທ່າງທາງປະຕູເຂົ້າເມືອງນັ້ນ ແລະອະທິບາຍ
ເຣື່ອງຂອງຕົນໃຫ້ແກ່ພວກຜູ້ໃຫຍ່ໃນເມືອງນັ້ນໃຫ້ຮູ້ ແລ້ວເຂົາທັງຫລາຍຈະນໍາຜູ້ນັ້ນເຂົ້າໄປໃນເມືອງກໍານົດ
ບ່ອນໃຫ້ຢູ່ແລ້ວຜູ້ນັ້ນຈະຢູ່ທີ່ນັ້ນໃນຫມູ່ພວກເຂົາທັງຫລາຍ
5 ແລະຖ້າຜູ້ອາຄາດໄລ່ຕິດຕາມເຂົາໄປຜູ້ໃຫຍ່ຈະບໍ່ມອບຜູ້ຂ້າຄົນນັ້ນໄວ້ໃນມືຂອງຜູ້ອາຄາດ ເພາະວ່າຜູ້ນັ້ນໄດ້
ຂ້າເພື່ອນບ້ານຂອງຕົນດ້ວຍບໍ່ມີເຈຕນາບໍ່ໄດ້ເປັນເປັນສັດຕຣູກັນມາແຕ່ກ່ອນ
6 ແລະຜູ້ນັ້ນຈະອາສັຍຢູ່ໃນເມືອງນັ້ນຈົນກວ່າເຂົາຈະຢືນຕໍ່ຫນ້າຊຸມນຸມຊົນ ເພື່ອລໍຮັບການພິພາກສາ ຈົນກວ່າ
ປະໂຣຫິດໃນເວລານັ້ນສິ້ນຊີວິດ ຜູ້ຂ້າຄົນນັ້ນຈຶ່ງຈະກັບໄປຍັງເມືອງຂອງຕົນ ໄປບ້ານຂອງຕົນ ໄປຍັງເມືອງທີ່
ເຂົາຈາກມານັ້ນໄດ້”
7 ດັ່ງນັ້ນເຂົາຈຶ່ງກໍານົດຕັ້ງເມືອງເກເດສໃນຄາລີເລ ໃນພູດອຍເນັຟທາລີ ແລະເມືອງເຊເຄມ ໃນພູດອຍຂອງເອຟ
ຣາອິມ ແລະກີຣິອາດອາຣາບາ (ຄືເຮໂບຣນ) ໃນແດນພູດອຍຢູດາ
8 ທາງຟາກຕາເວັນອອກຂອງແມ່ນໍ້າຈໍແດນເມືອງເຢຣີໂກນັ້ນ ເຂົາໄດ້ກໍານົດເມືອງເບເຊີໃນຖິ່ນກັນດານເທິງທີ່
ຮາບພຽງຈາກທີ່ດິນຄົນເຜົ່າຣູເບນ ແລະເມືອງຣາໂມທໃນກີເລອາດຈາກທີ່ດິນເຜົ່າກາດແລະເມືອງໂກລານໃນ
ບາຊານຈາກທີ່ດິນຄົນເຜົ່າມານັສເຊ
9 ຫົວເມືອງເຫລົ່ານີ້ເປັນເມືອງທີ່ກໍານົດໄວ້ໃຫ້ຄົນອິສຣາເອນທັງຫມົດ ແລະໃຫ້ຄົນຕ່າງດ້າວຜູ້ອາສັຍຢູ່ໃນຫມູ່
ພວກເຂົາ ເພື່ອວ່າຖ້າຜູ້ໃດໄດ້ຂ້າຄົນດ້ວຍບໍ່ໄດ້ເຈຕນາຈະໄດ້ຫນີໄປທີ່ນັ້ນໄດ້ ເພື່ອວ່າເຂົາຈະບໍ່ຕ້ອງຕາຍດ້ວຍ
ມືຂອງຜູ້ອາຄາດຈົນກວ່າເຂົາຈະໄດ້ຢືນຕໍ່ຫນ້າຊຸມນຸມຊົນ

## 21 ຫົວເມືອງຂອງຄົນເລວີ

Cities Allotted to The Levites

(1 ຂຄວ 6:54-81)

1 ຂນະນັ້ນຫົວຫນ້າຂອງຕະກູນຄົນເລວີມາຫາປະໂຣຫິດເອເລອາຊາ ແລະໂຢຊວຍບຸດນູນ ແລະຫົວຫນ້າຂອງ
ຕະກູນຕ່າງໆຂອງເຜົ່າຄົນອິສຣາເອນ
2 ແລະເຂົາໄດ້ກ່າວແກ່ທ່ານເຫລົ່ານັ້ນໃນເມືອງຊີໂລໃນແຜ່ນດິນການາອານວ່າ, “ພຣະຜູ້ເປັນເຈົ້າຊົງສັ່ງໂດຍ
ທາງໂມເຊວ່າ ໃຫ້ມອບຫົວເມືອງແກ່ເຮົາທັງຫລາຍເພື່ອຈະໄດ້ອາສັຍຢູ່ທັງທົ່ງຫຍ້າສຳລັບຝູງສັດຂອງຂ້າພະ
ເຈົ້າທັງຫລາຍ”
3 ດັ່ງນັ້ນແຫລະຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າ ຄົນອິສຣາເອນຈຶ່ງໄດ້ມອບເມືອງແລະທົ່ງຫຍ້າຕໍ່ໄປນີ້ຈາກ
ມໍຣະດົກ  ຂອງເຂົາໃຫ້ແກ່ຄົນເລວີ
4 ສລາກອອກມາເປັນຂອງຕະກູນຄົນໂກຮາດ ດັ່ງນັ້ນແຫລະ ຄົນເລວີຊຶ່ງເປັນເຊື້ອສາຍຂອງປະໂຣຫິດອາໂຣນ
ໄດ້ຮັບຫົວເມືອງໂດຍຈັບສລາກສິບສາມຫົວເມືອງ ຈາກເຜົ່າຢູດາ ຊີເມໂອນ ແລະເບັນຢາມິນ
5 ສ່ວນຄົນໂກຮາດທີ່ເຫລືອຢູ່ ໄດ້ຮັບຫົວເມືອງໂດຍຈັບສລາກສິບຫົວເມືອງ ຈາກຕະກູນຂອງເຜົ່າເອຟຣາອິມ ຈ
າກເຜົ່າດານ ແລະຈາກເຄິ່ງເຜົ່າມານັສເຊ
6 ຄົນເກີໂຊນໄດ້ຮັບຫົວເມືອງໂດຍຈັບສຫລາກສິບສາມຫົວເມືອງ ຈາກຕະກູນຂອງເຜົ່າອິສຊາຄາ ຈາກເຜົ່າອາ
ເຊີ ຈາກເຜົ່າເນັຟທາລີ ແລະຈາກເຄິ່ງເຜົ່າມານັສເຊໃນບາຊານ
7 ຄົນເມຣາຣີຕາມຕະກູນຂອງເຂົາ ໄດ້ຮັບຫົວເມືອງສິບສອງຫົວເມືອງ ຈາກເຜົ່າຣູເບນ ເຜົ່າກາດ ແລະເຜົ່າເຊບູ
ລູນ
8 ຫົວເມືອງແລະທົ່ງຫຍ້າເຫລົ່ານີ້ຄົນອິສຣາເອນໄດ້ຈັບສລາກໃຫ້ແກ່ຄົນເລວີດັ່ງທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ໂດຍ
ໂມເຊ
9 ເຂົາໃຫ້ຫົວເມືອງຕໍ່ໄປນີ້ຈາກເຜົ່າຢູດາ ແລະເຜົ່າຊີເມໂອນ ຕາມຊື່ດັ່ງນີ້
10 ເມືອງເຫລົ່ານີ້ຕົກເປັນຂອງເຊື້ອສາຍອາໂຣນຄື ຕະກູນໂກຮາດຕະກູນນຶ່ງ ຊຶ່ງເປັນຄົນເລວີເພາະສລາກຕົກເປັນ
ຂອງເຂົາກ່ອນ
11 ເຂົາທັງຫລາຍໃຫ້ເມືອງກີຣິອາດອາຣາບາແກ່ເຂົາ ອາຣາບາເປັນບິດາຂອງອານາກ (ຄືເມືອງເຮໂບຣນ) ຢູ່ໃນ
ແດນພູດອຍຂອງຢູດາ
12 ແຕ່ທົ່ງນາແລະຊົນນະບົດຂອງເມືອງນີ້ໄດ້ຍົກໃຫ້ແກ່ກາເລັບບຸດເຢຟຸນເນເປັນກຳມະສິດ
13 ເຂົາໄດ້ໃຫ້ເມືອງເຮໂບຣນແກ່ເຊື້ອສາຍປະໂຣຫິດອາໂຣນ ອັນເປັນເມືອງລີ້ພັຍສຳລັບຜູ້ຂ້າຄົນພ້ອມທັງທົ່ງ
ຫຍ້າຮອບເມືອງ ເມືອງລິບນາພ້ອມທັງທົ່ງຫຍ້າ
14 ເມືອງຢັດຕີຣ໌ພ້ອມທົ່ງຫຍ້າ ເມືອງເອັສເຕໂມອາພ້ອມທົ່ງຍ້າ
15 ໂຮໂລນພ້ອມທົ່ງຫຍ້າ ເດບີຣ໌ພ້ອມທົ່ງຫຍ້າ
16 ອາອີນພ້ອມທົ່ງຫຍ້າ ຢູດຕາພ້ອມທົ່ງຫຍ້າ ແລະເບດເຊເມສພ້ອມທົ່ງຫຍ້າ ຮວມເປັນເກົ້າຫົວເມືອງຈາກສອງ
ເຜົ່ານີ້
17 ຈາກເຜົ່າເບັນຢາມິນ ມີເມືອງກິເບໂອນພ້ອມທົ່ງຫຍ້າ ເກບາພ້ອມທົ່ງຫຍ້າ
18 ອານາໂທດພ້ອມທົ່ງຫຍ້າ ແລະອັນໂມນພ້ອມທົ່ງຫຍ້າ ຮວມສີ່ຫົວເມືອງ
19 ຫົວເມືອງທີ່ເປັນຂອງເຊື້ອສາຍປະໂຣຫິດອາໂຣນ ຮວມກັນສິບສາມຫົວເມືອງພ້ອມກັບທົ່ງຫຍ້າຮອບທຸກເມືອງ

20 ສ່ວນຄົນໂກຮາດທີ່ເຫລືອຢູ່ຊຶ່ງເປັນຕະກູນຄົນໂກຮາດຂອງຄົນເລວີນັ້ນ ຫົວເມືອງທີ່ເຂົາໄດ້ຮັບໂດຍສລາກມາຈາກເຜົ່າເອຟຣາອິມ

21 ເມືອງທີ່ເຂົາໃຫ້ ຄືເມືອງເຊເຄມເປັນເມືອງລີ້ພັຍຂອງຜູ້ຂ້າຄົນພ້ອມທົ່ງຫຍ້າໃນພູດອຍຂອງເອຟຣາອິມ ເມືອງເກເຊີພ້ອມທົ່ງຫຍ້າ

22 ເມືອງກິບຊາອິມພ້ອມທົ່ງຫຍ້າ ແລະເບັດໂຮໂລນພ້ອມທົ່ງຫຍ້າ ຮວມສີ່ເມືອງ

23 ແລະຈາກເຜົ່າດານມີເມືອງເອນເຕເກພ້ອມທົ່ງຫຍ້າ ກິບເບໂທນພ້ອມທົ່ງຫຍ້າ

24 ອັຍຢາໂລນພ້ອມທົ່ງຫຍ້າ ກັທຣິມໂມນພ້ອມທົ່ງຫຍ້າ ຮວມສີ່ຫົວເມືອງ

25 ແລະຈາກຄົນມານັສເຊເຄິ່ງເຜົ່າມີເມືອງຕາອານາກພ້ອມທົ່ງຫຍ້າ ແລະກັທຣິມໂມນພ້ອມທົ່ງຫຍ້າ ຮວມສອງຫົວເມືອງ

26 ຫົວເມືອງຊຶ່ງເປັນຂອງຄົນໂກຮາດທີ່ເຫລືອຢູ່ນັ້ນ ມີສິບຫົວເມືອງດ້ວຍກັນ ພ້ອມທົ່ງຫຍ້າປະຈຳເມືອງ

27 ເຂົາໃຫ້ຫົວເມືອງຈາກຄົນມານັສເຊເຄິ່ງເຜົ່າແກ່ຄົນເກີໂຊນ ຕະກູນນຶ່ງຂອງຄົນເລວີ ຄືເມືອງໂກລານໃນບາຊານພ້ອມທົ່ງຫຍ້າເປັນເມືອງລີ້ພັຍຂອງຜູ້ຂ້າຄົນ ແລະເມືອງເລເອັສເຕຣາພ້ອມທົ່ງຫຍ້າ

28 ແລະຈາກເຜົ່າອິສຊາຄາມີເມືອງກິສໂອນພ້ອມທົ່ງຫຍ້າ ດາເບຣັທພ້ອມທົ່ງຫຍ້າ

29 ຢາຣ໌ມູທພ້ອມທົ່ງຫຍ້າ ເອນການນິມພ້ອມທົ່ງຫຍ້າ ຮວມສີ່ຫົວເມືອງ

30 ແລະຈາກເຜົ່າອາເຊີມີເມືອງມີຊານພ້ອມທົ່ງຫຍ້າ ອັບໂດນພ້ອມທົ່ງຫຍ້າ

31 ເຮນກັທພ້ອມທົ່ງຫຍ້າ ແລະເຣໂຮບພ້ອມທົ່ງຫຍ້າ ຮວມສີ່ຫົວເມືອງ

32 ແລະຈາກເຜົ່ານັບທາລີເມືອງກາເດສໃນຄາລີເລພ້ອມທົ່ງຫຍ້າ ເມືອງລີ້ພັຍຂອງຜູ້ຂ້າຄົນ ເມືອງຮັມໂມທໂດຣ໌ພ້ອມທົ່ງຫຍ້າ ແລະກາຣ໌ຕານພ້ອມທົ່ງຫຍ້າ ຮວມສາມຫົວເມືອງ

33 ຫົວເມືອງທີ່ເປັນຂອງຄົນເກີໂຊນຫລາຍຕະກູນນັ້ນ ຮວມກັນມີສິບສາມຫົວເມືອງພ້ອມທົ່ງຫຍ້າ

34 ເຂົາໃຫ້ຫົວເມືອງຈາກເຜົ່າເຊບູລູນແກ່ຕະກູນຄົນເມຣາຣີ ຄືຄົນເລວີທີ່ເຫລືອຢູ່ ມີເມືອງໂຢກເນອາມພ້ອມທົ່ງຫຍ້າ ກາຣ໌ຕາພ້ອມທົ່ງຫຍ້າ

35 ດິມນາພ້ອມທົ່ງຫຍ້າ ນາຮັນອານພ້ອມທົ່ງຫຍ້າ ຮວມສີ່ຫົວເມືອງ

36 ແລະຈາກເຜົ່າຣູເບນມີເມືອງເບເຊີພ້ອມທົ່ງຫຍ້າ ຢາຊາພ້ອມທົ່ງຫຍ້າ

37 ເກເດໂມທພ້ອມທົ່ງຫຍ້າ ແລະເມຟາອາດພ້ອມທົ່ງຫຍ້າ ຮວມສີ່ຫົວເມືອງ

38 ແລະຈາກເຜົ່າກາດມີເມືອງຣາໂມທໃນກີເລອາດພ້ອມທົ່ງຫຍ້າ ເປັນເມືອງລີ້ພັຍຂອງຜູ້ຂ້າຄົນ ເມືອງມາຮານາອິມພ້ອມທົ່ງຫຍ້າ

39 ເມືອງເຮສໂບນພ້ອມທົ່ງຫຍ້າ ຢາເຊີພ້ອມທົ່ງຫຍ້າ ຮວມທັງຫມົດເປັນສີ່ຫົວເມືອງ

40 ເມືອງຊຶ່ງເປັນຂອງຄົນເມຣາຣີຕາມຕະກູນ ຊຶ່ງເປັນຕະກູນຂອງຄົນເລວີທີ່ເຫລືອຢູ່ນັ້ນ ເມືອງທີ່ເປັນສ່ວນແບ່ງຂອງເຂົາທັງຫມົດມີສິບສອງຫົວເມືອງ

41 ຫົວເມືອງຂອງຄົນເລວີ ຊຶ່ງຢູ່ຖ້າມກາງກຳມະສິດຂອງຄົນອິສຣາເອນນັ້ນ ຮວມທັງຫມົດມີສີ່ສິບແປດຫົວເມືອງພ້ອມທົ່ງຫຍ້າປະຈຳເມືອງ

42 ເມືອງເຫລົ່ານີ້ແຕ່ລະເມືອງມີທົ່ງຫຍ້າລ້ອມຮອບ ທຸກເມືອງກໍມີຢ່າງນີ້

43 ດັ່ງນີ້ແຫລະ ພຣະຜູ້ເປັນເຈົ້າປະທານແຜ່ນດິນທັງສິ້ນແກ່ຄົນອິສຣາເອນດັ່ງທີ່ພຣະອົງຊົງສັນຍາວ່າຈະໃຫ້ແກ່ບັນພະບຸຣຸດຂອງເຂົາ ເມື່ອເຂົາທັງຫລາຍຍຶດແລ້ວກໍເຂົ້າໄປຕັ້ງບ້ານເມືອງຢູ່ທີ່ນັ້ນ

44 ແລະພຣະຜູ້ເປັນເຈົ້າປະທານໃຫ້ເຂົາມີຄວາມສງົບຢູ່ທຸກດ້ານ ດັ່ງທີ່ພຣະອົງຊົງສັນຍາໄວ້ກັບບັນພະບຸຣຸດຂອງເຂົາ ບໍ່ມີສັດຕຣູຈັກຄົນນຶ່ງຢືນຢັດຕໍ່ສູ້ເຂົາໄດ້ ພຣະຜູ້ເປັນເຈົ້າຊົງມອບສັດຕຣູຂອງເຂົາໃຫ້ຢູ່ໃນກຳມືຂອງເຂົາທັງສິ້ນແລ້ວ

45 ສັບພະສິ່ງອັນດີທຸກຢ່າງຊຶ່ງພຣະຜູ້ເປັນເຈົ້າຊົງສັນຍາຕໍ່ປະຊາຊົນອິສຣາເອນນັ້ນກໍບໍ່ຂາດຈັກສິ່ງດຽວສຳເຣັດທັງສິ້ນ

## 22 ແທ່ນຂ້າງແມ່ນ້ຳຈໍແດນ

The Eastern Tribes Return to their Territory

1 ເມື່ອນັ້ນໂຢຊວຍໄດ້ເອີ້ນຄົນຣູເບນ ຄົນກາດ ຄົນມານັສເຊເຄິ່ງເຜົ່າມາ

2 ແລະກ່າວແກ່ເຂົາທັງຫລາຍວ່າ, "ທ່ານທັງຫລາຍໄດ້ທຳທຸກຢ່າງຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າສັ່ງທ່ານໄວ້ ແລະໄດ້ຟັງສຽງຂອງຂ້າພະເຈົ້າໃນສາຣະພັດຊຶ່ງຂ້າພະເຈົ້າໄດ້ສັ່ງທ່ານ

3 ຕລອດມາແຕ່ໃດໆ ທ່ານບໍ່ໄດ້ປະຖິ້ມຍາດພີ່ນ້ອງຂອງທ່ານ ແຕ່ໄດ້ລະມັດລະວັງທີ່ຈະກະທຳຕາມຄຳສັ່ງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ

4 ບັດນີ້ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ໂຜດໃຫ້ພີ່ນ້ອງຂອງທ່ານຢຸດພັກແລ້ວ ດັ່ງພຣະອົງຊົງສັນຍາໄວ້ກັບເຂົາ ເຫດສັນນີ້ທ່ານຈົ່ງກັບເມືອບ້ານຂອງທ່ານເຖີດ ໄປສູ່ແຜ່ນດິນຊຶ່ງທ່ານຖືກຳມະສິດຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຍົກໃຫ້ທ່ານທີ່ຟາກຕາເວັນອອກຂອງແມ່ນ້ຳຈໍແດນນັ້ນ

5 ແຕ່ຈົ່ງລະວັງໃຫ້ຫລາຍທີ່ຈະປະຕິບັດຕາມພຣະບັນຍັດ ແລະກົດຫມາຍຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າສັ່ງທ່ານໄວ້ ຄືທີ່ຈະຮັກພຣະຜູ້ເປັນເຈົ້າຂອງທ່ານ ແລະດຳເນີນໃນທາງທັງສິ້ນຂອງພຣະອົງ ແລະຮັກສາພຣະບັນຍັດຂອງພຣະອົງ ແລະຕິດພັນຢູ່ກັບພຣະອົງ ແລະບົວລະບັດພຣະອົງດ້ວຍສຸດຈິດສຸດໃຈຂອງທ່ານ"

6 ໂຢຊວຍຈຶ່ງໄດ້ອວຍພອນເຂົາ ແລະສົ່ງເຂົາກັບໄປຍັງບ້ານຂອງເຂົາທຸກຄົນ

7 ສ່ວນຄົນມານັສເຊເຄິ່ງເຜົ່ານັ້ນໂມເຊໄດ້ມອບໃຫ້ເຂົາຖືກຳມະສິດໃນເມືອງບາຊານ ແຕ່ອີກເຄິ່ງນຶ່ງນັ້ນໂຢຊວຍມອບໃຫ້ເຂົາມີກຳມະສິດຂ້າງຄຽງກັບພີ່ນ້ອງຂອງເຂົາທີ່ຟາກແມ່ນ້ຳຈໍແດນດ້ານຕາເວັນຕົກ ແລະເມື່ອໂຢຊວຍສົ່ງເຂົາກັບໄປບ້ານ ທ່ານໄດ້ອວຍພອນເຂົາ

8 ກ່າວແກ່ເຂົາວ່າ, "ຈົ່ງກັບໄປບ້ານຂອງທ່ານທັງຫລາຍພ້ອມກັບຊັບສິນບັດຮັ່ງມີ ມີຝູງສັດມາກມາຍ ມີເງິນ ທອງຄຳ ທອງສຳຣິດ ແລະເຫລັກ ແລະເຄື່ອງນຸ່ງຫລາຍຢ່າງ ຈົ່ງແບ່ງຂອງທີ່ຍຶດມາຈາກສັດຕຣູຂອງທ່ານໃຫ້ແກ່ພີ່ນ້ອງຂອງທ່ານ"

9 ຄົນຣູເບນ ຄົນກາດ ແລະຄົນມານັສເຊເຄິ່ງເຜົ່າໄດ້ແຍກຈາກຄົນອິສຣາເອນທີ່ຊີໂລ ຊຶ່ງຢູ່ໃນແຜ່ນດິນການາອານກັບໄປບ້ານຂອງຕົນຊຶ່ງຢູ່ໃນແຜ່ນດິນກີເລອາດ ເປັນແຜ່ນດິນຂອງເຂົາຊຶ່ງເຂົາໄດ້ເຂົ້າຕັ້ງຢູ່ຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າໂດຍໂມເຊ

A Memorial Altar East of the Jordan

10 ແລະເມື່ອເຂົາທັງຫລາຍມາເຖິງທ້ອງຖິ່ນທີ່ໃກ້ແມ່ນ້ຳຈໍແດນທີ່ຢູ່ໃນແຜ່ນດິນການາອານ ຄົນຣູເບນ ຄົນກາດ ແລະຄົນມານັສເຊເຄິ່ງເຜົ່າໄດ້ສ້າງແທ່ນບູຊາແທ່ນນຶ່ງທີ່ໃກ້ແມ່ນ້ຳຈໍແດນເປັນແທ່ນທີ່ໃຫຍ່

11 ແລະຄົນອິສຣາເອນໄດ້ຍິນຄົນເວົ້າກັນ "ເບິ່ງແມ່, ຄົນຣູເບນ ຄົນກາດ ແລະຄົນມານັສເຊເຄິ່ງເຜົ່າ ໄດ້ສ້າງແທ່ນບູຊາທີ່ເຂດແດນແຜ່ນດິນການາອານໃນທ້ອງຖິ່ນໃກ້ແມ່ນ້ຳຈໍແດນໃນດ້ານທີ່ເປັນຂອງຄົນອິສຣາເອນ"

12 ແລະເມື່ອຄົນອິສຣາເອນໄດ້ຍິນເຊັ່ນນັ້ນ ຊຸມນຸມຊົນອິສຣາເອນທັງຫມົດກໍໄປຮວມກັນທີ່ເມືອງຊີໂລ ເພື່ອຈະຂຶ້ນໄປທຳສົງ ຄາມກັບເຂົາ

13 ແລ້ວຄົນອິສຣາເອນຈຶ່ງໃຊ້ປະໂຣຫິດພີເນຮັສບຸດເອເລອາຊາໄປຫາຄົນຣູເບນ ຄົນກາດ ແລະຄົນມານັສເຊເຄິ່ງເຜົ່າໃນແຜ່ນດິນກີເລອາດ

14 ພ້ອມກັບເຈົ້ານາຍສິບຄົນ ຄົນນຶ່ງຈາກແຕ່ລະເຜົ່າໃນອິສຣາເອນ ທຸກຄົນເປັນຫົວຫນ້າຄອບຄົວໃນຕະກູນຂອງອິສຣາເອນ

15 ເມື່ອເຂົາມາເຖິງຄົນຣູເບນ ຄົນກາດ ແລະຄົນມານັສເຊເຄິ່ງເຜົ່າໃນແຜ່ນດິນກີເລອາດ ເຂົາກໍກ່າວແກ່ພວກ
ເຫລົ່ານັ້ນວ່າ,
16 “ຊຸມນຸມຊົນທັງປວງຂອງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເປັນຫຍັງທ່ານທັງຫລາຍຈຶ່ງກະທຳການທໍຣະຍົດເຊັ່ນ
ນີ້ຕໍ່ພຣະຜູ້ເປັນເຈົ້າຂອງອິສຣາເອນ ຊຶ່ງໃນວັນນີ້ທ່ານທັງຫລາຍໄດ້ຫັນກັບຈາກການຕິດຕາມພຣະຜູ້ເປັນເຈົ້າ
ໂດຍທ່ານໄດ້ສ້າງແທ່ນບູຊາສຳລັບຕົວເປັນການກະບົດຕໍ່ພຣະຜູ້ເປັນເຈົ້າໃນວັນນີ້
17 ການບາບຊຶ່ງເຮົາທຳທີ່ເມືອງເປໂອຣ໌ນັ້ນຍັງບໍ່ພຽງພໍຫລື ຊຶ່ງຈົນເຖິງວັນນີ້ເຮົາຍັງຊຳຣະຕົວຂອງເຮົາໃຫ້ສະອາດ
ບໍ່ຫມົດເລີຍ ແລະຊຶ່ງເປັນເຫດໃຫ້ພັຍວິບັດເກີດແກ່ຊຸມນຸມຊົນຂອງພຣະຜູ້ເປັນເຈົ້າ
18 ໃນວັນນີ້ທ່ານທັງຫລາຍຈະຫັນຫນີໄປຈາກການຕິດຕາມພຣະຜູ້ເປັນເຈົ້າຫລື ຖ້າທ່ານທັງຫລາຍກະບົດຕໍ່ພຣະ
ຜູ້ເປັນເຈົ້າໃນວັນນີ້ ພຣະອົງຈະຊົງພຣະພິໂຣດຕໍ່ຊຸມນຸມຊົນອິສຣາເອນທັງຫມົດໃນມື້ອື່ນ
19 ແຕ່ຖ້າແຜ່ນດິນຂອງທ່ານບໍ່ສະອາດຈົ່ງຂ້າມໄປໃນແຜ່ນດິນຂອງພຣະຜູ້ເປັນເຈົ້າຊຶ່ງເປັນທີ່ຕັ້ງແຫ່ງເຕັນສັກສິດ
ຂອງພຣະຜູ້ເປັນເຈົ້າ ແລະມາຖືກຳມະສິດຢູ່ຖ້າມກາງພວກເຮົາເຖີດ ຂໍແຕ່ພຽງຢ່າກະບົດຕໍ່ພຣະຜູ້ເປັນເຈົ້າ ຫລື
ກະບົດຕໍ່ເຮົາ ໂດຍທີ່ທ່ານທັງຫລາຍສ້າງແທ່ນບູຊາສຳລັບຕົວນອກຈາກແທ່ນບູຊາແຫ່ງພຣະຜູ້ເປັນເຈົ້າພຣະ
ເຈົ້າຂອງເຮົາທັງຫລາຍ
20 ອາຄານບຸດຂອງເຊຣາໄດ້ປະພຶດສັດໃນເຣື່ອງຂອງຖວາຍນັ້ນບໍ່ແມ່ນຫລື ພຣະພິໂຣດກໍຕົກເຫນືອຊຸມນຸມຊົນອິ
ສຣາເອນ ເຂົາບໍ່ໄດ້ພິນາດແຕ່ຄົນດຽວໃນເຣື່ອງກັມບາບຂອງເຂົາ”
21 ຂນະນັ້ນຄົນຣູເບນ ຄົນກາດ ແລະຄົນມານັສເຊເຄິ່ງເຜົ່າໄດ້ຕອບຫົວຫນ້າຂອງຕະກູນອິສຣາເອນວ່າ,“ອົງຜູ້ຊົງ
ຣິດອຳນາດ ຄືພຣະເຈົ້າພຣະຜູ້ເປັນເຈົ້າ ອົງຜູ້ຊົງມີຣິດອຳນາດ ຄືພຣະເຈົ້າພຣະຜູ້ເປັນເຈົ້າ ພຣະອົງຊົງຊາບ
ແລະອິສຣາເອນຈະຊາບເສັ້ງດ້ວຍ ຖ້າວ່າເປັນການກະບົດຫລືປະພຶດສັດຕໍ່ພຣະຜູ້ເປັນເຈົ້າກໍຂໍຢ່າໄວ້ຊີວິດພວກ
ເຮົາໃນວັນນີ້ເລີຍ
22 ທີ່ວ່າເຮົາໄດ້ສ້າງແທ່ນບູຊານັ້ນ ເພື່ອຫັນຫນີຈາກຕິດຕາມພຣະຜູ້ເປັນເຈົ້າ ຫລືພວກເຮົາໄດ້ສ້າງໄວ້ເພື່ອຖວາຍ
ເຄື່ອງເຜົາບູຊາ ຫລືທັນຍາບູຊາຫລືຖວາຍສັດເປັນສານຕິບູຊາເທິງແທ່ນນັ້ນ ຂໍພຣະຜູ້ເປັນເຈົ້າຊົງລົງໂທດເຖີດ
23 ບໍ່ເລີຍ ແຕ່ພວກເຮົາໄດ້ສ້າງໄວ້ດ້ວຍຢ້ານວ່າໃນເວລາຕໍ່ໄປພາຍຫນ້າພວກລູກຫລານຂອງທ່ານອາດຈະກ່າວຕໍ່
ລູກຫລານຂອງເຮົາວ່າ “ເຈົ້າມີສ່ວນກ່ຽວພັນຫຍັງກັບພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ
24 ເພາະວ່າພຣະຜູ້ເປັນເຈົ້າຊົງກຳນົດແມ່ນ້ຳຈໍແດນເປັນເຂດແດນລະຫວ່າງເຮົາກັບເຈົ້າທັງຫລາຍ ຄົນຣູເບນ
ແລະຄົນກາດເອີຍ ພວກເຈົ້າບໍ່ມີສ່ວນໃນພຣະຜູ້ເປັນເຈົ້າ” ດັ່ງນັ້ນແຫລະ ລູກຫລານຂອງທ່ານອາດຈະທຳໃຫ້
ລູກຫລານຂອງເຮົາທັງຫລາຍຢຸດຢ້ານກົວພຣະຜູ້ເປັນເຈົ້າ
25 ເພາະສະນັ້ນເຮົາຈຶ່ງວ່າ “ໃຫ້ເຮົາສ້າງແທ່ນບັດນີ້ບໍ່ແມ່ນສຳລັບຖວາຍເຄື່ອງເຜົາບູຊາຫລືເຄື່ອງສັຕບູຊາໃດໆ
26 ແຕ່ເພື່ອເປັນພຍານລະຫວ່າງເຮົາກັບທ່ານທັງຫລາຍ ແລະລະຫວ່າງຄົນຊົ່ວອາຍຸຕໍ່ຈາກເຮົາວ່າ ເຮົາທັງຫລາຍ
ຈະກະທຳການບົວລະບັດພຣະຜູ້ເປັນເຈົ້າຕໍ່ພຣະພັກຂອງພຣະອົງດ້ວຍເຄື່ອງເຜົາບູຊາ ແລະເຄື່ອງສັຕບູຊາ
ແລະເຄື່ອງສານຕິບູຊາ ດ້ວຍຢ້ານວ່າລູກຫລານຂອງທ່ານຈະກ່າວແກ່ລູກຫລານຂອງເຮົາໃນເວລາຕໍ່ໄປວ່າ
“ເຈົ້າບໍ່ມີສ່ວນໃນພຣະຜູ້ເປັນເຈົ້າ”
27 ແລະເຮົາຄິດວ່າຖ້າມີໃຜເວົ້າເຊັ່ນນີ້ກັບເຮົາ ຫລືກັບຊາດເຊື້ອຂອງເຮົາໃນເວລາຂ້າງຫນ້າ ເຮົາຈະກ່າວວ່າ “ເບິ່ງ
ແມ໋, ນັ້ນເປັນແທ່ນຈຳລອງຂອງແທ່ນແຫ່ງພຣະຜູ້ເປັນເຈົ້າ ປູ່ຍ່າຕາຍາຍຂອງເຮົາກະທຳໄວ້ບໍ່ແມ່ນເພື່ອຖວາຍ
ເຄື່ອງເຜົາບູຊາຫລືເຄື່ອງສານຕິບູຊາ ແຕ່ເພື່ອເປັນພຍານລະຫວ່າງເຮົາກັບທ່ານ”
28 ຂໍໃຫ້ເຣື່ອງນີ້ຫ່າງຈາກເຮົາເຖີດ ຄືທີ່ຈະກະບົດຕໍ່ພຣະຜູ້ເປັນເຈົ້າ ແລະຫັນຫນີຈາກຕິດຕາມພຣະຜູ້ເປັນເຈົ້າເສັ້ຽ
ໃນວັນນີ້ ໂດຍສ້າງແທ່ນອື່ນສຳລັບເຄື່ອງເຜົາບູຊາ ທັນຍາບູຊາ ເຄື່ອງສັຕບູຊາ ນອກຈາກແທ່ນພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຮົາຊຶ່ງຕັ້ງຢູ່ທີ່ຫນ້າຫໍເຕັນຂອງພຣະອົງ

29 ເມື່ອປະໂຣຫິດຟີເນຮັສ ແລະເຈົ້ານາຍຂອງຊຸມນຸມຊົນ ແລະຫົວໜ້າຕະກູນຂອງອິສຣາເອນທີ່ຢູ່ດ້ວຍກັນນັ້ນ
ໄດ້ຍິນຖ້ອຍຄຳທີ່ຄົນຣູເບນ ຄົນກາດແລະຄົນມານັສເຊກ່າວ ກໍຮູ້ສຶກເປັນທີ່ພໍໃຈຫລາຍ
30 ຟີເນຮັສບຸດຂອງປະໂຣຫິດເອເລອາຊາຈຶ່ງກ່າວວ່າ, "ວັນນີ້ເຮົາຮູ້ແລ້ວວ່າພຣະຜູ້ເປັນເຈົ້າຊົງສະຖິດຖ້າມກາງ
ພວກເຮົາ ເພາະທ່ານທັງຫລາຍບໍ່ໄດ້ກະທຳການທໍຣະຍົດຕໍ່ພຣະຜູ້ເປັນເຈົ້າ ທ່ານໄດ້ຊ່ອຍໃຫ້ຊົນອິສຣາເອນ
ພົ້ນຈາກພຣະຫັດຂອງ
ພຣະຜູ້ເປັນເຈົ້າ"
31 ແລ້ວຟີເນຮັສບຸດປະໂຣຫິດເອເລອາຊາ ແລະຜູ້ຫົວໜ້າທັງຫລາຍກໍກັບຈາກຄົນຣູເບນ ຄົນກາດຈາກແຜ່ນດິນ
ກີເລອາດໄປຍັງແຜ່ນດິນການາອານ ໄປຫາຄົນອິສຣາເອນແຈ້ງຂ່າວໃຫ້ເຂົາຮູ້
32 ຣາຍງານນັ້ນເປັນທີ່ພໍໃຈຄົນອິສຣາເອນ ແລະຄົນອິສຣາເອນກໍສັຣເສີນພຣະຜູ້ເປັນເຈົ້າ ແລະບໍ່ເວົ້າເຖິງເຣື່ອງທີ່
ຈະກະທຳສົງຄາມກັບເຂົາ ເພື່ອທຳລາຍແຜ່ນດິນຊຶ່ງຄົນຣູເບນ ຄົນກາດໄດ້ອາໄສຢູ່ນັ້ນອີກເລີຍ
33 ຄົນຣູເບນ ຄົນກາດ ເອີ້ນແທ່ນນັ້ນວ່າແທ່ນພຍານ ເຂົາກ່າວວ່າ ແທ່ນນັ້ນເປັນພຍານໃນລະຫວ່າງເຮົາ ວ່າພຣະ
ຜູ້ເປັນເຈົ້າເປັນພຣະເຈົ້າ

## 23 ໂຢຊວຍແນະນຳປະຊາຊົນ

Joshua Exhorts the People

1 ຫລັງຈາກພຣະຜູ້ເປັນເຈົ້າຊົງໂຜດໃຫ້ອິສຣາເອນຢູ່ຢ່າງສງົບສຸກກັບພວກສັດຕຣູທີ່ຢູ່ອ້ອມຮອບເປັນເວລາ
ເຫິງນານແລ້ວ ໂຢຊວຍກໍເຖົ້າແກ່ຫລາຍ
2 ທ່ານຈຶ່ງເອີ້ນພວກອິສຣາເອນທຸກຄົນ ຄືພວກເຖົ້າແກ່ ພວກຫົວໜ້າ ພວກຜູ້ຕັດສິນ ພວກເຈົ້າໜ້າທີ່ ແລະປະ
ຊາຊົນມາແລ້ວເວົ້າວ່າ, "ດຽວນີ້ ຂ້າພະເຈົ້າກໍເຖົ້າແກ່ຫລາຍແລ້ວ
3 ຝ່າຍພວກທ່ານກໍເຫັນທຸກໆສິ່ງທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກທ່ານໄດ້ຊົງກະທຳຕໍ່ຊົນຊາດທັງປວງເພື່ອ
ຊ່ອຍພວກທ່ານ ແມ່ນພຣະເຈົ້າເອງທີ່ທຳເສິກເພື່ອພວກທ່ານ
4 ຈົ່ງຟັງເທີ້ນ ຂ້າພະເຈົ້າໄດ້ຈັດເອົາດິນຂອງຊົນຊາດຕ່າງໆທີ່ຍຶດໄດ້ແລ້ວ ແລະທີ່ຍັງບໍ່ທັນຍຶດໄດ້ມອບໃຫ້ເປັນ
ສ່ວນຂອງຕະກູນທັງຫລາຍຂອງພວກທ່ານ ຊຶ່ງເປັນດິນລະຫວ່າງແມ່ນ້ຳຈໍແດນທາງຟາກຕາເວັນອອກ ກັບທະ
ເລເມດີເຕຣາເນທາງຕາເວັນຕົກ
5 ພຣະຜູ້ເປັນເຈົ້າຂອງພວກທ່ານຈະຊົງຂັບໄລ່ຊົນຊາດເຫລົ່ານັ້ນຖອຍໜີຈາກພວກທ່ານ ແລະພວກທ່ານຈະໄດ້
ແຜ່ນດິນ ຂອງເຂົາຕາມທີ່ພຣະອົງຊົງສັນຍາໄວ້
6 ດັ່ງນັ້ນຈົ່ງຕັ້ງໃຈແລະທຳຕາມທຸກໆສິ່ງທີ່ຂຽນໄວ້ໃນປື້ມພຣະທັມຂອງເຮົາ ຊຶ່ງໂມເຊໄດ້ສັ່ງໄວ້ ຢ່າປະຖິ້ມຂໍ້ນຶ່ງຂໍ້
ໃດເລີຍ
7 ເພື່ອວ່າພວກທ່ານຈະບໍ່ເຂົ້າສ່ວນກັບປະຊາຊາດຕ່າງໆທີ່ຢູ່ກັບພວກທ່ານ ຫລືຮ້ອງຫາພຣະຂອງເຂົາ ແລະສາ
ບານໃນນາມຂອງພຣະນັ້ນ ພ້ອມທັງບົວລະບັດຂາບໄຫວ້ມັນ
8 ຈົ່ງສັດຊື່ຕໍ່ພຣະຜູ້ເປັນເຈົ້າຂອງພວກທ່ານຕາມທີ່ເຄີຍປະຕິບັດມາແລ້ວຈົນເທົ່າທຸກວັນນີ້
9 ເພາະພຣະຜູ້ເປັນເຈົ້າຊົງໃຫ້ຊົນຊາດທີ່ສຳຄັນ ແລະແຂງແຮງໜີຈາກພວກທ່ານ ແລະຍັງບໍ່ທັນມີຜູ້ໃດສາມາດ
ຕໍ່ສູ້ພວກທ່ານໄດ້
10 ຄົນນຶ່ງໃນພວກທ່ານກໍສາມາດຂັບໄລ່ພັນຄົນອອກຈາກພວກທ່ານໄດ້ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ພວກທ່ານກໍທຳເສິກເພື່ອພວກທ່ານຕາມທີ່ພຣະອົງຊົງສັນຍາໄວ້
11 ຈົ່ງໝັ້ນໃຈໃນການຮັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
12 ຖ້າວ່າພວກທ່ານປະພຣະເຈົ້າ ແລະກັບຄືນຕິດຕໍ່ກັບຊົນຊາດທີ່ຢູ່ກັບພວກທ່ານ ແລະແຕ່ງງານກັບເຂົາ

13 ໃຫ້ພວກທ່ານຮູ້ໄວ້ຢ່າງແນ່ນອນວ່າ ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກທ່ານຈະບໍ່ຂັບໄລ່ພວກເຂົາຫນີຈາກ
ພວກທ່ານອີກຕໍ່ໄປ ພວກເຂົາຈະເປັນຄືບ້ວງແຮ້ວ ແລະຂຸມດັກຈັບໃຫ້ພວກທ່ານໄດ້ຮັບອັນຕະລາຍ ແລະເປັນ
ຄືໄມ້ແສ້ຂ້ຽນຫລັງ ຫລືສ້ຽນຢູ່ໃນຕາທີ່ທຳໃຫ້ພວກທ່ານໄດ້ຮັບຄວາມເຈັບປວດ ຈົນເຖິງພວກທ່ານຈະສູນສິ້ນ
ໄປຈາກແຜ່ນດິນອັນຈົບງາມນີ້ ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກທ່ານໄດ້ປະທານໃຫ້
14 ດຽວນີ້ ຂ້າພະເຈົ້າກໍຢູ່ໃນຂັ້ນຂອງຄວາມຕາຍແລ້ວ ທຸກໆຄົນກໍຮູ້ແກ່ຈິດໃຈແລ້ວວ່າ ພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງພວກທ່ານຊົງປະທານສິ່ງທີ່ດີໆທຸກຢ່າງໃຫ້ແກ່ພວກທ່ານຕາມທີ່ຊົງສັນຍາໄວ້ ແລະທຸກໆສິ່ງທີ່ພຣະອົງຊົງ
ສັນຍາໄວ້ບໍ່ມີຈັກຂໍ້ໃດທີ່ບໍ່ເປັນຄວາມຈິງ
15 ດຽວນີ້ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກທ່ານຊົງກະທຳສິ່ງທີ່ດີໆທຸກຢ່າງໃຫ້ຕາມທີ່ຊົງກ່າວໄວ້
16 ແຕ່ວ່າ ຖ້າພວກທ່ານບໍ່ຖືຮັກສາຄຳສັນຍາທີ່ພຣະອົງຊົງສັ່ງໄວ້ ໄປຮັບໃຊ້ ແລະຂາບໄຫວ້ພຣະອື່ນ ພຣະອົງຈະ
ຊົງລົງໂທດພວກທ່ານທຸກຄົນ ຈົນກວ່າທຸກໆຄົນຈະສູນສິ້ນໄປຈາກແຜ່ນດິນທີ່ຈົບງາມຊຶ່ງພຣະອົງຊົງປະທານ
ໃຫ້ແກ່ພວກທ່ານ"

## 24 ໂຢຊວຍແນະນຳພວກອິສຣາເອນທີ່ເມືອງ ເຊເຄມ

The Tribes Renew the Covenant

(ອພບ 24:9-18)

1 ຕໍ່ມາ ໂຢຊວຍໄດ້ເອີ້ນພວກຕະກູນອິສຣາເອນເຂົ້າມາໂຮມກັນຢູ່ເມືອງເຊເຄມ ທ່ານໄດ້ເອີ້ນເອົາພວກເຖົ້າແກ່
ພວກຫົວຫນ້າ ພວກຜູ້ຕັດສິນ ພວກເຈົ້າຫນ້າທີ່ ແລະປະຊາຊົນມາ ແລ້ວຈຶ່ງພາກັນໄປເຝົ້າພຣະເຈົ້າ
2 ໂຢຊວຍເວົ້າຕໍ່ຄົນເຫລົ່ານີ້ວ່າ, "ພຣະຜູ້ເປັນເຈົ້າຂອງພວກອິສຣາເອນຊົງກ່າວດັ່ງນີ້ ເປັນເວລາດົນນານແລ້ວ ປູ່
ຍ່າຕາຍາຍຂອງພວກເຈົ້າທີ່ຢູ່ຟາກແມ່ນ້ຳເອີຟຣາດເບື້ອງນັ້ນໄດ້ຂາບໄຫວ້ພຣະອື່ນເຕຣາຊຶ່ງເປັນບິດາຂອງອັບ
ຣາຮາມ ແລະນາໂຮກັບເປັນຜູ້ນຶ່ງທີ່ຮ່ວມຢູ່ນຳພວກປູ່ຍ່າຕາຍາຍນີ້
3 ດັ່ງນີ້ ເຮົາຈຶ່ງພາອັບຣາຮາມພໍ່ເຖົ້າຂອງພວກເຈົ້າອອກຈາກແຜ່ນດິນນັ້ນ ຂ້າມແມ່ນ້ຳເອີຟຣາດແລະໃຫ້ຜ່ານໄປ
ທົ່ວປະເທດການາອານ ເຮົາໄດ້ໃຫ້ເຊື້ອສາຍຂອງເຂົາທະວີຫລາຍຂຶ້ນ
4 ໂດຍໃຫ້ເຂົາມີບຸດຜູ້ນຶ່ງຊື່ວ່າ ອີຊາກ ແລະໄດ້ປະທານໃຫ້ອີຊາກ ຄືຢາໂຄບກັບເອຊາວ ຕໍ່ມາກໍມອບເຂດພູເຊີນາ
ອີໃຫ້ເປັນສ່ວນຂອງເອຊາວ ສ່ວນຢາໂຄບກັບລູກຫລານຂອງເຂົາໄດ້ລົງໄປທາງປະເທດເອຢິບ
5 ແລ້ວເຮົາໄດ້ສົ່ງໂມເຊ ແລະອາໂຣນໄປປະເທດເອຢິບ ແລະເຮົາໄດ້ນຳເອົາພັຍວິບັດອັນຍິ່ງໃຫຍ່ໄປສູ່ປະເທດ
ນັ້ນ ຕໍ່ມາເຮົາໄດ້ນຳພວກເຈົ້າອອກມາ
6 ແລະເຮົາໄດ້ພາພໍ່ແມ່ຂອງພວກເຈົ້າອອກມາຈາກປະເທດເອຢິບ ແລ້ວທຸກໆຄົນຈຶ່ງມາເຖິງທະເລໄມ້ອໍ້ ຝ່າຍ
ພວກເອຢິບກໍຂັບຣົດຮົບອອກໄລ່ຕິດຕາມພວກເຂົາຈົນເຖິງນ້ຳທະເລ
7 ເມື່ອພວກເຂົາອ້ອນວອນຮ້ອງຫາເຮົາ ເຮົາກໍບັນດານໃຫ້ຄວາມມືດຂັ້ນກາງລະຫວ່າງພວກເຂົາ ແລະພວກເອ
ຢິບ ແລະໃຫ້ນ້ຳທະເລໄຫລຖ້ວມພວກເອຢິບ ດັ່ງນີ້ ພວກເຈົ້າກໍເຫັນສິ່ງທີ່ເຮົາກະທຳຕໍ່ປະເທດເອຢິບແລ້ວ ຫລັງ
ຈາກນັ້ນ ພວກເຈົ້າໄດ້ອາໄສຢູ່ໃນຖິ່ນກັນດານເປັນເວລາດົນນານ
8 ແລ້ວເຮົາກໍນຳພວກເຈົ້າໄປສູ່ແຜ່ນດິນຂອງຊາວອາໂມຣິດ ທີ່ຢູ່ທາງທິດຕາເວັນອອກຂອງແມ່ນ້ຳຈໍແດນ ພວກ
ເຂົາຕໍ່ສູ້ພວກເຈົ້າ ແຕ່ເຮົາໃຫ້ພວກເຈົ້າຊະນະ ແລະຍຶດເອົາແຜ່ນດິນເຂົາ ແລ້ວເຮົາກໍທຳລາຍເຂົາຕໍ່ຫນ້າພວກ
ເຈົ້າ
9 ຕໍ່ມາ ບາລາກບຸດຂອງຊິບໂປຣ໌ ເຈົ້າຊີວິດຂອງປະເທດໂມອາບ ກໍໄດ້ຕໍ່ສູ້ພວກອິສຣາເອນເຂົາສົ່ງຄົນໄປບອກ
ບາລາອາມບຸດເບໂອຣ໌ໃຫ້ມາສາບແຊ່ງພວກເຈົ້າ

10 ແຕ່ວ່າ ເຮົາບໍ່ຍອມຟັງຄຳຂອງບາລາອາມ ດັ່ງນັ້ນບາລາອາມຈຶ່ງອວຍພອນພວກເຈົ້າ ແລະເຮົາຈຶ່ງໂຜດຊ່ວຍ
ພວກເຈົ້າໃຫ້ພົ້ນຈາກເງື້ອມມືຂອງບາລາກ
11 ແລ້ວພວກເຈົ້າພາກັນຂ້າມແມ່ນ້ຳຈໍແດນມາສູ່ເມືອງເຢຣິໂກ ຝ່າຍຊາວເມືອງເຢຣິໂກກໍຕໍ່ສູ້ພວກເຈົ້າ ແລະຍັງມີ
ພວກອື່ນທີ່ຕໍ່ສູ້ພວກເຈົ້າ ຄືຊາວອາໂມຣິດ ຊາວເປຣີສຊີ ຊາວການາອານ ຊາວຮິດຕີ ກີຣ໌ກາຊີ ຊາວຮີວີ ແລະ
ຊາວເຢບຸສ ແຕ່ເຮົາໄດ້ໃຫ້ພວກເຈົ້າຊະນະພວກເຂົາ
12 ເຮົາໄດ້ທຳໃຫ້ເຈົ້າຊີວິດອາໂມຣິດສອງຄົນຕົກສະທ້ານຢ້ານກົວ ແລະເຮົາໄດ້ຂັບໄລ່ເຂົາອອກໄປໂດຍທີ່ພວກ
ເຈົ້າບໍ່ໄດ້ຊະນະຍ້ອນດາບຫລືຫນ້າທະນູເລີຍ
13 ເຮົາໄດ້ໃຫ້ທີ່ດິນແກ່ພວກເຈົ້າ ໂດຍທີ່ພວກເຈົ້າບໍ່ໄດ້ຂຸດຄົ້ນຖາກຖາງ ແລະເອົາທິວເມືອງຕ່າງໆໃຫ້ ໂດຍທີ່
ພວກເຈົ້າບໍ່ໄດ້ກໍ່ສ້າງ ແຕ່ພວກເຈົ້າກໍອາໄສຢູ່ທີ່ນັ້ນ ແລະໄດ້ກິນຫມາກອະງຸ່ນ ຫມາກກອກ ໂດຍທີ່ພວກເຈົ້າບໍ່
ໄດ້ປູກຝັງ"
14 ໂຢຊວຍເວົ້າຕໍ່ໄປອີກວ່າ, "ຈົ່ງຂາບໄຫວ້ພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະອົງດ້ວຍຄວາມຈິງໃຈ ແລະດ້ວຍ
ຄວາມສັດຊື່ ຈົ່ງປະຖິ້ມພຣະຕ່າງໆທີ່ປູ່ຍ່າຕາຍາຍຂອງພວກທ່ານຂາບໄຫວ້ບົວລະບັດທີ່ຟາກຕາເວັນອອກ
ຂອງແມ່ນ້ຳຈໍແດນ ແລະໃນເອຢິບເສັຽ ແລ້ວທ່ານທັງຫລາຍຈົ່ງຮັບໃຊ້ພຣະຜູ້ເປັນເຈົ້າ
15 ຖ້າວ່າພວກທ່ານບໍ່ເຕັມໃຈຮັບໃຊ້ພຣະຜູ້ເປັນເຈົ້າ ຈົ່ງຕັດສິນໃຈໃນວັນນີ້ວ່າ ພວກທ່ານຈະຮັບໃຊ້ຜູ້ໃດ ຈະຮັບ
ໃຊ້ພຣະຊຶ່ງປູ່ຍ່າຕາຍາຍບົວລະບັດຢູ່ໃນທ້ອງຖິ່ນຟາກຕາເວັນອອກຂອງແມ່ນ້ຳເອີຟຣາດ ຫລືພຣະຂອງຄົນອາ
ໂມຣິດໃນແຜ່ນດິນຊຶ່ງທ່ານອາໄສຢູ່ນີ້ ແຕ່ວ່າ ຂ້າພະເຈົ້າແລະຄອບຄົວຂອງຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນ
ເຈົ້າ"
16 ພວກປະຊາຊົນຕອບວ່າ, "ພວກຂ້າພະເຈົ້າຈະບໍ່ຫນີຈາກພຣະຜູ້ເປັນເຈົ້າໄປຮັບໃຊ້ພຣະອື່ນ
17 ພຣະຜູ້ເປັນເຈົ້າຂອງພວກຂ້າພະເຈົ້າໄດ້ພາພໍ່ແມ່ ແລະພວກຂ້າພະເຈົ້າອອກຈາກການເປັນຂ້ອຍທາດຂອງປະ
ເທດເອຢິບ ແລະພວກຂ້າພະເຈົ້າໄດ້ເຫັນການກະທຳອັນຍິ່ງໃຫຍ່ຂອງພຣະອົງ ພຣະອົງຊົງຄຸ້ມຄອງພວກຂ້າພ
ະເຈົ້າທັງຫລາຍໃນທຸກໆປະເທດທີ່ພວກຂ້າພະເຈົ້າຜ່ານມາ
18 ພຣະຜູ້ເປັນເຈົ້າໄດ້ຊົງຂັບໄລ່ຊາວອາໂມຣິດ ທີ່ອາໄສຢູ່ໃນແຜ່ນດິນນັ້ນຫນີອອກໄປກ່ອນຫນ້າພວກຂ້າພະເຈົ້າ
ດັ່ງນັ້ນພວກຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ ເພາະພຣະອົງຊົງເປັນພຣະເຈົ້າຂອງພວກຂ້າພະເຈົ້າ"
19 ຝ່າຍໂຢຊວຍກໍເວົ້າຕໍ່ເຂົາວ່າ, "ພວກທ່ານອາດຮັບໃຊ້ພຣະຜູ້ເປັນເຈົ້າບໍ່ໄດ້ ເພາະພຣະອົງບໍຣິສຸດ ແລະຊົງເປັນ
ພຣະເຈົ້າທີ່ຫວງແຫນພວກທ່ານ ພຣະອົງຈະບໍ່ຊົງໃຫ້ອະພັຍບາບ ແລະຄວາມຜິດຂອງພວກທ່ານ
20 ຖ້າພວກທ່ານປະຖິ້ມພຣະຜູ້ເປັນເຈົ້າ ໄປຮັບໃຊ້ພຣະທັງຫລາຍຂອງຕ່າງປະເທດ ພຣະອົງຈະຊົງກັບຄືນມາຕໍ່ສູ້
ແລະລົງໂທດພວກທ່ານ ພຣະອົງຈະທຳລາຍພວກທ່ານ ເຖິງແມ່ນວ່າພຣະອົງຊົງທຳດີຕໍ່ພວກທ່ານມາແລ້ວກໍ
ຕາມ"
21 ພວກປະຊາຊົນຈຶ່ງເວົ້າຕໍ່ໂຢຊວຍວ່າ, "ບໍ່ແມ່ນ ພວກຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ"
22 ໂຢຊວຍກໍບອກເຂົາວ່າ, "ພວກທ່ານຮັບຮອງໄດ້ບໍ່ວ່າ ພວກທ່ານໄດ້ເລືອກເອົາເສັ້ນທາງຮັບໃຊ້ພຣະຜູ້ເປັນເຈົ້າ"
ພວກເຂົາຕອບວ່າ, "ໂດຍ ຂ້າພະເຈົ້າຮັບຮອງໄດ້"
23 ໂຢຊວຍເວົ້າຕໍ່ໄປວ່າ, "ດັ່ງນັ້ນ ຈົ່ງປະຖິ້ມພຣະຂອງພວກຕ່າງປະເທດທີ່ຢູ່ຖ້າມກາງພວກທ່ານເທີນ ແລະຈົ່ງຕິດ
ຕາມພຣະຜູ້ເປັນເຈົ້າຂອງພວກອິສຣາເອນດ້ວຍຄວາມສັດຊື່"
24 ຝ່າຍປະຊາຊົນໄດ້ເວົ້າຕໍ່ໂຢຊວຍວ່າ, "ພວກຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າຂອງພວກຂ້າພະເຈົ້າ ແລະ
ຈະຟັງຄຳສັ່ງຂອງພຣະອົງ"
25 ດັ່ງນັ້ນ ໂຢຊວຍຈຶ່ງທຳຄຳຫມັ້ນສັນຍາກັບພວກເຂົາໃນວັນນັ້ນ ແລະໄດ້ມອບກົດຫມາຍກັບຂໍ້ຄຳສັ່ງແກ່ເຂົາຢູ່ທີ່
ເມືອງເຊເຄມ

26 ໂຢຊວຍຈຶ່ງບັນທຶກຂໍ້ຄຳສັ່ງເຫລົ່ານັ້ນໃສ່ປື້ມພຣະທັມຂອງພຣະຜູ້ເປັນເຈົ້າ ທ່ານກໍເອົາກ້ອນຫີນໃຫຍ່ກ້ອນນຶ່ງ
ຕັ້ງຂຶ້ນຢູ່ຮີ່ມຕົ້ນກໍ່ໃນບ່ອນສັກສິດຂອງພຣະຜູ້ເປັນເຈົ້າ

27 ທ່ານເວົ້າຕໍ່ທຸກໆຄົນວ່າ, “ຈົ່ງເບິ່ງກ້ອນຫີນນີ້ ມັນຈະເປັນພຍານໃຫ້ພວກເຮົາ ມັນໄດ້ຍິນທຸກຖ້ອຍຄຳທີ່ພຣະຜູ້
ເປັນເຈົ້າຊົງເວົ້າຕໍ່ພວກເຮົາ ເພາະສະນັ້ນ ມັນຈະເປັນພຍານບໍ່ໃຫ້ພວກທ່ານຄິດກະບົດຕໍ່ສູ້ພຣະເຈົ້າຂອງພວກ
ທ່ານ”

28 ແລ້ວໂຢຊວຍກໍໃຫ້ປະຊາຊົນເຫລົ່ານັ້ນກັບໄປສູ່ດິນທີ່ເປັນສ່ວນຂອງຕົນ

**ໂຢຊວຍແລະເອເລອາຊາເສັຽຊີວິດ**

Death of Joshua and Eleazar

29 ຫລັງຈາກນັ້ນ ໂຢຊວຍບຸດນູນ ຊຶ່ງເປັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ກໍເສັຽຊີວິດໃນເວລາທ່ານມີອາຍຸຮ້ອຍສິບ
ປີ

30 ເຂົາຝັງສົບທ່ານໄວ້ໃນທີ່ດິນຂອງທ່ານເອງທີ່ບ້ານຕິມນັທເຊຣາ ຢູ່ເທິງພູດອຍເອຟຣາອິມທາງທິດເຫນືອຂອງພູ
ກາອັສ

31 ໃນຊົ່ວຊີວິດຂອງໂຢຊວຍນັ້ນ ພວກອິສຣາເອນໄດ້ຮັບໃຊ້ພຣະຜູ້ເປັນເຈົ້າຕລອດມາ ພວກເຂົາກໍຍັງດຳເນີນໃນ
ການຮັບໃຊ້  ພຣະອົງຢູ່ຕລອດຊີວິດຂອງພວກຜູ້ນຳທຸກໆຄົນ ທີ່ຮູ້ຈັກທຸກສິ່ງກ່ຽວກັບການທີ່ພຣະຜູ້ເປັນເຈົ້າຊົງ
ກະທຳຕໍ່ພວກອິສຣາເອນ

32 ສ່ວນກະດູກຂອງໂຢເຊັບທີ່ພວກອິສຣາເອນເອົາມາຈາກປະເທດເອຢິບນັ້ນ ໃນສ່ວນທີ່ດິນຊຶ່ງຢາໂຄບຊື້ໄວ້ຈາກ
ບຸດຫລານຂອງຮາໂມຣ໌ບິດາຂອງເຊເຄມເປັນເງິນນຶ່ງຮ້ອຍແຜ່ນ ທີ່ນີ້ເປັນຕົກເປັນມໍຣະດົກຂອງເຊື້ອສາຍໂຢ
ເຊັບ

33 ແລະເອເລອາຊາບຸດຂອງອາໂຣນກໍສິ້ນຊີວິດ ແລະເຂົາຝັງສົບທ່ານໄວ້ທີ່ກິເບອາ ເມືອງຂອງພີເນຮັສບຸດຂອງ
ທ່ານ ຊຶ່ງໄດ້ມອບໄວ້ໃຫ້ເຂົາໃນເທິງພູດອຍເອຟຣາອິມ